

# ພຣະອາຈານໃຫຍ່ ມະຫາເຫວດ ມະເສໄນ

ປະທານ ສູນກາງ ອົງການພຸດທະສາສະໜາສັມພັນ ແຫ່ງ ສປປ ລາວ

ອົງທີ 7

## ສາລະບານ

**ເນື້ອເລື່ອງ** **ໜ້າທີ**

### ພາກທີ 1 ເນື້ອໃນກອງປະຊຸມ


1. ບົດກ່າວໄຂກອງປະຊຸມໃຫຍ່ ສະໄໝທີ IX ............................ 1
2. ບົດສະຫຼູບຕີລາຄາການເຄື່ອນໄຫວວຽກງານ ໄລຍະ 5 ປີ.............. 5
3. ທິດທາງແຜນການ 5 ປີ ຕໍ່ໜ້າ............................................ 24
4. ບົດລາຍງານຜົນກອງປະຊຸມຄົ້ງປະຖົມມະລືກ ສະໄໝທີ IX.......... 39
5. ມະຕິ ກອງປະຊຸມໃຫຍ່ຜູ້ແທນພຣະສົງທົ່ວປະເທດ ສະໄໝທີ IX ... 49
6. ບົດກ່າວອັດກອງປະຊຸມ ສະໄໝທີ IX ................................. 57


**ເນື້ອເລື່ອງ** **ໜ້າທີ**

### ພາກທີ 2 ພາກປະກອບຄໍາເຫັນ


7. ບົດກ່າວປະກອບຄໍາເຫັນຂອງ ທ່ານນາຍົກລັດຖະມົນຕີ
   ແຫ່ງ ສປປ ລາວ............................................................ 61
8. ບົດກ່າວປະກອບຄໍາເຫັນຂອງ ສູນກາງແນວລາວສ້າງຊາດ............. 72
9. ບົດກ່າວປະກອບຄໍາເຫັນຂອງ ຫ້ອງວ່າການສໍານັກງານ
   ນາຍົກລັດຖະມົນຕີ ........................................................ 77
10. ບົດກ່າວປະກອບຄໍາເຫັນຂອງ ກະຊວງວັດທະນະທໍາ
    ແລະ ການທ່ອງທ່ຽວ .................................................... 85
11. ກົມມະການສູນກາງອົງການພຸດທະສາສະໜາສັມພັນ ແຫ່ງ ສປປ ລາວ
    ສະໄໝທີ IX ............................................................. 93

# ພາກທີ 1
# ພາກເນື້ອໃນ

## ບົດກ່າວໄຂກອງປະຊຸມໃຫຍ່ ຜູ້ແທນພຣະສົງທົ່ວປະເທດ ສະໄໝທີ IX ຂອງອົງການພຸດທະສາສະໜາສັມພັນ ແຫ່ງ ສປປ ລາວ

ພຣະອາຈານໃຫຍ່ ມະຫາເຫວດ ມະເສໄນ

ປະທານສູນກາງອົງການພຸດທະສາສະໜາສັມພັນ ແຫ່ງ ສປປ ລາວ

ນ້ອມໄຫວ້: ພຣະຣັດຕະນະໄຕຣ ທີ່ເຄົາຣົບຢ່າງສູງສຸດ

ນະມັດສະການ: ພຣະເຖຣານຸເຖຣະ ທີ່ເຄົາຣົບຢ່າງສູງ.

ຈະເຣີນພອນ: ທ່ານ ປອ. ສິນລະວົງ ຄຸດໄພທູນ ກຳມະການກົມການເມືອງສູນກາງພັກ, ປະທານສູນກາງແນວລາວສ້າງຊາດ ທີ່ນັບຖືຢ່າງສູງ,
ບັນດາທ່ານການນຳພັກ-ລັດ ແຂກຜູ້ຊົງກຽດ ຜູ້ຊົງຄຸນວຸດທິພຸດທະສາສະນິກະຊົນ ທຸກທ່ານ ທີ່ນັບຖື ແລະ ຮັກແພງ.

ອົງຕາມ ມາດຕາ 50, 51 ຂອງທັມມະນູນສົງລາວ ວ່າດ້ວຍກອງປະຊຸມ, ສິດ ແລະ ໜ້າທີ່ ຂອງກອງປະຊຸມໃຫຍ່ ອົງການພຸດທະສາສະໜາສັມພັນ ແຫ່ງ ສປປ ລາວ.

ມື້ນີ້, ກອງປະຊຸມໃຫຍ່ຜູ້ແທນພຣະສົງທົ່ວປະເທດ ສະໄໝທີ IX ຂອງອົງການພຸດທະສາສະໜາສັມພັນ ແຫ່ງ ສປປ ລາວ ໄດ້ໄຂຂຶ້ນຢ່າງສະຫງ່າຜ່າເຜີຍ ທີ່ຫໍປະຊຸມແຫ່ງຊາດ ນະຄອນຫຼວງວຽງຈັນ ໃນທ່າມກາງບັນຍາກາດທີ່ທົ່ວພັກທົ່ວລັດ ແລະ ທົ່ວປວງຊົນລາວບັນດາເຜົ່າ ພ້ອມກັນຈັດຕັ້ງ ຜັນຂະຫຍາຍມະຕິກອງປະຊຸມໃຫຍ່ ຄັ້ງທີ XI ຂອງພັກປະຊາຊົນປະຕິວັດລາວ ຢ່າງເປັນຂະບວນຟົດຟື້ນ ແລະ ເຕັມໄປດ້ວຍຈິດເບີກບານມ່ວນຊື່ນ ຕໍ່ຜົນສຳເລັດການ ຈັດຕັ້ງປະຕິບັດມະຕິກອງປະຊຸມໃຫຍ່ຜູ້ແທນພຣະສົງທົ່ວປະເທດ ສະໄໝທີ VIII

ແລະ ຜົນສຳເລັດກອງປະຊຸມຊຸມໃຫຍ່ຜູ້ແທນພຣະສົງ ຂອງອົງການພຸດທະສາສະໜາສຳພັນລາວ ຂັ້ນແຂວງ, ນະຄອນຫຼວງ ໃນຂອບເຂດທົ່ວປະເທດ.

ໃນໂອກາດ ທີ່ມີຄວາມໝາຍຄວາມສຳຄັນນີ້, ຕາງໜ້າໃຫ້ຄະນະປະທານ ແລະ ຜູ້ແທນກອງປະຊຸມໃຫຍ່ໃນຄັ້ງນີ້, ອາຕະມາພາບຂໍສະແດງຄວາມຍິນດີ ຕ້ອນຮັບຢ່າງສູງຕໍ່ ທ່ານ  ປອ. ສິນລະວົງ ຄຸດໄພທູນ ປະທານສູນກາງແນວລາວສ້າງຊາດ, ທີ່ໄດ້ໃຫ້ກຽດມາຮ່ວມກອງປະຊຸມໃຫຍ່ຜູ້ແທນພຣະສົງທົ່ວປະເທດ ສະໄໝທີ IX ນີ້ ດ້ວຍຄວາມອົບອຸ່ນ.

ຂໍສະແດງຄວາມຂອບໃຈ, ອະນຸໂມທະນາສາທຸການ ແລະ ຕ້ອນຮັບການນຳພັກ-ລັດ, ອົງການຈັດຕັ້ງທີ່ຢູ່ອ້ອມຂ້າງ ພັກ-ລັດ, ບັນດາຜູ້ແທນພຣະສົງ, ແນວລາວສ້າງຊາດແຂວງ, ນະຄອນຫຼວງ, ເມືອງ, ທ່ານຜູ້ຊົງຄຸນວຸດທິ ແລະ ແຂກທີ່ຖືກເຊີນທັງໝົດ ທີ່ໄດ້ເສຍສະຫຼະເວລາອັນມີຄ່າ ຂອງບັນດາທ່ານມາເຂົ້າຮ່ວມ ກອງປະຊຸມໃຫຍ່ຜູ້ແທນພຣະສົງທົ່ວປະເທດໃນຄັ້ງນີ້ຢ່າງສະໜິດສະໜົມອົບອຸ່ນ ແລະ ຮັກແພງ.

ໃນວາລະໂອກາດອັນເປັນສິລິມຸງຄຸນນີ້, ອາຕະມາພາບ ຂໍຝາກຄວາມຢື້ຢາມຖາມຂ່າວ ແລະ ຝາກຄວາມຮັກແພງ ໄປຍັງບັນດາ ພຣະສົງ-ສາມະເນນ ແລະ ພຸດທະສາສະນິກະຊົນລາວບັນດາເຜົ່າ ໃນຂອບເຂດທົ່ວປະເທດ ມາໃນໂອກາດນີ້ດ້ວຍ.

ໃນທ່າມກາງບັນຍາກາດອັນສຳຄັນ ແລະ ມີຄວາມໝາຍອັນເລິກເຊິ່ງນີ້, ກອງປະຊຸມໃຫຍ່ຂອງພວກເຮົາ ຂໍສະແດງຄວາມອາໄລຫາ ພຣະອາຈານໃຫຍ່ ມະຫາບຸນມາ ສີມມາພົມ ອະດີດປະທານສູນກາງອົງການພຸດທະສາສະໜາສຳພັນ ແຫ່ງ ສປປ ລາວ ອົງທີ 6,  ທີ່ມີອຸປະການະຄຸນຕໍ່ພຣະພຸດທະສາສະໜາ ກໍຄືປະເທດຊາດບ້ານເມືອງ ໃນສະໄໝກອງປະຊຸມໃຫຍ່ ສະໄໝທີ VIII ທີ່ໄດ້ລະສັງຂານຈາກພວກເຮົາໄປແລ້ວນັ້ນ.

ເພື່ອສະແດງອອກ ເຊິ່ງຄວາມກະຕັນຍູຮູ້ບຸນຄຸນ ແລະ ສະແດງຄວາມອາໄລຮັກ ຕໍ່ບັນດາພຣະມະຫາເຖຣະເຈົ້າ ທີ່ໄດ້ລ່ວງລັບໄປແລ້ວນັ້ນ, ອາຕະມາພາບຂໍນິມົນ ແລະ ຮຽນເຊີນ ພຣະເຖຣານຸເຖຣະ, ບັນດາທ່ານຜູ້ແທນ ພຣະສົງ ແລະ ແຂກຜູ້ຊົງກຽດທັງຫຼາຍ ຈົ່ງໄດ້ພາວະນາກຳນົດຈິດແຜ່ເມດຕາອຸທິດບູຊາ

ແດ່ທ່ານຜູ້ມີອຸປະການະຄຸນຕໍ່ພຣະພຸດທະສາສະໜາ ທີ່ກ່າວມານັ້ນ, ຊາວ ວິນາທີ.

ບັນດາພຣະເຖຣານຸເຖຣະ ທີ່ເຄົາຣົບຢ່າງສູງ, ທ່ານການນຳພັກ-ລັດ, ທ່ານຜູ້ຊົງກຽດ ແລະ ທ່ານພຸດທະສາສະນິກະຊົນ ທີ່ນັບຖື ແລະ ຮັກແພງ ທັງຫຼາຍ.

ກອງປະຊຸມໃຫຍ່ຂອງພວກເຮົາເທື່ອນີ້ ຈະໄດ້ພ້ອມສະຫຼຸບຕີລາຄາຄືນ ຜົນງານ ຂອງການຈັດຕັ້ງປະຕິບັດມະຕິກອງປະຊຸມໃຫຍ່ຜູ້ແທນພຣະສົງທົ່ວ ປະເທດ ສະໄໝທີ VIII ຂອງອົງການພຸດທະສາສະໜາສັມພັນ ແຫ່ງ ສປປ ລາວ. ໃນນັ້ນ, ພວກເຮົາຈະໄດ້ພ້ອມກັນ ສັງເກດ ຕີລາຄາ ຈຸດດີ ກໍຄືຜົນງານ ທີ່ບັນລຸເປັນໝາກຜົນມາໄດ້ ພ້ອມທັງຊອກຮູ້ຈຸດອ່ອນ, ຂໍ້ຄົງຄ້າງ, ບັນດາ ສາຍເຫດ, ຂໍ້ຫຍຸ້ງຍາກ ແລະ ບົດຮຽນທີ່ຖອດຖອນໄດ້ ໃນໄລຍະ 5 ປີທີ່ຜ່ານ ມາ; ພ້ອມກັນນັ້ນ ກອງປະຊຸມໃຫຍ່ຈະໄດ້ກຳນົດ ທິດທາງແຜນການ ແລະ ແຜນພັດທະນາ ອົງການພຸດທະສາສະໜາສັມພັນ ແຫ່ງ ສປປ ລາວ ໃນໄລຍະ 5 ປີຕໍ່ໜ້າ ຄືແຕ່ປີ 2026-2030.

ກອງປະຊຸມໃຫຍ່ ຍັງຈະໄດ້ຮັບຟັງການປະກອບຄຳຄິດຄຳເຫັນ ຂອງ ບັນດາຜູ້ແທນກອງປະຊຸມໃຫຍ່ ເພື່ອພ້ອມກັນເຮັດໃຫ້ພາລະບົດບາດ, ສິດ ແລະ ໜ້າທີ່ ຂອງອົງການພຸດທະສາສະໜາສັມພັນ ແຫ່ງ ສປປ ລາວ ແລະ ບັນດາບົດຮຽນທີ່ຖອດຖອນໄດ້ ກ່ຽວກັບການເຕົ້າໂຮມ ຄວາມສາມັກຄີ ແລະ ນຳເອົາກຳລັງແຮງດັ່ງກ່າວ ເຂົ້າສູ່ຂະບວນການວຽກງານຕົວຈິງ ຂອງອົງການ ພຸດທະສາສະໜາສັມພັນ ແຫ່ງ ສປປ ລາວ ໄດ້ຮັບໝາກຜົນສຳເລັດ ເລີກເຊິ່ງ ກວ່າເກົ່າ.

ໜ້າທີ່ອັນສຳຄັນອີກປະການໜຶ່ງ ຂອງກອງປະຊຸມໃຫຍ່ ແມ່ນຈະໄດ້ ພິຈາລະນາຮັບຮອງເອົາ ມະຕິກອງປະຊຸມໃຫຍ່ ແລະ ຮັບຮອງເອົາບໍລິຫານງານ ສູນກາງອົງການພຸດທະສາສະໜາສັມພັນ ແຫ່ງ ສປປ ລາວ, ຄະນະບໍລິຫານ ງານປະຈຳການ ແລະ ຄະນະກັມມະການບໍລິຫານງານສູນກາງອົງການພຸດທະ ສາສະໜາສັມພັນ ແຫ່ງ ສປປ ລາວ ຊຸດໃໝ່ ລວມທັງ ຄະນະທີ່ປຶກສາ,

ປະທານ, ຮອງປະທານ, ຫົວໜ້າຫ້ອງການບໍລິຫານງານ ແລະ ບັນດາຫົວໜ້າກົມມາທິການ ສູນກາງອົງການພຸດທະສາສະໜາສໍາພັນ ແຫ່ງ ສປປ ລາວ.

ມື້ນີ້, ກອງປະຊຸມໃຫຍ່ ຜູ້ແທນພຣະສົງທົ່ວປະເທດ ສະໄໝທີ IX ຂອງອົງການພຸດທະສາສະໜາສໍາພັນ ແຫ່ງ ສປປ ລາວ ໄດ້ໄຂຂຶ້ນຢ່າງເປັນທາງການ ເປັນກອງປະຊຸມທີ່ມີຄວາມໝາຍສໍາຄັນທາງດ້ານການເມືອງ, ເປັນການປະຕິບັດຫຼັກການນໍາພາ ແລະການຈັດຕັ້ງຂອງພັກ, ແນໃສ່ປັບປຸງແນວຄິດ, ການຈັດຕັ້ງ ແລະ ແບບແຜນວິທີນໍາພາ; ກອງປະຊຸມໄດ້ໄຂຂຶ້ນ ຢ່າງສະຫງ່າຜ່າເຜີຍ, ໃນທ່າມກາງບັນຍາກາດທີ່ທົ່ວພັກ, ທົ່ວລັດ, ທົ່ວກໍາລັງປະກອບອາວຸດ ແລະ ທົ່ວປວງຊົນລາວບັນດາເຜົ່າ ພວມຈັດຕັ້ງສະເຫຼີມສະຫຼອງ, ອອກແຮງສ້າງຜົນງານຂໍ່ານັບຮັບຕ້ອນວັນສໍາຄັນຕ່າງໆຂອງພັກ, ຂອງຊາດທີ່ຫາກໍຜ່ານພົ້ນໄປ ເວົ້າລວມ; ເວົ້າສະເພາະແມ່ນອົງການພຸດທະສາສະໜາສໍາພັນ ແຫ່ງ ສປປ ລາວ ແຕ່ລະຂັ້ນ ພວມສູ້ຊົນຜັນຂະຫຍາຍມະຕິກອງປະຊຸມໃຫຍ່ຂັ້ນຂອງຕົນ ໃຫ້ຕິດພັນກັບບັນດາມະຕິກອງປະຊຸມໃຫຍ່, ແຜນພັດທະນາເສດຖະກິດ-ສັງຄົມຂອງລັດ ທັງສຸມໃສ່ການ ສືບຕໍ່ຈັດຕັ້ງປະຕິບັດສອງວາລະແຫ່ງຊາດ.

ດັ່ງນັ້ນ, ອາຕະມາພາບ ຈຶ່ງຮຽກຮ້ອງມາຍັງຜູ້ແທນພຣະສົງທົ່ວປະເທດ ຈົ່ງພ້ອມພຽງກັນເຊີດຊູຄວາມຮັບຜິດຊອບສູງ ແລະ ເປັນເຈົ້າການເສີມຂະຫຍາຍສະຕິປັນຍາ, ເຫື່ອແຮງ, ຍົກສູງນໍ້າໃຈຮັບຜິດຊອບໃນການຄົ້ນຄວ້າປະກອບຄໍາຄິດຄໍາເຫັນ ແລະ ປະຕິບັດໂມງເວລາຢ່າງເຄັ່ງຄັດ ເພື່ອເຮັດໃຫ້ກອງປະຊຸມໃຫຍ່ພຣະສົງທົ່ວປະເທດ ສະໄໝທີ IX ນີ້ ໄດ້ຮັບຜົນສໍາເລັດຕາມຄວາມຄາດໝາຍທີ່ວາງໄວ້ທຸກປະການ.

ໃນທ່າມກາງບັນຍາກາດອັນສະຫງ່າຣາສີນີ້, ອາຕະມາພາບ ຂໍປະກາດໄຂກອງປະຊຸມໃຫຍ່ ຜູ້ແທນພຣະສົງທົ່ວປະເທດ ສະໄໝທີ IX ຂອງອົງການພຸດທະສາສະໜາສໍາພັນ ແຫ່ງ ສປປ ລາວ ຢ່າງເປັນທາງການ ນັບແຕ່ວິນາທີນີ້ເປັນຕົ້ນໄປ.

**ນະມັດສະການ/ຈະເຣີນພອນ ຂອບໃຈ**

**ບົດສະຫຼຸບ**

**ຕີລາຄາການເຄື່ອນໄຫວວຽກງານ**

**ຂອງ ອົງການພຸດທະສາສະໜາສັມພັນ ແຫ່ງ ສປປ ລາວ ສະໄໝທີ VIII**

**ຕໍ່ກອງປະຊຸມໃຫຍ່ຜູ້ແທນພຣະສົງທົ່ວປະເທດ ສະໄໝທີ IX**

ພຣະອາຈານ ບຸນສ່ວນ ພັນທະວົງ

ຮອງປະທານ ສູນກາງອົງການພຸດທະສາສະໜາສັມພັນ ແຫ່ງ ສປປ ລາວ

- ຂໍນ້ອມໄຫວ້ ພຣະຣັດຕະນະໄຕຣ ທີ່ເຄົາລົບຢ່າງສູງສຸດ
- ນ້ອມນະມັດສະການ/ຈະເລີນພອນ: ຄະນະປະທານກອງປະຊຸມທີ່ເຄົາລົບ ແລະ ນັບຖືຢ່າງສູງ
- ພຣະເຖຣານຸເຖຣະ ທີ່ເຄົາລົບ.
- ບັນດາທ່ານການນຳພັກ-ລັດ ແຂກຜູ້ຊົງກຽດ ຜູ້ຊົງຄຸນວຸດທິ ພຸດທະສາສະນິກະຊົນທຸກທ່ານ ທີ່ນັບຖື ແລະ ຮັກແພງ.

## I. ຈຸດພິເສດ, ສະພາບລວມ ແລະ ມູນເຊື້ອ ຂອງອົງການພຸດທະສາສະໜາສັມພັນ ແຫ່ງ ສປປ ລາວ

ໃນໄລຍະເວລາ 5 ປີທີ່ຜ່ານມາ ສະພາບການພາກພື້ນ ແລະ ສາກົນໄດ້ມີການຜັນແປໄປຢ່າງສະຫຼັບສັບຊ້ອນ ເຊິ່ງມີທັງກາລະໂອກາດ ແລະ ສິ່ງທ້າທາຍ ເປັນຕົ້ນບັນຫາເສດຖະກິດການເງິນ, ດັ່ງທີ່ສູນກາງພັກ, ລັດຖະບານໄດ້ຕີລາຄາເອົາໄວ້, ຊຶ່ງໄດ້ສົ່ງຜົນກະທົບບໍ່ໜ້ອຍຕໍ່ ສປປ ລາວ ເວົ້າລວມ, ເວົ້າສະເພາະຕໍ່ການເຄື່ອນໄຫວຂອງອົງການພຸດທະສາສະໜາສັມພັນ ແຫ່ງ ສປປ ລາວ.

ອົງການພຸດທະສາສະໜາສັມພັນ ແຫ່ງ ສປປ ລາວ ແມ່ນອົງການບໍລິຫານສູງສຸດໃນລະບົບການຈັດຕັ້ງ ພຣະພຸດທະສາສະໜາຢູ່ ສປປ ລາວ ມີພາຣະບົດບາດໃນການຄຸ້ມຄອງບໍລິຫານ, ການປົກຄອງສົງ, ການສຶກສາສົງ, ການເຜີຍແຜ່ສິລະທັມ ແລະ ປະຕິບັດກັມມະຖານ, ສາທາຣະນູປະການ, ການຕ່າງປະເທດ, ການຈັດຕັ້ງການປະຕິບັດພຣະທັມມະວິໄນ ລວມທັງການເຕົ້າໂຮມ

ຄວາມສາມັກຄີພຸດທະສາສະນິກະຊົນ ແລະ ປະຊາຊົນລາວບັນດາເຜົ່າ ແລະ ການພົວພັນສາກົນກ່ຽວກັບສາສະໜາ.

ດັ່ງທີ່ໄດ້ຮັບຮູ້ນຳກັນແລ້ວວ່າ ພຣະພຸດທະສາສະໜາໄດ້ເຜີຍແຜ່ເຂົ້າມາສູ່ຊົນຊາດລາວ ຕັ້ງແຕ່ສະໄໝອານາຈັກສີໂຄດຕະບູນ ເປັນຕົ້ນມາ. ມາໃນສະໄໝ ເຈົ້າຟ້າງຸ່ມມະຫາຣາດ ປີ ພ.ສ. 1899 (ຄ.ສ. 1356), ເພິ່ນໄດ້ນຳເອົາພຣະພຸດທະສາສະໜາສາຍເຖຣະວາດ ເຂົ້າມາເຜີຍແຜ່ໃນອານາຈັກລ້ານຊ້າງ.

ໃນໄລຍະນີ້ ພຣະພຸດທະສາສະໜາ ໄດ້ປັກຫຼັກຮາກຖານລົງໃນອານາຈັກລາວລ້ານຊ້າງຢ່າງໝັ້ນຄົງ, ມີການເຕີບໃຫຍ່ຂະຫຍາຍຕົວ, ມີຜູ້ນັບຖື, ມີຜູ້ເຂົ້າມາບວດເປັນພຣະພິກຂຸ-ສາມະເນນ ນັບມື້ນັບຫຼາຍຂຶ້ນ, ພຣະສົງສາມະເນນ ທີ່ເຂົ້າມາບວດໃນພຣະພຸດທະສາສະໜາແລ້ວ ກໍໄດ້ເຮັດໜ້າທີ່ວຽກງານໃນການເຜີຍແຜ່ຫຼັກສິລະທັມຂອງຕົນຕໍ່ຜູ້ນັບຖື ທັງສອງດ້ານ ຄື: ດ້ານຄັນຖະທຸຣະ ແລະ ດ້ານວິປັດສະນາທຸຣະ ອັນເປັນແນວທາງໃນການສຶກສາ, ອົບຮົມ, ສັ່ງສອນ ໃຫ້ຮູ້ ແລະ ເຂົ້າໃຈ, ຊຶ່ງກາຍເປັນຄັມພີດີກາ ຕະຫຼອດຮີດຄອງ, ປະເພນີ ແລະ ວັດທະນະທັມ, ພ້ອມນັ້ນກໍໄດ້ຈັດຕັ້ງໃຫ້ມີໂຮງຮຽນສອນສິລະທັມ, ສະໜັບສະໜູນ ໃຫ້ແກ່ພຣະສົງ-ສາມະເນນ ແລະ ພໍ່ແມ່ປະຊາຊົນລາວບັນດາເຜົ່າ ເພື່ອເຮັດໃຫ້ເຂົາເຈົ້າໄດ້ຮຽນຮູ້ ແລະ ປະຕິບັດສິລະທັມກັມມະຖານ ໃຫ້ເຂົາເຈົ້າເປັນຄົນດີ, ມີສິລະທັມ, ເປັນສາສະນິກະຊົນທີ່ດີ, ເປັນພົນລະເມືອງທີ່ດີຂອງຊາດ ປະກອບສ່ວນໃນການສ້າງສາພັດທະນາປະເທດຊາດກ້າວຂຶ້ນສູ່ຄວາມຈະເລີນຮຸ່ງເຮືອງ.

ໃນສະໄໝຕໍ່ສູ້ກູ້ຊາດ, ບັນດາພຣະສົງລາວ ໄດ້ເສີມຂະຫຍາຍບົດບາດ ແລະ ມູນເຊື້ອອັນດີງາມຂອງຕົນ ຕໍ່ປະເທດຊາດ ຄື: ເປັນຜູ້ນຳພາທາງດ້ານສິລະທັມ ແລະ ແນວຄິດຈິດໃຈ ເພື່ອປະກອບສ່ວນໃນການ ປຸກລະດົມຂົນຂວາຍ ແລະ ໃຫ້ການອົບຮົມສັ່ງສອນອອກຕົນຍາດໂຍມ ໃຫ້ມີນ້ຳໃຈຮັກເຊື້ອແພງຊາດ ໂດຍສະເພາະພາຍໃຕ້ການນຳພາຂອງພັກປະຊາຊົນປະຕິວັດລາວ, ພຣະສົງລາວ ຍິ່ງໄດ້ເສີມຂະຫຍາຍຄວາມຕື່ນຕົວຫ້າວຫັນ, ອົງອາດ, ເສຍ

ສະຫຼະ, ນຳພາ ແລະ ເປັນຫຼັກສຳຄັນ ໃນການເຕົ້າໂຮມ ພາຍໃນພຣະສົງ ໃຫ້ມີຄວາມສາມັກຄີເປັນນ້ຳໜຶ່ງໃຈດຽວກັນ ແລະ ມີຄວາມໜັກແໜ້ນ ໃນຄວາມເປັນພຣະສົງລາວ.

ພຣະສົງລາວ ນອກຈາກອຸທິດຕົນເພື່ອຊາດ ແລະ ພຣະພຸດທະສາສະໜາແລ້ວ ຍັງເອົາໃຈໃສ່ໃນການ ປະຕິບັດໜ້າທີ່ຂອງຕົນ ຕໍ່ຫຼັກພຣະທັມມະວິໄນ, ທັມມະນູນສົງລາວ, ກົດໝາຍ ແລະ ລະບຽບການຢ່າງເຄັ່ງຄັດ. ພ້ອມດຽວກັນນັ້ນ ກໍເຮັດໜ້າທີ່ໃນການເຜີຍແຜ່ຫຼັກພຣະທັມຄຳສອນ ໃຫ້ອອກຕົນຍາດໂຍມ ປະພຶດຕົນເປັນພົນລະເມືອງທີ່ດີ, ມີຄຸນນະທັມ, ຈະລິຍະທັມ, ຄຸນສົມບັດສິລທັມປະຕິວັດ, ມີຈິດໃຈເມດຕາກະຣຸນາ ແລະ ເອື້ອເຟື້ອເພື່ອແຜ່, ຊ່ວຍເຫຼືອເກື້ອກູນເຊິ່ງກັນແລະກັນ ໃນການແກ້ໄຂຄວາມທຸກຍາກ, ຂາດເຂີນ, ຄວາມເຈັບປ່ວຍ ແລະ ຄວາມດ້ອຍການສຶກສາ.

ຄຽງຄູ່ກັບສັດທາຄວາມເຫຼື້ອມໃສ ແລະ ຄວາມເຂົ້າໃຈໃນຫຼັກສິລະທັມ ກໍຍັງໄດ້ນຳພາສ້າງສາ ແລະ ບູຣະນະປະຕິສັງຂອນ ວັດວາອາຣາມ, ພຣະທາດເຈດີ, ພຣະພຸດທະຮູບ ແລະ ປູຊະນີຍະສະຖານອັນສຳຄັນ ສັກສິດໃຫ້ສວຍສົດງົດງາມຂຶ້ນມາ ຄົງໄວ້ເຊິ່ງສິລະປະວັດທະນະທັມ ອັນໄດ້ເຮັດໃຫ້ວັດວາອາຣາມ ກາຍເປັນ ທີ່ເພິ່ງທາງດ້ານຈິດໃຈ ຂອງພຸດທະສາສະນິກະຊົນລາວບັນດາເຜົ່າທັງເປັນບ່ອນເຜີຍແຜ່ສິລທັມ ກໍຄືແນວທາງນະໂຍບາຍຂອງພັກ ແລະ ລັດຖະບານ ທີ່ວາງອອກແຕ່ລະຍຸກແຕ່ລະສະໄໝ.

ດ້ວຍຄວາມເສຍສະຫຼະ ແລະ ຄວາມເອົາໃຈໃສ່ ຂອງບັນດາພຣະສົງລາວ ຕໍ່ໜ້າທີ່ຂອງຕົນດັ່ງກ່າວນັ້ນ ຈຶ່ງເຮັດໃຫ້ຮີດຄອງ, ປະເພນີ, ຂະນົບທັມນຽມ, ພາສາສາດ, ສິລະປະ, ວັນນະຄະດີ, ການນຸ່ງຖື ແລະ ລະບຽບແບບແຜນການດຳລົງຊີວິດ ຂອງປະຊາຊົນລາວບັນດາເຜົ່າ ໄດ້ມີເອກະລັກຈົບງາມເປັນຂອງຊາດຕົນ. ພ້ອມກັນນັ້ນ, ຍັງໄດ້ປົກປັກຮັກສາ ແລະ ສ້າງສາພັດທະນາມູນມໍຣະດົກຂອງຊາດ ແລະ ພຣະພຸດທະສາສະໜາ ໃຫ້ຈະເລີນຮຸ່ງເຮືອງ, ກ້າວໜ້າ, ໝັ້ນຄົງຖາວອນ ຢູ່ຄູ່ກັບຊາດລາວ, ຄົນລາວ ແລະ ສົ່ງຜົນໄປສູ່ຄົນລາວຮຸ່ນຕໍ່ໄປ ໄດ້ຮັບການສືບທອດ.

**II. ຕີລາຄາຜົນຂອງການຈັດຕັ້ງປະຕິບັດມະຕິກອງປະຊຸມໃຫຍ່ຜູ້ແທນພຣະສົງທົ່ວປະເທດ ສະໄໝທີ VIII**

ໃນໄລຍະ 5 ປີທີ່ຜ່ານມານີ້, ອົງການພຸດທະສາສະໜາສັມພັນ ແຫ່ງ ສປປ ລາວ ໄດ້ເຄື່ອນໄຫວວຽກງານຕາມພາຣະບົດບາດ, ສິດ ແລະ ໜ້າທີ່ຂອງຕົນ ແລະ ຕາມທິດທາງແຜນການທີ່ກອງປະຊຸມໃຫຍ່ ສະໄໝທີ VIII ໄດ້ວາງໄວ້ ຊຶ່ງສາມາດປະຕິບັດໄດ້ຫຼາຍດ້ານ ດັ່ງນີ້:

**1. ວຽກງານເຕົ້າໂຮມຄວາມສາມັກຄີ ພາຍໃນພຣະສົງ-ສາມະເນນ**

ອົງການພຸດທະສາສະໜາສັມພັນ ແຫ່ງ ສປປ ລາວ ໃນຂັ້ນຕ່າງໆ ເປັນອົງການທີ່ສຳຄັນ ໃນການບໍລິຫານວຽກງານ ຂອງຄະນະສົງລາວ, ມີພາຣະບົດບາດ, ສິດ ແລະ ໜ້າທີ່ ໃນການເຕົ້າໂຮມຄວາມສາມັກຄີ ພາຍໃນ ພຣະສົງ-ສາມະເນນ, ພຸດທະສາສະນິກະຊົນລາວບັນດາເຜົ່າ. ພວກເຮົາສຸດທີ່ມີຄວາມເອກອ້າງທະນົງໃຈທີ່ເຫັນວ່າພຣະສົງ-ສາມະເນນ, ພໍ່ແມ່ປະຊາຊົນລາວບັນດາເຜົ່າ, ຊັ້ນຄົນ, ທຸກເພດ, ທຸກໄວ ໃນຂອບເຂດທົ່ວປະເທດ ໄດ້ເປັນເຈົ້າການສົ່ງເສີມ, ຂະຫຍາຍມູນເຊື້ອອັນດີງາມຂອງຊາດ ແລະ ພຣະພຸດທະສາສະໜາ ກ່ອນອື່ນໝົດແມ່ນມູນເຊື້ອຄວາມສາມັກຄີ, ຮັກເຊື້ອແພງຊາດ ໄດ້ຢ່າງໝັ້ນຄົງ ແລະ ເປັນປຶກແຜ່ນແໜ້ນໜາ.

ອົງການພຸດທະສາສະໜາສັມພັນ ແຫ່ງ ສປປ ລາວ ໃນແຕ່ລະຂັ້ນໄດ້ເອົາໃຈໃສ່ຢ່າງໃກ້ຊິດຕິດແທດ, ອົບຮົມ, ເທສະໜາສັ່ງສອນ ພຣະສົງ-ສາມະເນນໃຫ້ຕັ້ງຕົນຢູ່ໃນຫຼັກພຣະທັມມະວິໄນ, ຫຼັກສິລະທັມ ແລະ ໃຫ້ເຄົາຣົບນັບຖືລະບຽບການ, ກົດໝາຍຂອງບ້ານເມືອງຢ່າງເຄັ່ງຄັດ, ກ່ອນອື່ນແມ່ນແນໃສ່ເຮັດໃຫ້ ພຣະສົງ-ສາມະເນນ ດຳຣົງຕົນຢູ່ໃນສະມະນະວິໄສ ໂດຍຍຶດຫຼັກພຣະທັມມະວິໄນໃຫ້ເປັນຍອດທຸງໄຊ, ທັມມະນູນສົງລາວ ເປັນຫຼັກໃນການຈັດຕັ້ງ

ປະຕິບັດ, ຕິດພັນກັບນ້ຳໃຈຮັກຊາດ, ຮັກລະບອບໃໝ່, ສ້າງຄວາມສາມັກຄີ ຊ່ວຍເຫຼືອເກື້ອກູນເຊິ່ງກັນແລະກັນ, ຈັດຕັ້ງ ແລະ ເຂົ້າຮ່ວມການເຜີຍແຜ່ນະໂຍບາຍຂອງພັກ, ກົດໝາຍ ແລະ ລະບຽບການຂອງລັດ ກໍຄືທິດທາງໜ້າທີ່ຂອງອົງການພຸດທະສາສະໜາສັມພັນ ແຫ່ງ ສປປ ລາວ ໃນໄລຍະຖ່ວງທ່າໃໝ່ ພ້ອມດຽວກັນນັ້ນກໍຍົກບົດບາດ ແລະ ເລົ່າຄືນມູນເຊື້ອອັນສະຫງ່າຣາສີຂອງອົງການພຸດທະສາສະໜາ ເພື່ອໃຫ້ພຣະສົງ-ສາມະເນນລາວ ຮຸ່ນໃໝ່ ໄດ້ຮູ້ຈັກສືບທອດມູນເຊື້ອ ອັນດີຂອງຊາດ ແລະ ພຣະພຸດທະສາສະໜາ.

## 2. ວຽກງານຫ້ອງການບໍລິຫານງານ

ຫ້ອງການບໍລິຫານງານ ອົງການພຸດທະສາສະໜາສັມພັນ ແຫ່ງ ສປປ ລາວ ໃນຂັ້ນຕ່າງໆ ໄດ້ເປັນເສນາທິການໃຫ້ແກ່ ຄະນະປະທານອົງການພຸດທະສາສະໜາສັມພັນ ແຫ່ງ ສປປ ລາວ ແຕ່ລະຂັ້ນ, ເປັນໃຈກາງໃນການພົວພັນລະຫວ່າງ ອົງການຈັດຕັ້ງພຣະສົງກັບກະຊວງ, ອົງການທຽບເທົ່າກະຊວງ, ອົງການປົກຄອງທ້ອງຖິ່ນ, ອົງການແນວລາວສ້າງຊາດ, ການຈັດຕັ້ງ ແລະ ພາກສ່ວນທີ່ກ່ຽວຂ້ອງຕ່າງໆ ລວມທັງການພົວພັນ ລະຫວ່າງ ອົງການຈັດຕັ້ງພຣະສົງ ທັງພາຍໃນ ແລະ ຕ່າງປະເທດ ຕາມຫຼັກພຣະທັມມະວິໄນ, ແນວທາງນະໂຍບາຍ, ກົດໝາຍ ແລະ ລະບຽບການ ທີ່ວາງອອກໄດ້ເປັນປົກກະຕິ ແລະ ຕໍ່ເນື່ອງ.

ໃນໄລຍະ 5 ປີທີ່ຜ່ານມາ ຄະນະບໍລິຫານງານອົງການພຸດທະສາສະໜາສັມພັນ ແຫ່ງ ສປປ ລາວ ໄດ້ ເຂົ້າຮ່ວມກອງປະຊຸມຕ່າງໆ ໃນຂັ້ນສູນກາງ ແລະ ທ້ອງຖິ່ນ 220 ຄັ້ງ, ລົງຊຸກຍູ້ການເຄື່ອນໄຫວວຽກງານໃຫ້ແກ່ອົງການພຸດທະສາສະໜາສັມພັນລາວ ຂັ້ນທ້ອງຖິ່ນ 120 ຄັ້ງ; ມີເອກະສານຂາອອກ-ຂາເຂົ້າ ຈຳນວນ ສອງແສນຫ້າໝື່ນເຈັດຮ້ອຍຫ້າສິບ ສະບັບ; ຈັດກອງປະຊຸມສາມັນ-ວິສາມັນ ຂອງຄະນະບໍລິຫານງານປະຈຳການ ປະຈຳເດືອນ; ຈັດກອງ

ປະຊຸມສາມັນປະຈຳປີ ຄົບຄະນະກຳມະການບໍລິຫານງານ ອົງການພຸດທະສາສະໜາສຳພັນ ແຫ່ງ ສປປ ລາວ ໃນຂັ້ນຂອງຕົນ, ຊຸກຍູ້ການສ້າງຕັ້ງອົງການພຸດທະສາສະໜາສຳພັນລາວຂັ້ນເມືອງ ເພີ່ມຂຶ້ນຈາກເດີມ 128 ເມືອງ ມາເປັນ 130 ເມືອງ, 3 ນະຄອນ ໃນຂອບເຂດທົ່ວປະເທດ.

ຊຸກຍູ້ການສ້າງສຳນັກງານອົງການພຸດທະສາສະໜາສຳພັນລາວຂັ້ນແຂວງຈາກເດີມທີ່ມີຢູ່ແລ້ວ ຈຳນວນ 8 ແຂວງ, ມາເປັນ 10 ແຂວງ, ສຳເລັດວຽກງານໂຄງການກໍ່ສ້າງອາຄານສຳນັກງານປະທານ ສູນກາງອົງການພຸດທະສາສະໜາສຳພັນ ແຫ່ງ ສປປ ລາວ ທີ່ວັດພຣະທາດຫຼວງເໜືອ, ເມືອງໄຊເສດຖາ ນະຄອນຫຼວງວຽງຈັນ 1 ຫຼັງມູນຄ່າ 24,807,355,168. ສຳເລັດການຈັດພິມພຣະໄຕປິດົກສະບັບພາສາປາລີ ແລະສະບັບພາສາລາວ ໂດຍມີການຈັດພິມທັງໝົດ 5,000 ຊຸດ ແບ່ງເປັນສະບັບ ພາສາປາລີ 1,250 ຊຸດ ແລະ ສະບັບພາສາລາວ 3,750 ຊຸດ, ຈັດພິມ ແລະ ແຈກຢາຍໄປແລ້ວຈຳນວນ 850 ຊຸດ, ເປັນພາສາລາວ 700 ຊຸດ ແລະ ອັກສອນລາວປາລີ 150 ຊຸດ (1 ຊຸດ ມີ 45 ຫົວ).

### 3. ວຽກງານກຳມາທິການປົກຄອງສົງ

ການຈັດຕັ້ງຕົວຈິງ ຂອງຄະນະບໍລິຫານງານອົງການພຸດທະສາສະໜາສຳພັນ ແຫ່ງ ສປປ ລາວ ຂັ້ນຕ່າງໆໄດ້ເອົາໃຈໃສ່ໃນການປັບປຸງກໍ່ສ້າງການປົກຄອງສົງ ແລະ ແບບແຜນວິທີເຮັດວຽກຂອງຕົນໄດ້ດີຢ່າງມີປະສິດທິພາບ ແລະ ປະສິດທິຜົນ, ການບໍລິຫານ, ການຄຸ້ມຄອງ ອົງການພຸດທະສາສະໜາສຳພັນ ແຫ່ງ ສປປ ລາວ ຕັ້ງແຕ່ຂັ້ນສູນກາງ ຈົນເຖິງຂັ້ນທ້ອງຖິ່ນ ໄດ້ຮັບການປັບປຸງດີຂຶ້ນໂດຍລຳດັບ.

ອົງການພຸດທະສາສະໜາສຳພັນ ແຫ່ງ ສປປ ລາວ ມີຄະນະບໍລິຫານງານໃນຂອບເຂດທົ່ວປະເທດ ທັງໝົດມີ 6,250 ອົງ, ຄະນະບໍລິຫານງານສູນ

ກາງອົງການພຸດທະສາສະໜາສັມພັນ ແຫ່ງ ສປປ ລາວ 79  ອົງ, ຂັ້ນແຂວງ, ນະຄອນຫຼວງ 540 ອົງ, ຂັ້ນເມືອງ, ນະຄອນ 1,099 ອົງ ແລະ ຂັ້ນເຈົ້າອະທິການວັດ 4,532 ອົງ;

ພຣະສົງ-ສາມະເນນໃນຂອບເຂດທົ່ວປະເທດ ທັງໝົດ 26,986 ອົງ, ມີພຣະພິກຂຸ 15,520 ອົງ; ສາມະເນນ 11,466 ອົງ; ພຣະສົງບວດໃໝ່ 1,532 ອົງ, ສາມະເນນບວດໃໝ່ 5,421 ອົງ, ມີພໍ່ຂາວ 210 ຄົນ, ແມ່ຂາວ 520 ຄົນ, ສັງກະລີວັດ 370 ຄົນ; ພຣະພິກຂຸລາສິກຂາ 561 ອົງ, ສາມະເນນລາສິກຂາ 1,734 ອົງ.

ພຣະພິກຂຸສົງມໍຣະນະພາບ 58 ອົງ, ສາມະເນນມໍຣະນະພາບ 10 ອົງ.

ວັດ-ສຳນັກສົງ-ສູນປະຕິບັດທັມ ທັງໝົດໃນຂອບເຂດທົ່ວປະເທດ ຈຳນວນ 6,280 ແຫ່ງ; ວັດທີ່ມີພຣະສົງອາໄສຢູ່ປະຈຳ 5,680 ວັດ; ວັດທີ່ຂາດພຣະສົງຢູ່ຊົ່ວຄາວ 600 ວັດ.

ຄະນະກັມມາທິການປົກຄອງສົງ ໄດ້ເອົາໃຈໃສ່ ໃນການຈັດຕັ້ງປະຕິບັດເຜີຍແຜ່ວຽກງານຂໍ້ກຳນົດ, ກົດລະບຽບ, ທັມມະນູນສົງລາວ ສະບັບປັບປຸງໃໝ່ ປີພຣະພຸດທະສັງກາດ 2565 ຮ່ວມກັບຫ້ອງການບໍລິຫານງານ ແລະ ກັມມາທິການທີ່ກ່ຽວຂ້ອງໃຫ້ແກ່ ຄະນະບໍລິຫານງານອົງການພຸດທະສາສະໜາສັມພັນ ແຫ່ງ ສປປ ລາວ ຂັ້ນທ້ອງຖິ່ນຕ່າງໆ ໄດ້ຮັບຮູ້ເຂົ້າໃຈຢ່າງແຈ່ມແຈ້ງ ພ້ອມທັງໄດ້ຈັດມອບ-ຮັບ ປຶ້ມສຳມະໂນ, ປຶ້ມສຸດທິ ຂອງພຣະສົງ-ສາມະເນນ, ພໍ່ຂາວ-ແມ່ຂາວ; ເຮັດກາປະທັບໃຫ້ບັນດາອົງການພຸດທະສາສະໜາສັມພັນ ແຫ່ງ ສປປ ລາວ ຂັ້ນທ້ອງຖິ່ນ ແລະ ເກັບກຳສະຖິຕິ ພຣະສົງໃນທົ່ວປະເທດ.

ອົງການພຸດທະສາສະໜາສັມພັນ ແຫ່ງ ສປປ ລາວ ໃນແຕ່ລະຂັ້ນ ໂດຍສະເພາະກັມມາທິການປົກຄອງສົງ ໄດ້ເຮັດໜ້າທີ່ເຕົ້າໂຮມຄວາມສາມັກ

ຄື, ເກັບກຳສະຖິຕິຈຳນວນພຣະສົງ-ສາມະເນນ, ພໍ່ຂາວ-ແມ່ຂາວ, ແກ້ໄຂບັນຫາອະທິກອນ ແລະ ບັນຫາຫຍໍ້ທໍ້ຕ່າງໆ ໃນບັນດາ ພຣະສົງ-ສາມະເນນ.

### 4. ວຽກງານກັມມາທິການສຶກສາສົງ

ອົງການພຸດທະສາສະໜາສັມພັນ ແຫ່ງ ສປປ ລາວ ໄດ້ເອົາໃຈໃສ່, ທຸ່ມເທເຫື່ອແຮງ, ສະຕິປັນຍາ ແລະ ທຶນຮອນ ສຸມໃສ່ວຽກງານການສຶກສາສົງຢ່າງຕັ້ງໜ້າ ໂດຍປະສານສົມທົບກັບກະຊວງສຶກສາທິການ ແລະ ກິລາ ເພື່ອຍົກລະດັບ ແລະ ຂະຫຍາຍຕາໜ່າງການສຶກສາສົງໄປສູ່ແຂວງ, ນະຄອນຫຼວງ, ເມືອງ, ນະຄອນ ໃຫ້ທົ່ວເຖິງ ທັງນີ້ກໍເພື່ອຕອບສະໜອງນະໂຍບາຍດ້ານການສຶກສາຂອງພັກ-ລັດ ທີ່ວາງອອກໃຫ້ໄດ້ຮັບຜົນດ້ວຍດີ.

ກັມມາທິການສຶກສາສົງສູນກາງ, ຫ້ອງການກັມມາທິການສຶກສາສົງສູນກາງ ແລະ ກະຊວງສຶກສາທິການ ແລະ ກິລາ ມີໜ້າທີ່ໃນການສ້າງຊັບພະຍາກອນມະນຸດ.

ສາຍສາມັນສຶກສາສົງ ແມ່ນໄດ້ຈັດການຮຽນການສອນຕາມຫຼັກສູດແຫ່ງຊາດ ໃນນັ້ນປະກອບມີວິຊາສາມັນທາງໂລກ ຕາມກະຊວງສຶກສາທິການ ແລະ ກິລາ ກຳນົດໄວ້ ແລະ ວິຊາທາງພຸດທະສາສະໜາ ຕາມກັມມາທິການສຶກສາສົງສູນກາງ ກຳນົດໄວ້.

ດ້ານສະຖິຕິ ໂຮງຮຽນສົງໃນຂອບເຂດທົ່ວປະເທດ ມີ 66 ແຫ່ງ, ໃນນັ້ນມີໂຮງຮຽນປະຖົມສຶກສາສົງ 7 ແຫ່ງ, ມັດທະຍົມສຶກສາສົງຕອນຕົ້ນ 41 ແຫ່ງ, ມັດທະຍົມສຶກສາສົງຕອນປາຍ 4 ແຫ່ງ ແລະ ມັດທະຍົມສົມບູນສຶກສາສົງ 12 ແຫ່ງ, ມີວິທະຍາໄລຄູສົງ 2 ແຫ່ງ ຄື: ວິທະຍາໄລຄູສົງອົງຕື້ ນະຄອນຫຼວງວຽງຈັນ ແລະ ວິທະຍາໄລຄູສົງຈຳປາສັກ ແຂວງຈຳປາສັກ.

ມີຄູອາຈານສອນ 817 ອົງ/ທ່ານ,ໃນນັ້ນມີບັນພະຊິດຄູ ແລະ ບໍລິຫານ 403 ອົງ ແລະ ຄູທີ່ເປັນຄະລືຫັດ 414 ທ່ານ. ສົກຮຽນ 2024-

2025 ມີນັກຮຽນສາມັນສິງ ແລະ ນັກສຶກສາສົງ ທັງໝົດ 7,617 ອົງ, ນັກສຶກສາສົງລາວ ທີ່ກຳລັງສຶກສາຢູ່ຕ່າງປະເທດ ຈຳນວນ 263 ອົງ, ຊຶ່ງໄດ້ສຶກສາທັງສາຍປະລິຍັດຕິທັມ ແລະ ສາຍສາມັນສຶກສາໄປພ້ອມໆ ກັນຕັ້ງແຕ່ລະດັບປະລິນຍາຕີ ຈົນ ເຖິງລະດັບປະລິນຍາເອກ.

ການສຶກສາຊັ້ນນັກທັມ ຢູ່ໃນນະຄອນຫຼວງວຽງຈັນ ແມ່ນການຈັດການຮຽນການສອນ ວິຊາພຸດທະສາສະໜາເປັນຫຼັກ ນັບແຕ່ ສົກຮຽນ 2024-2025 ຊຶ່ງໄດ້ຈັດຕັ້ງການຮຽນການສອນຊັ້ນນັກທັມຕຣີ ປະກອບມີ 6 ສູນຮຽນ, ມີນັກຮຽນ 174 ອົງ ແລະ ສົກຮຽນ 2025-2026 ປະກອບມີ ຊັ້ນນັກທັມຕຣີ 7 ສູນຮຽນ, ມີນັກຮຽຣ 189 ອົງ, ຊັ້ນນັກທັມໂທ 6 ສູນຮຽນ ມີນັກຮຽນ 102 ອົງ. (ສ່ວນຢູ່ແຂວງອື່ນ ຍັງບໍ່ທັນໄດ້ຈັດຕັ້ງປະຕິບັດການຮຽນການສອນຊັ້ນນັກທັມ)

## 5. ວຽກງານກັມມາທິການເຜີຍແຜ່ສິລະທັມ ແລະ ປະຕິບັດກັມມະຖານ

ຄະນະກັມມາທິການເຜີຍແຜ່ສິລະທັມ ແລະປະຕິບັດກັມມະຖານ ແຕ່ລະຂັ້ນ ໃນຂອບເຂດທົ່ວປະເທດ ໄດ້ເອົາໃຈໃສ່ເຄື່ອນໄຫວວຽກງານຂອງຕົນຕໍ່ການເຜີຍແຜ່ສິລະທັມ ທາງພຣະພຸດທະສາສະໜາ ໃນຫຼາຍຮູບແບບ ເຊັ່ນ: ໂທຣະພາບ, ວິທະຍຸກະຈາຍສຽງ, ວາຣະສານ, ໜັງສືພິມ, ແລະ ອື່ນໆ.

ອົງການພຸດທະສາສະໜາສັມພັນ ແຫ່ງ ສປປ ລາວ ໃນແຕ່ລະຂັ້ນໄດ້ເອົາໃຈໃສ່ ເທສະໜາເຜີຍແຜ່ສິລະທັມ ຕິດພັນກັບການປະຕິບັດ 2 ວາລະແຫ່ງຊາດ ເປັນຕົ້ນແມ່ນການ ເທສະໜາສັ່ງສອນ ໃຫ້ແກ່ເຍົາວະຊົນ, ຊາວໜຸ່ມ ແລະ ພຸດທະສາສະນິກະຊົນ ໃຫ້ຫ່າງໄກຈາກສິ່ງເສບຕິດ.

ເພື່ອຈັດຕັ້ງປະຕິບັດວຽກງານເຜີຍແຜ່ສິລະທັມ ແລະ ປະຕິບັດກັມມະຖານໃຫ້ມີປະສິດທິພາບ ແລະ ປະສິດທິຜົນ, ສູນກາງອົງການພຸດທະສາສະໜາສັມພັນ ແຫ່ງ ສປປ ລາວ ໄດ້ສ້າງຕັ້ງສູນຝຶກອົບຮົມວິປັດສະນາກັມ ມະຖານໃນຂັ້ນສູນກາງ, ຂັ້ນແຂວງ, ນະຄອນຫຼວງ ແລະ ເມືອງ, ນະຄອນ. ສູນຝຶກອົບຮົມວິປັດສະນາດັ່ງກ່າວນັ້ນ ໄດ້ຮັບເອົາພຣະສົງ-ສາມະເນນ, ພໍ່ຂາວ-ແມ່

ຂາວ ແລະ ອອກຕົນຍາດໂຍມລາວບັນດາເຜົ່າ ເຂົ້າຮັບການຝຶກອົບຮົມໃນໄລຍະ 15 ວັນ, 1 ເດືອນ, 3 ເດືອນ, 1 ປີ ຫຼື 3 ປີ ເພື່ອສ້າງ ພຣະສົງ, ສາມະເນນ, ພໍ່ຂາວ, ແມ່ຂາວ ໃຫ້ມີຄວາມຮູ້ທາງດ້ານການປະຕິບັດທັມກັມມະຖານ.

ຕະຫຼອດໄລຍະ ເວລາ 5 ປີທີ່ຜ່ານມາ, ບັນດາກັມມາທິການເຜີຍແຜ່ສີລະທັມ ແລະ ປະຕິບັດກັມມະຖານ ຂັ້ນຕ່າງໆ ໃນຂອບເຂດທົ່ວປະເທດ ສາມາດຈັດຕັ້ງການຝຶກອົບຮົມສີລະທັມ ໄດ້ 149 ຄັ້ງ ມີຜູ້ເຂົ້າຮ່ວມ 26,432 ອົງ/ທ່ານ; ຈັດບວດສາມະເນນໄລຍະພັກພາກຮຽນ 9 ຄັ້ງ ມີຜູ້ເຂົ້າຮ່ວມ 558 ອົງ, ຈັດອົບຮົມກັມມະຖານ 49 ຄັ້ງ ມີຜູ້ເຂົ້າຮ່ວມ 8,613 ອົງ/ທ່ານ, ຜະລິດລາຍການພຸດທະທັມ 468 ເລື່ອງ, ຜະລິດລາຍການ ສາທຸທັມ 5,220 ເລື່ອງ,ຂ່າວ ອພສ 164 ເລື່ອງ, ຜະລິດລາຍການສີລະທັມ, ຄະຕິທັມ 156 ເລື່ອງ; ຕໍ່ການເອົາໃຈໃສ່ວຽກງານເຜີຍແຜ່ສີລະທັມ, ການຝຶກອົບຮົມສີລະທັມ ແລະ ປະຕິບັດກັມມະຖານໃຫ້ແກ່ເຍົາວະຊົນ, ນັກຮຽນ, ນັກສຶກສາຂອງພຸດທະສາສະນິກະຊົນ ແລະ ປະຊາຊົນລາວບັນດາເຜົ່າແລ້ວນັ້ນ ຜົນທີ່ໄດ້ຮັບກໍຄື ເຍົາວະຊົນ, ນັກຮຽນ, ລູກຫຼານ ຂອງພໍ່ແມ່ປະຊາຊົນລາວບັນດາເຜົ່າ ໄດ້ມີສັດທາເຂົ້າມາບວດ ເປັນ ພຣະສົງ-ສາມະເນນ ຫຼາຍຂຶ້ນໂດຍລຳດັບ.

### 6. ວຽກງານກັມມາທິການສາທາຣະນູປະການ

ອົງການພຸດທະສາສະໜາສັມພັນ ແຫ່ງ ສປປ ລາວ ໃນແຕ່ລະຂັ້ນໄດ້ສົມທົບກັບອົງການຈັດຕັ້ງພັກ-ລັດ, ແນວລາວສ້າງຊາດ ແລະ ພາກສ່ວນທີ່ກ່ຽວຂ້ອງ ເພື່ອພ້ອມກັນຈັດຕັ້ງປະຕິບັດວຽກງານການສ້າງສາພັດທະນາໃຫ້ຖືກຕ້ອງ, ສອດຄ່ອງກັບນະໂຍບາຍຂອງພັກ, ກົດໝາຍ, ລະບຽບການຂອງລັດ ແລະ ວັດທະນະທັມ ທີ່ເປັນເອກະລັກຂອງຊາດ.

ຄະນະກັມມາທິການສາທາຣະນູປະການ ອົງການພຸດທະສາສະໜາສັມພັນ ແຫ່ງ ສປປ ລາວ ແຕ່ລະຂັ້ນ ໃນຂອບເຂດທົ່ວປະເທດ ກໍໄດ້ປຸກລະດົມຂົນຂວາຍ, ຊຸກຍູ້ ສົ່ງເສີມ ພຣະສົງ-ສາມະເນນ ແລະ ອອກຕົນຍາດ

ໂຍມທັງຫຼາຍ ໄດ້ເອົາໃຈໃສ່ຕໍ່ການສ້າງສາພັດທະນາ ແລະ ນໍາພາບູລະນະປະຕິສັງຂອນວັດວາອາຮາມຂຶ້ນຫຼາຍແຫ່ງ ຄຽງຄູ່ກັບການ ສ້າງຂຶ້ນໃໝ່ ໃນຂອບເຂດທົ່ວປະເທດ ເຊັ່ນ: ສ້າງວັດ, ພັດທະສີມາ, ສາລາໂຮງທັມ, ກຸຕິ, ວິຫານ, ພຣະພຸດທະຮູບ, ປະຕູໂຂງ, ກໍາແພງວັດ, ຫໍກອງ, ຫໍຣະຄັງ, ຫໍພຣະໄຕຣປິດົກ, ພຣະທາດເຈດີ, ໂຮງຮຽນ, ໂຮງໝໍ, ສຸກສາລາ, ຫ້ອງການປົກຄອງບ້ານ, ຫົນທາງ, ຂົວ ຊຶ່ງເຮັດໃຫ້ສະຖານທີ່ຕ່າງໆ ມີຄວາມສະດວກສະບາຍ ແລະ ຈົບງາມ ແກ່ສັງຄົມ.

ນອກຈາກການສ້າງສາພັດທະນາແລ້ວ, ຄະນະກັມມາທິການສາທາຣະນຸປະການ ອົງການພຸດທະສາສະໜາ ໃນຂັ້ນຕ່າງໆ ຍັງໄດ້ເອົາໃຈໃສ່ໃນການອະນຸລັກປົກປັກຮັກສາ ສາສະນະວັດຖຸບູຮານ, ປູຊະນີຍະສະຖານ ອັນສັກສິດ ແລະ ຊົງຄຸນຄ່າ ເຊັ່ນ: ພຣະພຸດທະຮູບ, ພຣະທາດເຈດີ, ຄັມພີດີກາ, ໜັງສືຜູກໃບລານ ແລະ ອື່ນໆ. ພ້ອມດຽວກັນນັ້ນ ບັນດາຄະນະບໍລິຫານງານ ອົງການພຸດທະສາສະໜາ ໃນແຕ່ລະຂັ້ນ ກໍໄດ້ໃຫ້ຄວາມຊ່ວຍເຫຼືອ ພໍ່ແມ່ປະຊາຊົນລາວບັນດາເຜົ່າ ຜູ້ໄດ້ຮັບເຄາະຮ້າຍຈາກໄພທໍາມະຊາດ, ແກ້ໄຂຄວາມທຸກຍາກຂາດເຂີນ ຂອງພໍ່ແມ່ ປະຊາຊົນລາວບັນດາເຜົ່າ ທີ່ຢູ່ຕາມແຕ່ລະທ້ອງຖິ່ນ.

ໄລຍະ 5 ປີ ໃນການຈັດຕັ້ງປະຕິບັດແຜນການທີ່ໄດ້ວາງໄວ້ນັ້ນເຫັນວ່າຫຼາຍໜ້າວຽກແມ່ນປະສົບຜົນສໍາເລັດເປັນຢ່າງດີ. ຜ່ານການເອົາໃຈໃສ່ວຽກງານ ການສ້າງສາວັດວາອາຮາມ ແລະ ການຊ່ວຍເຫຼືອສັງຄົມ ຄະນະບໍລິຫານງານອົງການພຸດທະສາສະໜາ ກໍຄືພຣະສົງ-ສາມະເນນ ທີ່ຢູ່ໃນແຕ່ລະທ້ອງຖິ່ນໄດ້ເອົາໃຈໃສ່ຢ່າງຕັ້ງໜ້ານໍາພາບັນດາ ອອກຕົນຍາດໂຍມສ້າງສາພັດທະນາຢ່າງຕໍ່ເນື່ອງ.

ຈໍານວນທຶນຮອນທີ່ສຸມໃສ່ວຽກງານການກໍ່ສ້າງ ແລະ ຊ່ວຍເຫຼືອສັງຄົມ, ສາມາດປຸກລະດົມທຶນຮອນຈາກອອກຕົນຍາດໂຍມ ທັງພາຍໃນ ແລະ ຕ່າງປະເທດ ເພື່ອສົມທົບເຂົ້າໃນການສ້າງສາພັດທະນາ ແລະ ຊ່ວຍເຫຼືອສັງຄົມໄດ້ເປັນຈໍານວນ ຫຼວງຫຼາຍ, ຕີກເປັນມູນຄ່າທັງໝົດໃນຂອບເຂດທົ່ວປະເທດ

25,024,178,109,000 ກີບ (ສອງໝື່ນຫ້າພັນ ຊາວສີ່ຕື້ ໜຶ່ງຮ້ອຍເຈັດສິບແປດລ້ານ ໜຶ່ງແສນເກົ້າພັນກີບ)

ສຳເລັດການອອກໜັງສືສະເໜີຂໍອະນຸຍາດສ້າງຕັ້ງວັດໃໝ່ ຈຳນວນ 218 ແຫ່ງ, ສຳເລັດ ການອອກ ເອກະສານຂໍອະນຸຍາດສ້າງຕັ້ງວັດຄືນໃໝ່ (ຄືວັດທີ່ສ້າງໄປແລ້ວມາດຳເນີນການທາງດ້ານເອກະສານຍ້ອນຫຼັງ) ຈຳນວນ 180 ວັດ, ສຳເລັດການຂໍໜັງອະນຸຍາດສ້າງພັດທະສີມາໃໝ່ ຈຳນວນ 318 ຫຼັງ.

## 7. ວຽກງານກົມມາທິການ ການຕ່າງປະເທດ

ກົມມາທິການ ການຕ່າງປະເທດ ມີພາລະບົດບາດໃນການຄຸ້ມຄອງບໍລິຫານ ວຽກງານພົວພັນ ແລະ ຮ່ວມມືກັບຕ່າງປະເທດ ກ່ຽວກັບວຽກງານພຣະພຸດທະສາສະໜາ ແລະ ສາສະໜາອື່ນ ລວມທັງວຽກງານອື່ນ ທີ່ກ່ຽວຂ້ອງຊຶ່ງຍາມໃດ ອົງການພຸດທະສາສະໜາສັມພັນ ແຫ່ງ ສປປ ລາວ ຂັ້ນສູນກາງຂອງພວກເຮົາກໍໄດ້ຢຶດໝັ້ນແນວທາງນະໂຍບາຍການຕ່າງປະເທດ ສັນຕິພາບເອກະລາດ ມິດຕະພາບ ແລະ ການຮ່ວມມືຂອງ ພັກ ແລະ ລັດຖະບານມາເປັນແນວທາງການຈັດຕັ້ງປະຕິບັດວຽກງານ ໃນການພົວພັນຕ່າງປະເທດຂອງຕົນ.

ສຳເລັດຈັດຝຶກອົບຮົມ ພຣະສະມະນະທູດລາວ ມີຜູ້ເຂົ້າຮ່ວມຈຳນວນ 520 ອົງ/ທ່ານ, ຝຶກອົບຮົມພຣະສະມະນະທູດລາວ ຊຸດທີ 1 ຈຳນວນຜູ້ເຂົ້າອົບຮົມ 30 ອົງ, ກວດທານ ແລະ ຈັດພິມ ໜັງສືຄູ່ມືອົບຮົມພຣະສະມະນະທູດລາວ ຈຳນວນ 1,000 ຫົວ, ກວດທານ ແລະ  ຈັດພິມໜັງສືໄຫວ້ພຣະສູດມົນແປ ສະບັບພາສາປາລິ-ອັງກິດ 1,000 ຫົວ, ກວດທານ ແລະ ຈັດພິມ ໜັງສືພຸດທະສາສະນະສຸພາສິດ ສະບັບພາສາປາລິ-ອັງກິດ 1,000 ຫົວ ກວດ ແລະ ແປທັມມະສຶກສາ ຈຳນວນ 1,000 ຫົວ, ເຂົ້າຮ່ວມກອງປະຊຸມໃນປະເທດ ຈຳນວນ 52 ຄັ້ງ, ເຂົ້າຮ່ວມກອງປະຊຸມໃນຕ່າງປະເທດພາກພື້ນ ແລະ ສາກົນ ຈຳນວນ 47 ຄັ້ງ.

ຄະນະບໍລິຫານງານ ອົງການພຸດທະສາສະໜາສໍາພັນ ແຫ່ງ ສປປ ລາວ ໃນຂັ້ນຕ່າງໆ ຍັງໄດ້ເປັນກຽດຕ້ອນຮັບ ການຢ້ຽມຢາມສັນທະວະໄມຕີ ຂອງຄະນະຜູ້ແທນ ອົງການພຸດທະສາສະໜາ ຈາກປະເທດເພື່ອນມິດຫຼາຍຄັ້ງ ເວົ້າລວມ, ເວົ້າສະເພາະ ສູນກາງອົງການພຸດທະສາສະໜາສໍາພັນ ແຫ່ງ ສປປ ລາວ ໄດ້ຮ່ວມກັບພາກສ່ວນທີ່ກ່ຽວຂ້ອງ ສູນກາງແນວລາວສ້າງຊາດ ແລະ ກະຊວງພາຍໃນ.

ການເຄື່ອນໄຫວດັ່ງກ່າວ ໄດ້ເຮັດໃຫ້ ພຣະສົງ-ສາມະເນນ ແລະ ພຸດທະສາສະນິກະຊົນຂອງປະເທດເພື່ອນມິດ ໃນພາກພື້ນ ແລະ ສາກົນ, ມີຄວາມສາມັກຄີ, ມີຄວາມຮ່ວມມືກັນຫຼາຍຂຶ້ນ ແລະ ພາຣະບົດບາດ ຂອງພຣະສົງລາວ ໃນເວທີສາກົນ ກໍຄືພາກພື້ນ ໄດ້ຮັບການຍົກສູງຂຶ້ນ ເປັນກ້າວໆ.

## III. ບັນດາ ຈຸດດີ, ຈຸດອ່ອນ, ຂໍ້ຄົງຄ້າງ, ຂໍ້ຫຍຸ້ງຍາກ ແລະ ສາເຫດ

### ກ. ຈຸດດີ

ຜ່ານການຈັດຕັ້ງປະຕິບັດມະຕິກອງປະຊຸມໃຫຍ່ ຜູ້ແທນພຣະສົງທົ່ວປະເທດ ສະໄໝທີ VIII ຕະຫຼອດໄລຍະ 5 ປີທີ່ຜ່ານມາ, ອົງການພຸດທະສາສະໜາສໍາພັນ ແຫ່ງ ສປປ ລາວ ກໍຄືພຣະສົງ-ສາມະເນນ ແລະ ພຸດທະສາສະນິກະຊົນລາວບັນດາເຜົ່າ ໄດ້ມີຈຸດດີອັນພົ້ນເດັ່ນ ດັ່ງນີ້:

1. ອົງການພຸດທະສາສະໜາສໍາພັນ ແຫ່ງ ສປປ ລາວ ກໍຄືພຣະສົງ-ສາມະເນນ ໄດ້ເຮັດໜ້າທີ່ຂອງຕົນຕາມຫຼັກພຣະທັມວິນັຍ, ທັມມະນູນສົງລາວ ມີຄວາມເຊື່ອໝັ້ນຕໍ່ການນໍາພາ ຂອງພັກ-ລັດ ແລະ ຕໍ່ປະເທດຊາດຢ່າງສະເໝີຕົ້ນສະເໝີປາຍ;

2. ພຣະສົງ-ສາມະເນນ ແລະ ພຸດທະສາສະນິກະຊົນລາວບັນດາເຜົ່າ ປະກອບສ່ວນເຂົ້າໃນພາຣະກິດປົກປັກຮັກສາ ແລະ ສ້າງສາພັດທະນາປະເທດຊາດ, ເປັນຕົ້ນແມ່ນການເຕົ້າໂຮມຄວາມສາມັກຄີປອງດອງ, ປົກປ້ອງ ຄຸ້ມຄອງ, ສົ່ງເສີມທາງດ້ານຄຸນນະທັມ, ຈະລິຍະທັມ, ສິລະປະ,ວັດທະນະທັມ ແລະ ຮີດຄອງປະເພນີອັນດີງາມຂອງຊາດ;

3. ອົງການພຸດທະສາສະໜາສັມພັນ ແຫ່ງ ສປປ ລາວ ມີຄວາມເປັນເອກະພາບອັນໜຶ່ງດຽວ ຄືຄະນະສົງລາວເທົ່ານັ້ນ, ໄດ້ຕັ້ງໜ້າເທສະໜາເຜີຍແຜ່ສີລະທັມ ຄຳສັ່ງສອນຂອງອົງພຣະສັມມາສັມພຸດທະເຈົ້າ ຄຽງຄູ່ກັບການເຜີຍແຜ່ແນວທາງນະໂຍບາຍຂອງພັກ, ກົດໝາຍ ແລະ ລະບຽບການຂອງລັດທີ່ວາງອອກ;

4. ການສ້າງສາພັດທະນາ ແລະ ການບູຣະນະປະຕິສັງຂອນ ວັດວາອາຮາມ, ພຣະພຸດທະຮູບ ແລະ ວຽກງານສາທາຣະນູປະໂພກອື່ນໆ ຊຶ່ງເຮັດໄດ້ດີລື່ນກວ່າໃນໄລຍະຜ່ານມາ ແລະ ມີຖ່ວງທ່າໃໝ່ທີ່ຈະແຈ້ງກວ່າເກົ່າ, ຂັ້ນຕອນໃນການດຳເນີນການທາງດ້ານເອກະສານ ແມ່ນຖືກຕ້ອງຕາມລະບຽບການທີ່ລັດວາງອອກ;

5. ອົງການພຸດທະສາສະໜາສັມພັນ ແຫ່ງ ສປປ ລາວ ມີການພົວພັນກັບອົງການພຸດທະສາສະໜາໃນພາກພື້ນ ແລະ ສາກົນ ນັບມື້ນັບເປີດກວ້າງ ແລະ ຂະຫຍາຍຕົວຫຼາຍຂຶ້ນ.

**ຂ. ສາເຫດທີ່ພາໃຫ້ມີຈຸດດີ**

1. ຄະນະບໍລິຫານງານ ອົງການພຸດທະສາສະໜາສັມພັນ ແຫ່ງ ສປປ ລາວ ໃນແຕ່ລະຂັ້ນ ໂດຍສະເພາະແມ່ນ ຂັ້ນສູນກາງ ໄດ້ຊີ້ນຳ-ນຳພາ ຈັດຕັ້ງເຄື່ອນໄຫວວຽກງານ ຕາມພາຣະບົດບາດ, ສິດ ແລະ ໜ້າທີ່ ຕາມພຣະທັມວິນັຍ, ທັມມະນູນສົງລາວ, ກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ;

2. ພຣະສົງ-ສາມະເນນ ແລະ ພຸດທະສາສະນິກະຊົນລາວບັນດາເຜົ່າໄດ້ມີຄວາມສາມັກຄີປອງດອງ ເປັນເອກະພາບ;

3. ອົງການຈັດຕັ້ງ ພັກ-ລັດ, ອົງການແນວລາວສ້າງຊາດ, ບັນດາອົງການຈັດຕັ້ງມະຫາຊົນແຕ່ລະຂັ້ນ ແລະ ພຸດທະສາສະນິກະຊົນລາວບັນດາເຜົ່າໃຫ້ຄວາມຮ່ວມມື ແລະ ສະໜັບສະໜູນທາງດ້ານວັດຖຸ ແລະ ກຳລັງໃຈ ໃຫ້

ແກ່ອົງການພຸດທະສາສະໜາສັມພັນ ແຫ່ງ ສປປ ລາວ ຈຶ່ງມີຄວາມສະດວກໃນການເຄື່ອນໄຫວວຽກງານຂອງຕົນ;

4. ພຣະເຖຣານຸເຖຣະ, ພຣະສົງ, ສາມະເນນ, ພໍ່ຂາວ ແລະ ແມ່ຂາວ ໃນຂອບເຂດທົ່ວປະເທດ ທີ່ໄດ້ຕັ້ງ ໜ້າປະຕິບັດຕາມຫຼັກພຣະທັມມະວິນັຍ, ທັມມະນູນສົງລາວ ແລະ ເທສະໜາເຜີຍແຜ່ຄຳສັ່ງສອນ ຂອງພຣະພຸດທະສາສະໜາ ໃຫ້ອອກຕົນຍາດໂຍມທັງຫຼາຍ ໄດ້ເຂົ້າໃຈເປັນຢ່າງດີ ແລະ ປະກອບສ່ວນເຂົ້າໃນພາລະກິດ ແຫ່ງການປົກປັກຮັກສາ ແລະ ສ້າງສາປະເທດຊາດ ຕາມແນວທາງປ່ຽນແປງໃໝ່ຂອງ ພັກ-ລັດ ເຮົາໄດ້ວາງອອກເປັນຢ່າງດີ;

5. ພຸດທະສາສະນິກະຊົນເຊື້ອຊາດລາວ ທີ່ອາໄສຢູ່ຕ່າງປະເທດ ອັນມີນ້ຳໃຈຮັກເຊື້ອແພງຊາດ, ຮັກບ້ານເກີດເມືອງນອນຂອງຕົນ, ມີຄວາມເຫຼື້ອມໃສສັດທາຕໍ່ພຣະພຸດທະສາສະໜາ ໄດ້ປະກອບສ່ວນທາງດ້ານວັດຖຸ ແລະ ຈິດໃຈ ຮ່ວມກັບພຸດທະສາສະນິກະຊົນລາວ ເປັນກ້ອນກຳລັງແຮງເຂົ້າໃນການສ້າງສາ, ປົກປັກຮັກສາ, ປະຕິສັງຂອນ ວັດວາອາຮາມ ຕະຫຼອດມາ.

6. ອົງການຈັດຕັ້ງຊາວພຸດ ຂອງປະເທດເພື່ອນມິດ ພ້ອມດ້ວຍພີ່ນ້ອງສາສະໜາອື່ນໆ ທັງຢູ່ພາຍໃນ ແລະ ຕ່າງປະເທດ ທັງພາກພື້ນ ແລະ ສາກົນ ກໍໄດ້ໃຫ້ຄວາມຮ່ວມມື, ສະໜັບສະໜູນ, ຊ່ວຍເຫຼືອທາງດ້ານວັດຖຸ ແລະ ຈິດໃຈແກ່ອົງການພຸດທະສາສະໜາສັມພັນ ແຫ່ງ ສປປ ລາວ ເຮົາຕະຫຼອດມາ.

### ຄ. ຈຸດອ່ອນ, ຂໍ້ຄົງຄ້າງ ແລະ ຂໍ້ຫຍຸ້ງຍາກ

ພຣະມະຫາເຖຣານຸເຖຣະ, ບັນດາທ່ານຜູ້ແທນ ແລະ ແຂກທີ່ຮັກແພງທັງຫຼາຍ

ຄຽງຄູ່ກັບຜົນສຳເລັດອັນໃຫຍ່ຫຼວງ ທີ່ຍາດມາໄດ້ນັ້ນ, ອົງການພຸດທະສາສະໜາສັມພັນ ແຫ່ງ ສປປ ລາວ ຂອງພວກເຮົາ ກໍຮັບຮູ້ວ່າຍັງມີຈຸດອ່ອນຂໍ້ຄົງຄ້າງ ແລະ ຂໍ້ຫຍຸ້ງຍາກບາງດ້ານ ໃນການຈັດຕັ້ງປະຕິບັດມະຕິກອງ

ປະຊຸມໃຫຍ່ຜູ້ແທນພຣະສົງທົ່ວປະເທດ ສະໄໝທີ VIII ໃນຮອບ 5 ປີທີ່ຜ່ານມາ ເປັນຕົ້ນແມ່ນ:

1. ການເຄື່ອນໄຫວວຽກງານ ຂອງບັນດາກັມມາທິການ ຂອງອົງການພຸດທະສາສະໜາສັມພັນ ແຫ່ງ ສປປ ລາວ ຍັງມີຂໍ້ຄົງຄ້າງໃນບາງດ້ານ ເຊັ່ນ: ວຽກງານການປົກຄອງສົງ ກ່ຽວກັບການແກ້ໄຂບັນຫາວັດທີ່ບໍ່ມີພຣະສົງຢູ່ຖາວອນ, ການແກ້ໄຂບາງອະທິກອນຊັກຊ້າ ແກ່ຍາວ, ການເກັບກຳສະຖິຕິຍັງບໍ່ຖ່ວງທັນ; ວຽກງານການສຶກສາສົງ ບໍ່ທັນໄດ້ຂະຫຍາຍຕົວ ຕາມຄວາມຮຽກຮ້ອງຕ້ອງການ, ຄູສອນຂັ້ນປະຖົມ ແລະ ມັດທະຍົມສົງ ຍັງບໍ່ພຽງພໍ, ຄວາມຮູ້ທາງດ້ານພຣະທັມວິນັຍຍັງບໍ່ເລິກເຊິ່ງ, ຫຼາຍຂໍ້ຄົງຄ້າງກ່ຽວກັບການສຶກສາສົງ ຍັງບໍ່ທັນໄດ້ຮັບການແກ້ໄຂທັນເວລາ ເຊັ່ນ: ດຳລັດ ວ່າດ້ວຍການສຶກສາສົງ; ວຽກງານການເທສະໜາເຜີຍແຜ່ສີລະທັມຂອງພຣະສົງຈຳນວນໜຶ່ງໃຫ້ແກ່ອອກຕົນຍາດໂຍມຍັງບໍ່ກວ້າງຂວາງ; ວຽກງານການບູຣະນະປະຕິສັງຂອນສ້າງສາວັດວາອາຣາມ, ການປຸກສ້າງພັດທະສີມາ, ສາລາໂຮງທັມ, ກຸຕິວິຫານລວມໄປເຖິງການສ້າງສິ່ງຕ່າງໆ ຍັງມີບາງກໍລະນີທີ່ບໍ່ທັນສອດຄ່ອງກັບບັນດານິຕິກຳ ແລະ ການປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ຍັງບໍ່ທັນແໜ້ນແຟ້ນ;

2. ແບບແຜນການຄຸ້ມຄອງບໍລິຫານ ແລະ ການຈັດຕັ້ງປະຕິບັດວຽກງານຕາມສາຍຕັ້ງ, ສາຍຂວາງຂອງຄະນະບໍລິຫານງານອົງການພຸດທະສາສະໜາຈຳນວນໜຶ່ງ ຍັງບໍ່ສອດຄ່ອງກັບທັມມະນູນສົງລາວ, ຂາດການເອົາໃຈໃສ່ເຊິ່ງກັນແລະກັນ, ການລົງເຄື່ອນໄຫວວຽກງານຂັ້ນຮາກຖານ ຍັງປະຕິບັດບໍ່ໄດ້ດີເທົ່າທີ່ຄວນ. ນອກຈາກນັ້ນ ຍັງມີຄວາມຫຍຸ້ງຍາກທາງດ້ານງົບປະມານ ອັນສົ່ງຜົນໃຫ້ແກ່ການເຄື່ອນໄຫວວຽກງານບໍ່ທັນກັບຄວາມຮຽກຮ້ອງຕ້ອງການ;

3. ພຣະສົງ-ສາມະເນນ ຈຳນວນໜຶ່ງ ຍັງບໍ່ທັນເປັນເຈົ້າການ ຕໍ່ການປົກປັກຮັກສາ ສາສະນະວັດຖຸ, ວັດຖຸບູຮານ, ການບູຣະນະປະຕິສັງຂອນວັດວາ

ອາຮາມ, ພຣະພຸດທະຮູບ, ພຣະທາດເຈດີ, ຄໍາພີດີກາ, ຊັບສິນບັດທີ່ມີຄ່າ ອື່ນໆ ຂອງຫຼາຍໆວັດ ໄດ້ປ່ອຍປະລະເລີຍໃຫ້ເປ່ເພ ແລະ ເປັນວັດຂາດພຣະສົງ ອາໄສຢູ່ດົນນານ ປ່ອຍໃຫ້ບຸກຄົນບໍ່ດີສວຍໂອກາດ ລັກລອບເອົາໄປ;

4. ພຣະສົງ-ສາມະເນນ ຈຳນວນໜຶ່ງ ຍັງຖືເບົາຕໍ່ການສຶກສາຮຽນຮູ້ ພຣະທັມມະວິນັຍ ແລະ ທັມມະນູນສົງລາວ; ຍັງຍຶດຖື ແລະ ປະຕິບັດບາງຮີດ ຄອງປະເພນີແບບເກົ່າ ທີ່ບໍ່ເປັນວິທະຍາສາດ;

5. ການຮັບເອົາຜູ້ເຂົ້າມາບວດໃນພຣະພຸດທະສາສະໜາ ຍັງບໍ່ທັນ ສອດຄ່ອງຕາມຫຼັກພຣະທັມມະວິນັຍ, ທັມມະນູນສົງລາວ, ກົດໝາຍ ແລະ ລະບຽບການຕ່າງໆ ເທົ່າທີ່ຄວນ;

6. ພຣະພິກຂຸສົງ-ສາມະເນນ ຈຳນວນໜຶ່ງ ຍັງສວຍໃຊ້ພຣະພຸດທະ ສາສະໜາ ເປັນບ່ອນອີງຫາຜົນປະໂຫຍດສ່ວນຕົນເປັນຕົ້ນ ການປະຈິບຄະຣິ ຫັດ, ປະກອບເດຍຣະສານວິຊາ ຊຶ່ງເປັນເຫດກໍ່ໃຫ້ເກີດມີການປະພຶດບໍ່ ສອດຄ່ອງ ຕໍ່ຫຼັກພຣະທັມມະວິນັຍ, ທັມມະນູນສົງລາວ, ກົດໝາຍ ແລະ ລະບຽບການຂອງລັດ;

7. ບຸກຄະລາກອນພຣະສົງ ຍັງມີຂີດຄວາມສາມາດຈຳກັດທາງດ້ານ ປະສົບການ ແລະ ບົດຮຽນໃນການພົວພັນຮ່ວມມືກັບຕ່າງປະເທດ ໃນລະດັບ ພາກພື້ນ ແລະ ສາກົນ.

**ງ. ສາເຫດທີ່ພາໃຫ້ມີ ຈຸດອ່ອນ ແລະ ຂໍ້ຄົງຄ້າງ**

ບັນດາຈຸດອ່ອນ ແລະ ຂໍ້ຄົງຄ້າງທີ່ກ່າວມານັ້ນ ເກີດຈາກຫຼາຍສາເຫດ ທັງພາຍໃນຕົວ ແລະ ນອກຕົວ ຄື:

ການສຶກສາຄົ້ນຄວ້າ ຫຼັກພຣະທັມມະວິນັຍ, ທັມມະນູນສົງລາວ, ທິດ ທາງແຜນການກອງປະຊຸມໃຫຍ່ສະ ໄໝທີ VIII ຂອງອົງການພຸດທະສາສະໜາ ສັມພັນ ແຫ່ງ ສປປ ລາວ ແລະ ການເຊື່ອມຊຶມ ແນວທາງນະໂຍບາຍຂອງພັກ ແລະ ລັດ ຍັງບໍ່ທັນເລິກເຊິ່ງ ເທົ່າທີ່ຄວນ.

ກົນໄກການປະສານສົມທົບວຽກງານ ລະຫວ່າງອົງການພຸດທະສາສະໜາສັມພັນ ແຫ່ງ ສປປ ລາວ ຂັ້ນຕ່າງໆກັບອົງການຈັດຕັ້ງ ພັກ-ລັດ, ຂະແໜງການ, ຂັ້ນສູນກາງ ແລະ ທ້ອງຖິ່ນ ຍັງບໍ່ທັນສອດຄ່ອງກັນ ເທົ່າທີ່ຄວນ.

ອົງການພຸດທະສາສະໜາສັມພັນ ແຫ່ງ ສປປ ລາວ ໃນບາງທ້ອງຖິ່ນ ຍັງບໍ່ທັນກຳແໜ້ນພາຣະບົດບາດ, ສິດ ແລະ ໜ້າທີ່ຂອງຕົນ; ພຣະສົງ-ສາມະເນນ ແລະ ອອກຕົນຍາດໂຍມໃນຂະບວນການຕ່າງໆ ຍັງຂາດສະຕິຄວາມຮັບຜິດຊອບ ຕໍ່ການຊີ້ນຳ-ນຳພາ ແລະ ການປະຕິບັດໜ້າທີ່ຂອງຕົນ.

**ຈ. ບາງບົດຮຽນທີ່ຖອດຖອນໄດ້.**

ຜ່ານພຶດຕິກຳຕົວຈິງ ແຫ່ງການຈັດຕັ້ງປະຕິບັດມະຕິກອງປະຊຸມໃຫຍ່ຜູ້ແທນພຣະສົງທົ່ວປະເທດ ສະໄໝທີ VIII ໃນໄລຍະ 5 ປີທີ່ຜ່ານມາ, ຄວນເອົາໃຈໃສ່ບາງບົດຮຽນດັ່ງນີ້:

1. ກຳແໜ້ນ ເຊື່ອມຊຶມ ແນວທາງນະໂຍບາຍຂອງພັກ ແລະ ລັດ ກ່ຽວກັບວຽກງານສາສະໜາ ກໍຄື ປະຕິບັດ ພາຣະບົດບາດ, ສິດ ແລະ ໜ້າທີ່ຂອງອົງການຈັດຕັ້ງຂອງຕົນໃຫ້ເລິກເຊິ່ງເຖິງຖອງ ແມ່ນປັດໄຈ ຕົ້ນຕໍໃນຜົນສຳເລັດ ຂອງອົງການພຸດທະສາສະໜາ ທຸກຂັ້ນ;

2. ການເພີ່ມທະວີຄວາມສາມັກຄີ ໃຫ້ແໜ້ນແຟ້ນ ລະຫວ່າງພຣະສົງ-ສາມະເນນ ກັບພຸດທະສາສະນິກະຊົນ ແລະ ປະຊາຊົນລາວບັນດາເຜົ່າ ແມ່ນຫຼັກຄ້ຳປະກັນກຳລັງແຮງ ຂອງອົງການພຸດທະສາສະໜາ ແລະ ຄວາມເຫຼື້ອມໃສສັດທາຂອງຊາວພຸດ;

3. ເພີ່ມທະວີ ສ້າງສາຍພົວພັນກັບອົງການພຸດທະສາສະໜາສັມພັນ ແຫ່ງ ສປປ ລາວ ໃນແຕ່ລະຂັ້ນ ໃຫ້ມີຄວາມເຂັ້ມແຂງ ເປັນທ່າແຮງໃນການຈັດຕັ້ງປະຕິບັດວຽກງານຂອງຕົນໃຫ້ເປັນໄປໄດ້ດ້ວຍດີ ແລະ ປະສານສົມທົບກັບທຸກພາກສ່ວນອົງການຈັດຕັ້ງ ຂອງຝ່າຍບ້ານເມືອງ ຢ່າງໃກ້ຊິດຕິດແທດ;

4. ສ້າງຕັ້ງກອງທຶນການເຄື່ອນໄຫວວຽກງານພຸດທະສາສະໜາເພື່ອເປັນການອຳນວຍຄວາມສະດວກ ໃຫ້ແກ່ການເຄື່ອນໄຫວວຽກງານ ຂອງຄະນະບໍລິຫານງານອົງການພຸດທະສາສະໜາ ຂັ້ນຕ່າງໆ ໃຫ້ກ້າວໜ້າທັນກັບສະພາບການ;

5. ກະຕຸກຊຸກຍູ້ອົງການພຸດທະສາສະໜາສໍາພັນ ແຫ່ງ ສປປ ລາວ ຢູ່ໃນຂັ້ນທ້ອງຖິ່ນຄື ແຂວງ, ນະຄອນຫຼວງ, ເມືອງ, ນະຄອນ ແລະ ຂັ້ນວັດໃຫ້ເອົາໃຈໃສ່ເຄື່ອນໄຫວວຽກງານຂອງຕົນຢ່າງມີແບບແຜນ;

6. ພົວພັນ ແລະ ຮ່ວມມືແລກປ່ຽນບົດຮຽນກັບອົງການຈັດຕັ້ງຊາວພຸດ ທີ່ເປັນປະເທດເພື່ອນມິດໃນພາກພື້ນ ແລະ ສາກົນ, ອົງການຈັດຕັ້ງສາສະໜາອື່ນໆ ແລະ ອອກຕົນຍາດໂຍມລາວບັນດາເຜົ່າ ທີ່ອາໄສຢູ່ຕ່າງປະເທດ ຕາມແນວທາງນະໂຍບາຍ ການພົວພັນຕ່າງປະເທດ ຂອງພັກ-ລັດ ໃຫ້ໄດ້ຫຼາຍກວ່າເກົ່າ.

ກອງປະຊຸມໃຫຍ່ຜູ້ແທນພຣະສົງທົ່ວປະເທດ ຂອງພວກເຮົາ ຂໍສະແດງຄວາມຍ້ອງຍໍສັນລະເສີນ ມາຍັງພຣະເຖຣານຸເຖຣະ, ພຣະສົງ, ສາມະເນນ, ພໍ່ຂາວ, ແມ່ຂາວ, ພຸດທະສາສະນິກະຊົນ ແລະ ປະຊາຊົນລາວບັນດາເຜົ່າໃນຂອບເຂດທົ່ວປະເທດ, ລວມທັງພຸດທະສາສະນິກະຊົນເຊື້ອຊາດລາວ ທີ່ອາໄສຢູ່ຕ່າງປະເທດ ທີ່ໄດ້ຕັ້ງໜ້າປະຕິບັດຕາມຫຼັກພຣະທັມມະວິນັຍ, ທັມມະນູນສົງລາວ ແລະ ປະກອບສ່ວນເຂົ້າໃນພາຣະກິດ ແຫ່ງການປົກປັກຮັກສາ ແລະ ສ້າງສາປະເທດຊາດ ຕາມແນວທາງປ່ຽນແປງໃໝ່ຂອງພັກ-ລັດເຮົາໄດ້ວາງອອກເປັນຢ່າງດີ.

ໃນໂອກາດອັນສະຫງ່າຣາສີນີ້ ກອງປະຊຸມໃຫຍ່ຜູ້ແທນພຣະສົງທົ່ວປະເທດ ຂໍສະແດງຄວາມຮູ້ບຸນຄຸນ ແລະ ຂອບອົກຂອບໃຈ ຕໍ່ອົງການຈັດຕັ້ງພັກ-ລັດ, ອົງການແນວລາວສ້າງຊາດ, ບັນດາອົງການຈັດຕັ້ງມະຫາຊົນແຕ່ລະຂັ້ນ, ພຸດທະສາສະນິກະຊົນທັງຫຼາຍ, ການຈັດຕັ້ງຊາວພຸດຂອງປະເທດເພື່ອນມິດໃກ້ຄຽງ ທີ່ໄດ້ໃຫ້ຄວາມຮ່ວມມື ອຸປະຖໍາທາງດ້ານວັດຖຸ ແລະ ຈິດໃຈ, ໃຫ້ແກ່ອົງການພຸດທະສາສະໜາສໍາພັນ ແຫ່ງ ສປປ ລາວ ໄດ້ມີຄວາມສະດວກໃນການເຄື່ອນໄຫວວຽກງານໃນໄລຍະຜ່ານມາເປັນຢ່າງດີ.

**ຂໍນະມັດສະການ/ຈະເລີນພອນ**

**ຂໍຂອບໃຈ**

## ທິດທາງແຜນການ 5 ປີຕໍ່ໜ້າ
## ຂອງອົງການພຸດທະສາສະໜາສຳພັນ ແຫ່ງ ສປປ ລາວ ສະໄໝທີ IX

ພຣະອາຈານ ບຸນທະວີ ປະສິດທິສັກ
ຫົວໜ້າກັມມາທິການ ສາທາຣະນູປະການ ສູນກາງ ອພສ

- ຂໍນ້ອມໄຫວ້ ພຣະຣັດຕະນະໄຕຣ ທີ່ເຄົາລົບຢ່າງສູງສຸດ
- ນ້ອມນະມັດສະການ/ຈະເລີນພອນ: ຄະນະປະທານກອງປະຊຸມທີ່ ເຄົາລົບ ແລະ ນັບຖືຢ່າງສູງ
- ພຣະເຖຣານຸເຖຣະ ທີ່ເຄົາລົບ.
- ບັນດາທ່ານການນຳພັກ-ລັດ ແຂກຜູ້ຊົງກຽດ ຜູ້ຊົງຄຸນວຸດທິ ພຸດທະສາສະນິກະຊົນທຸກທ່ານ ທີ່ນັບຖື ແລະ ຮັກແພງ.

### I. ສະພາບລວມ

ໃນຊຸມປີຕໍ່ໜ້າ ສະພາບການຂອງໂລກກໍຄືສະພາບການພາກພື້ນ ແລະ ສາກົນ ຍັງຈະສືບຕໍ່ຜັນແປຢ່າງສະຫຼັບສັບຊ້ອນ ຍາກທີ່ຈະຄາດຄະເນໄດ້, ພວກອິດທິກຳລັງປໍລະປັກ ຍັງຈະບໍ່ລົດລະໃນການສວຍໃຊ້ບັນຫາສິດທິມະນຸດ, ບັນຫາການເຊື່ອຖືທີ່ແຕກຕ່າງທາງດ້ານສາສະໜາ ແລະ ການເມືອງເພື່ອແຊກແຊງ ເຂົ້າກິດຈະການພາຍໃນຂອງປະເທດຕ່າງໆໃນໂລກ.

ເວົ້າສະເພາະຢູ່ ສປປ ລາວເຮົາ, ພວກຄົນບໍ່ຫວັງດີ ຍັງຈະສືບຕໍ່ເຄື່ອນໄຫວມ້າງເພທຳລາຍ ແລະ ຂັດຂວາງພາຣະກິດແຫ່ງການປົກປັກຮັກສາ ແລະ ສ້າງສາພັດທະນາປະເທດຊາດຂອງພວກເຮົາ; ພວກເຂົາຍັງຈະຕັ້ງໜ້າໂຄສະນາຊວນເຊື່ອ, ບິດເບືອນ ແລະ ໃສ່ຮ້າຍປ້າຍສີ ອົງການພຸດທະສາສະໜາ ດ້ວຍວິທີການຫຼາຍຮູບແບບ, ແຊກແຊງ, ຍຸແຍ່, ປັ່ນປວນ, ໂຄສະນາ ໃຫ້ເກີດການແຕກແຍກຄວາມສາມັກຄີ ລະຫວ່າງ ອົງການພຸດທະສາສະໜາສຳພັນ ແຫ່ງ ສປປ ລາວ ກັບພັກ-ລັດ ແລະ ປະຊາຊົນລາວບັນດາເຜົ່າ, ສ້າງຄວາມແບ່ງແຍກລະຫວ່າງພຣະສົງດ້ວຍກັນ, ພວກເຂົາພະຍາຍາມຊອກຫາຈຸດອ່ອນ ທີ່ເປັນຊ່ອງວ່າງ ເພື່ອບຸກໂຈມຕີ ໂດຍອາໄສຄວາມເຊື່ອຖືທີ່ແຕກຕ່າງ ເປັນບ່ອນ ສຸມກຳ

ລັງມ້າງເພທຳລາຍຄວາມສາມັກຄີ ແລະ ຄວາມສະຫງົບສຸກ ພາຍໃນປະເທດຂອງພວກເຮົາ.

ເພື່ອເສີມຂະຫຍາຍໝາກຜົນ ທີ່ບັນລຸໄດ້ໃນຊຸມປີທີ່ຜ່ານມາ, ອົງການພຸດທະສາສະໜາສັມພັນ ແຫ່ງ ສປປ ລາວທຸກຂັ້ນ ຕ້ອງກຳແໜ້ນ ຫຼັກສີລະທັມທາງພຣະພຸດທະສາສະໜາ, ແນວທາງນະໂຍບາຍຂອງພັກ-ລັດ, ຕ້ອງເອົາໃຈໃສ່ແກ້ໄຂ, ຕ້ານ ແລະ ສະກັດກັ້ນ ບັນດາປາກົດການຫຍໍ້ທໍ້ ໃນຄະນະພຣະສົງ ແລະ ສາມະເນນຈຳນວນໜຶ່ງ ໃຫ້ຫຼຸດໜ້ອຍຖອຍລົງໄປເທື່ອລະກ້າວ.

ຕໍ່ສະພາບການດັ່ງກ່າວນັ້ນ, ອົງການພຸດທະສາສະໜາສັມພັນ ແຫ່ງ ສປປ ລາວ ຕ້ອງໄດ້ເພີ່ມທະວີຄວາມສາມັກຄີ ເພື່ອພາຣະກິດປົກປັກຮັກສາ ແລະ ສ້າງສາພັດທະນາປະເທດຊາດ ກໍຄື ພຣະພຸດທະສາສະໜາໃຫ້ມີຄວາມຈະເລີນຮຸ່ງເຮືອງໝັ້ນຄົງ. ຄຽງຄູ່ກັນນັ້ນ, ຄະນະບໍລິຫານງານອົງການພຸດທະສາສະໜາໃນແຕ່ລະຂັ້ນ, ພຣະສົງ-ສາມະເນນ ໃນວັດຕ່າງໆ ຕ້ອງມີສະຕິຕື່ນຕົວ, ເພີ່ມທະວີເອົາໃຈໃສ່ປະຕິບັດວຽກງານຂອງຕົນ ໃຫ້ຖືກຕ້ອງຕາມຫຼັກພຣະທັມມະວິນັຍ, ທັມມະນູນສົງລາວ ແລະ ສອດຄ່ອງກັບສະພາບການປ່ຽນແປງໃໝ່. ການດຳເນີນວຽກງານຕ່າງໆໃນຕໍ່ໜ້າ ຂອງອົງການພຸດທະສາສະໜາສັມພັນ ແຫ່ງ ສປປ ລາວ ໄດ້ມີການກຳນົດຍຸດທະສາດສະເພາະໜ້າ ແລະ ຍາວນານຢ່າງຈະແຈ້ງ. ພ້ອມກັນນັ້ນ, ກໍໄດ້ສືບຕໍ່ວິໄສທັດ 20 ປີ (2021-2040) ແລະ ຈັດຕັ້ງປະຕິບັດແຜນຍຸດທະສາດ 5 ປີ (2026-2030) ຂອງອົງການພຸດທະສາສະໜາສັມພັນ ແຫ່ງ ສປປ ລາວ.

## II. ຄາດໝາຍ, ທິດທາງລວມ ແລະ ວຽກຈຸດສຸມ 5 ປີຕໍ່ໜ້າ (2026-2030)

ໃນໄລຍະ 5 ປີຕໍ່ໜ້າ (2026-2030) ອົງການພຸດທະສາສະໜາສັມພັນ ແຫ່ງ ສປປ ລາວ ໄດ້ກຳນົດຄາດໝາຍ ພາກພຽນພະຍາຍາມ, ທິດທາງລວມ ແລະ ໜ້າທີ່ 5 ປີ ດັ່ງນີ້:

**ກ. ຄາດໝາຍ**

- ສືບຕໍ່ເພີ່ມທະວີກ້ອນກຳລັງສາມັກຄີ ພາຍໃນອົງການພຸດທະສາສະໜາສັມພັນ ແຫ່ງ ສປປ ລາວ ຂັ້ນສູນກາງ ແລະ ທ້ອງຖິ່ນ ໃຫ້ໜັກແໜ້ນຍົກສູງສະຕິຊາດ, ເຄົາລົບພຣະທັມມະວິນັຍ, ທັມມະນູນສົງລາວ ຢ່າງເຄັ່ງຄັດ ແລະ ປະຕິບັດຕາມລັດຖະທຳມະນູນ, ກົດໝາຍ ແລະ ລະບຽບການຂອງບ້ານເມືອງ;

- ປັບປຸງກົງຈັກການຈັດຕັ້ງ ແລະ ແບບແຜນວິທີເຮັດວຽກໃຫ້ສອດຄ່ອງຫຼາຍກວ່າເກົ່າ, ມອບໃຫ້ຄະນະບໍລິຫານງານ ແລະ ກັມມາທິການຕ່າງໆ ຂອງອົງການພຸດທະສາສະໜາສັມພັນ ແຫ່ງ ສປປ ລາວ ໃນ ແຕ່ລະຂັ້ນເປັນເຈົ້າການ ລົງເຄື່ອນໄຫວ ນຳພາຊີ້ນຳ ວຽກງານຂອງຕົນຢູ່ຂັ້ນຮາກຖານໃຫ້ຫຼາຍກວ່າເກົ່າ;

- ສົ່ງເສີມໃຫ້ພຣະສົງ-ສາມະເນນ ກຳແໜ້ນຫຼັກພຣະທັມມະວິນັຍ, ທັມມະນູນສົງລາວ, ແນວທາງນະໂຍບາຍຂອງພັກ-ລັດ ແລະ ເທສະໜາສັ່ງສອນອອກຕົນຍາດໂຍມລາວບັນດາເຜົ່າ ດ້ວຍເນື້ອໃນ ທີ່ດີມີຄຸນນະພາບເຂົ້າໃຈງ່າຍສາມາດນຳເອົາໄປປະຕິບັດໃຫ້ເປັນປະໂຫຍດແກ່ສ່ວນຕົນ ແລະ ສ່ວນລວມໄດ້;

- ໃຫ້ບັນດາກັມມາທິການ ສ້າງຂໍ້ກຳນົດ, ກົດລະບຽບ, ສັງຄານັດ ແລະ ສັງຄະບັນຍັດ ທີ່ແທດເໝາະກັບ ກາລະໂອກາດ ແລະ ຍຸກສະໄໝ ບົນພື້ນຖານຫຼັກພຣະທັມມະວິນັຍ, ທັມມະນູນສົງລາວ, ກົດໝາຍ ແລະ ລະບຽບການ ເພື່ອເປັນບັນທັດຖານ ທາງດ້ານຄວາມປະພຶດປະຕິບັດຢ່າງເປັນເອກະພາບ; ຍົກສູງທາງດ້ານການສຶກສາສົງ ດ້ານປະລິຍັດຕິທັມ ແລະ ສາມັນສຶກສາສົງຄຽງຄູ່ກັນໄປ ເພື່ອຮັບປະກັບຄຸນນະພາບ ຄວາມຮູ້ ແລະ ວິຊາການຮ່ວມສະໄໝ. ພ້ອມດຽວກັນນັ້ນ ຕ້ອງໄດ້ສືບຕໍ່ຈັດພິມພຣະໄຕປີດົກລາວ ທັງພາສາປາລີ ແລະ ທີ່ແປພາສາລາວໃຫ້ຫຼາຍ ແຈກຢາຍໃຫ້ທົ່ວເຖິງ ເພື່ອໃຫ້ພຣະສົງ, ສາມະເນນ, ພໍ່ຂາວ, ແມ່ຂາວ, ພຸດທະສາສະນິກະຊົນ ແລະ ປະຊາຊົນລາວບັນດາເຜົ່າ ໄດ້ສຶກສາຄົ້ນຄວ້າ ແລະ ນຳເອົາໄປປະພຶດປະຕິບັດ;

- ເສີມຂະຫຍາຍ ບົດບາດ ຂອງພຣະສົງ-ສາມະເນນ ໃນການປະກອບສ່ວນນຳໜ້າພາທາງ ໃຫ້ປະຊາຊົນລາວບັນດາເຜົ່າ ຍົກສູງນ້ຳໃຈຮັກຊາດ, ຮັກບ້ານເກີດເມືອງນອນ, ເພີ່ມທະວີນ້ຳໃຈເສຍສະຫຼະ, ເພິ່ງຕົນເອງ, ກຸ້ມຕົນເອງ, ສ້າງຄວາມເຂັ້ມແຂງຮອບດ້ານ ເພື່ອຫຼຸດພົ້ນອອກຈາກຄວາມທຸກຍາກ ແລະ ມີພື້ນຖານເພື່ອສືບຕໍ່ກ້າວຂຶ້ນໄປສູ່ຄວາມຢູ່ດີກິນດີ;

- ຊຸກຍູ້ ສົ່ງເສີມ ແລະ ສະໜັບສະໜູນ ພຣະສົງ-ສາມະເນນ ໃຫ້ມີຫົວຄິດປະດິດສ້າງ, ມີນ້ຳໃຈເສຍສະຫຼະປະໂຫຍດສ່ວນຕົນ ເພື່ອປະໂຫຍດສຸກສ່ວນລວມ, ເຫັນຄວາມສຳຄັນດ້ານສາທາຣະນະປະໂຫຍດ ແລະ ດ້ານການຊ່ວຍເຫຼືອສັງຄົມເປັນຊີວິດຈິດໃຈ;

- ຊຸກຍູ້ ອົງການພຸດທະສາສະໜາສັມພັນ ແຫ່ງ ສປປ ລາວ ແຕ່ລະຂັ້ນສ້າງກອງທຶນຂອງຕົນ ເພື່ອຮັບປະກັນໃຫ້ທຸກການເຄື່ອນໄຫວວຽກງານສະດວກຫຼາຍຂຶ້ນກວ່າເກົ່າ.

- ສືບຕໍ່ຕັ້ງໜ້າເສີມຂະຫຍາຍສາຍພົວພັນມິດຕະພາບ ແລະ ການຮ່ວມມືກັບອົງການຈັດຕັ້ງຊາວພຸດຂອງປະເທດເພື່ອນມິດ ແລະ ອົງການຈັດຕັ້ງສາກົນ ທີ່ມີທັງພາຍໃນ ແລະ ຕ່າງປະເທດ ໂດຍປະຕິບັດໃຫ້ສອດຄ່ອງກັບນະໂຍບາຍການຕ່າງປະເທດ ຂອງລັດຖະບານ ແຫ່ງ ສປປ ລາວ.

**ຂ. ທິດທາງລວມ**

ເພື່ອປະຕິບັດຄາດໝາຍພາກພຽນພະຍາຍາມ ທີ່ໄດ້ກຳນົດອອກມານັ້ນ ອົງການພຸດທະສາສະໜາສັມພັນ ແຫ່ງ ສປປ ລາວ ຕ້ອງປະຕິບັດຕາມທິດທາງລວມ ດັ່ງນີ້:

ປັບປຸງກົງຈັກການຈັດຕັ້ງ ຂອງອົງການພຸດທະສາສະໜາສັມພັນ ແຫ່ງ ສປປ ລາວ ແຕ່ລະຂັ້ນ ໃຫ້ມີຄຸນນະພາບ, ຫັນເອົາວຽກງານ ຂອງອົງການພຸດທະສາສະໜາລົງສູ່ຮາກຖານ ໂດຍມອບໝາຍໃຫ້ອົງການພຸດທະສາສະໜາຂັ້ນແຂວງ, ນະຄອນຫຼວງ ເປັນຜູ້ຈັດຕັ້ງນຳພາ ແລະ ມອບໝາຍວຽກໃຫ້ອົງການພຸດທະສາສະໜາ ຂັ້ນເມືອງ, ນະຄອນ ແລະ ວັດ ເປັນຜູ້ຈັດຕັ້ງປະຕິບັດຕົວຈິງໃນທຸກວຽກງານ ຂອງອົງການພຸດທະສາສະໜາສັມພັນ ແຫ່ງ ສປປ ລາວ;

ກຳແໜ້ນທິດທາງແຜນການ ຂອງກອງປະຊຸມໃຫຍ່, ພາລະບົດບາດ, ສິດ ແລະ ໜ້າທີ່ຂອງຕົນ ໃນໄລຍະໃໝ່ ເພື່ອຜັນຂະຫຍາຍໃຫ້ເປັນອັນລະອຽດ ໃນພາກປະຕິບັດຕົວຈິງ ຢ່າງມີປະສິດທິພາບ ແລະ ປະສິດທິຜົນ;

ເສີມຂະຫຍາຍມູນເຊື້ອ ແລະ ຫົວຄິດປະດິດສ້າງ ຂອງພຣະສົງ-ສາມະເນນ ເຂົ້າໃນການເທສະໜາເຜີຍແຜ່ສີລະທັມໃຫ້ມີການຫັນປ່ຽນຖ່ວງທ່າໃໝ່;

ສົ່ງເສີມ ພຣະສົງ-ສາມະເນນ ໃຫ້ເປັນຜູ້ນຳພາອອກຕົນຍາດໂຍມໃນການສ້າງຂະບວນການຕ່າງໆ ໃຫ້ໄດ້ຫຼາຍຮູບ, ຫຼາຍແບບ ແລະ ຫຼາຍລະດັບ ເພື່ອປະຕິສັງຂອນວັດວາອາຣາມ ແລະ ສາທາຣະນະປະໂຫຍດ;

ຍົກລະດັບຄວາມຮູ້ດ້ານພຣະທັມມະວິນັຍ, ທັມມະນູນສົງລາວ ແລະ ຄວາມຮູ້ທົ່ວໄປກ່ຽວກັບ ລະບຽບການ, ກົດໝາຍຂອງບ້ານເມືອງ ໃຫ້ແກ່ພຣະສົງ-ສາມະເນນ;

ເພີ່ມທະວີປະສານສົມທົບ ລະຫວ່າງຄະນະບໍລິຫານງານ ອົງການພຸດທະສາສະໜາໃນທຸກຂັ້ນກັບອົງການຈັດຕັ້ງຕ່າງໆ ຂອງຝ່າຍບ້ານເມືອງໃຫ້ໄດ້ດີຂຶ້ນເປັນກ້າວໆ;

ເປີດກວ້າງສາຍພົວພັນມິດຕະພາບ ແລະ ການຮ່ວມມືກັບອົງການຈັດຕັ້ງຊາວພຸດ, ອົງການສາສະໜາອື່ນໆ ແລະ ອົງການຈັດຕັ້ງສາກົນ ທັງພາຍໃນ ແລະ ຕ່າງປະເທດ ໃຫ້ໄດ້ຫຼາຍກວ່າເກົ່າ.

## ຄ. ວຽກຈຸດສຸມ ຂອງອົງການພຸດທະສາສະໜາສັມພັນ ແຫ່ງ ສປປ ລາວ ສຳລັບ 5 ປີ ຕໍ່ໜ້າ

ເພື່ອປະຕິບັດຄາດໝາຍ ແລະ ທິດທາງລວມ ສຳລັບ 5 ປີຕໍ່ໜ້າ ດັ່ງທີ່ກ່າວມານັ້ນ ໃຫ້ບັນລຸຜົນເປັນຈິງ, ອົງການພຸດທະສາສະໜາສັມພັນ ແຫ່ງ ສປປ ລາວ ຈະຕ້ອງສຸມໃສ່ຈັດຕັ້ງປະຕິບັດບັນດາໜ້າທີ່ຕົ້ນຕໍ ດັ່ງນີ້:

1. ກຳແໜ້ນ ຫຼັກພຣະທັມມະວິນັຍ, ທັມມະນູນສົງລາວ, ທິດທາງແຜນການ, ມະຕິ ຂອງກອງປະຊຸມໃຫຍ່ຜູ້ແທນພຣະສົງທົ່ວປະເທດ, ແນວທາງ

ນະໂຍບາຍຂອງພັກ ແລະ ລັດຖະບານຕໍ່ວຽກງານສາສະໜາ ພ້ອມທັງເຊື່ອມຊຶມພາຣະບົດບາດ, ສິດ ແລະ ໜ້າທີ່ ຂອງອົງການຈັດຕັ້ງຂອງຕົນໃຫ້ເລິກເຊິ່ງ; ຍົກສູງຄວາມສາມັກຄີລະຫວ່າງພຣະສົງ-ສາມະເນນ, ພຸດທະສາສະນິກະຊົນໃຫ້ເປັນເອກະພາບອັນໜຶ່ງດຽວ; ກ່ອນອື່ນໝົດ ແມ່ນຕ້ອງເອົາໃຈໃສ່ໂຄສະນາເຜີຍແຜ່ໝາກຜົນສຳເລັດຂອງກອງປະຊຸມໃຫຍ່ ຜູ້ແທນພຣະສົງທົ່ວປະເທດສະໄໝທີ IX ນີ້ ໃຫ້ພຣະສົງ-ສາມະເນນ ແລະ ອອກຕົນຍາດໂຍມລາວບັນດາເຜົ່າ ໄດ້ເຂົ້າໃຈແຈ່ມແຈ້ງ ແລະ ກວ້າງຂວາງ.

2. ເອົາໃຈໃສ່ຝຶກອົບຮົມ, ສັ່ງສອນໃຫ້ພຣະສົງ, ສາມະເນນ, ພໍ່ຂາວ, ແມ່ຂາວ ກຳແໜ້ນ ແລະ ຍຶດໝັ້ນໃນຫຼັກພຣະທັມມະວິນັຍ, ທັມມະນູນສົງລາວ, ກົດໝາຍ ແລະ ລະບຽບການຢ່າງເຄັ່ງຄັດ ພ້ອມທັງເທສະໜາສັ່ງສອນອອກຕົນຍາດໂຍມ ດ້ວຍເນື້ອໃນທີ່ດີ, ມີບົດເທສະໜາ ແລະ ຄຳເວົ້າເຂົ້າໃຈງ່າຍສາມາດນຳເອົາໄປປະພຶດປະຕິບັດໃຫ້ເປັນປະໂຫຍດ ໃນຊີວິດປະຈຳວັນໄດ້ຢ່າງເປັນຮູບປະທັມ;

3. ຕັ້ງໜ້ານຳພາຈັດຕັ້ງຜັນຂະຫຍາຍໜ້າທີ່ວຽກງານອື່ນໆ ທີ່ກອງປະຊຸມໃຫຍ່ໄດ້ກຳນົດໄວ້ ສຳລັບ 5 ປີຕໍ່ໜ້າ ຢ່າງມີຫົວຄິດປະດິດສ້າງ ແລະ ສອດຄ່ອງກັບສະພາບຕົວຈິງຂອງທ້ອງຖິ່ນຮາກຖານໃນຂອບເຂດຄວາມຮັບຜິດຊອບຂອງຕົນ.

4. ສືບຕໍ່ປັບປຸງແບບແຜນວິທີເຮັດວຽກ ຂອງອົງການພຸດທະສາສະໜາສັມພັນ ແຫ່ງ ສປປ ລາວ ໃນແຕ່ລະຂັ້ນ ໃຫ້ສອດຄ່ອງ, ປະຕິບັດຕາມຫຼັກການ ລວມສູນປະຊາທິປະໄຕ, ປຶກສາຫາລື ແລະ ຕົກລົງເປັນໝູ່ຄະນະ, ມອບໝາຍຄວາມຮັບຜິດຊອບໃຫ້ບຸກຄົນຢ່າງລະອຽດຈະແຈ້ງ ທັງມີການຕິດຕາມຊຸກຍູ້ ການຈັດຕັ້ງປະຕິບັດຕົວຈິງ ເປັນແຕ່ລະໄລຍະ;

5. ເອົາໃຈໃສ່ສ້າງລະບົບການປະສານສົມທົບກັບອົງການພຸດທະສາສະໜາສັມພັນ ແຫ່ງ ສປປ ລາວ ໃນແຕ່ລະຂັ້ນໃຫ້ໄດ້ດີ ເພື່ອຮັບປະກັນການຊີ້ນຳ-ນຳພາ ອົງການພຸດທະສາສະໜາ ໃນຂັ້ນຂອງຕົນຢ່າງໃກ້ ຊິດຕິດແທດ

ແລະ ເປັນລະບົບຕໍ່ເນື່ອງ, ພ້ອມທັງເພີ່ມທະວີການປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ຂອງຝ່າຍບ້ານເມືອງ ເພື່ອເຄື່ອນໄຫວວຽກງານຕາມພາລະບົດບາດ, ສິດ ແລະ ໜ້າທີ່ຂອງຕົນສະດວກກວ່າເກົ່າ;

6. ຫ້ອງການບໍລິຫານງານ ແລະ ບັນດາກັມມາທິການ ສູນກາງອົງການພຸດທະສາສະໜາສັມພັນ ແຫ່ງ ສປປ ລາວ ຕ້ອງໄດ້ກຳນົດບົດບາດ ແລະ ສ້າງແຜນງານຂອງຕົນໃນແຕ່ລະໄລຍະ ເຊັ່ນ: ແຜນການປະຈຳອາທິດ, ປະຈຳເດືອນ, 3 ເດືອນ, 6 ເດືອນ, ແຜນການປີ ແລະ ແຜນການ 5 ປີ ເພື່ອເປັນທ່າແຮງຊຸກຍູ້ການເຄື່ອນໄຫວວຽກງານ ແຕ່ລະຂັ້ນ, ໂດຍສະເພາະໃນຂັ້ນເມືອງ ແລະ ຂັ້ນວັດ ຢ່າງເອົາຈິງເອົາຈັງກວ່າເກົ່າ; ທັງມີການສະຫຼຸບ ຕີລາຄາການເຄື່ອນໄຫວວຽກງານຂອງຕົນ ເປັນແຕ່ລະໄລຍະ;

7. ອົງການພຸດທະສາສະໜາສັມພັນ ແຫ່ງ ສປປ ລາວ ຈະໄດ້ປັບປຸງທັມມະນູນສົງລາວ ເພື່ອໃຫ້ແທດເໝາະ ກັບກາລະໂອກາດ ແລະ ຄວາມເປັນຈິງ;

8. ໃຫ້ບັນດາກັມມາທິການ ສ້າງຂໍ້ກຳນົດ, ກົດລະບຽບ, ສັງຄານັດ ແລະ ສັງຄະບັນຍັດ ທີ່ແທດເໝາະກັບ ກາລະໂອກາດ ແລະ ຍຸກສະໄໝ ບົນພື້ນຖານຫຼັກພຣະທັມມະວິນັຍ, ທັມມະນູນສົງລາວ, ກົດໝາຍ ແລະ ລະບຽບການເພື່ອເປັນບັນທັດຖານ ທາງດ້ານຄວາມປະພຶດປະຕິບັດຢ່າງເປັນເອກະພາບ; ຍົກສູງທາງດ້ານການສຶກສາສົງ ດ້ານປະລິຍັດຕິທັມ ແລະ ສາມັນສຶກສາສົງຄ່ຽງຄູ່ກັນໄປ ເພື່ອຮັບປະກັບຄຸນນະພາບ ຄວາມຮູ້ ແລະ ວິຊາການຮ່ວມສະໄໝ. ພ້ອມດຽວກັນນັ້ນ ຕ້ອງໄດ້ສືບຕໍ່ຈັດພິມພຣະໄຕປິດົກລາວ ທັງພາສາປາລີ ແລະ ທີ່ແປພາສາລາວໃຫ້ຫຼາຍ ແຈກຢາຍໃຫ້ທົ່ວເຖິງ ເພື່ອໃຫ້ພຣະສົງ, ສາມະເນນ, ພໍ່ຂາວ, ແມ່ຂາວ, ພຸດທະສາສະນິກະຊົນ ແລະ ປະຊາຊົນລາວບັນດາເຜົ່າໄດ້ສຶກສາຄົ້ນຄວ້າ ແລະ ນຳເອົາໄປປະພຶດປະຕິບັດ;

9. ເສີມຂະຫຍາຍ ບົດບາດ ຂອງພຣະສົງ-ສາມະເນນ ໃນການປະກອບສ່ວນນຳໜ້າພາທາງ ໃຫ້ປະຊາຊົນລາວບັນດາເຜົ່າ ຍົກສູງນ້ຳໃຈຮັກຊາດ,

ຮັກບ້ານເກີດເມືອງນອນ, ເພີ່ມທະວີນ້ຳໃຈເສຍສະຫຼະ, ເພິ່ງຕົນເອງ, ກຸ້ມຕົນເອງ, ສ້າງຄວາມເຂັ້ມແຂງຮອບດ້ານ ເພື່ອຫຼຸດພົ້ນອອກຈາກຄວາມທຸກຍາກ ແລະ ມີພື້ນຖານເພື່ອສືບຕໍ່ກ້າວຂຶ້ນໄປສູ່ຄວາມຢູ່ດີກິນດີ, ເອົາໃຈໃສ່ປົກປັກຮັກສາ ແລະ ສ້າງສາວັດວາອາຮາມ, ປູຊະນີຍະສະຖານ, ສະຖານທີ່ສັກກາລະບູຊາໃຫ້ໝັ້ນຄົງຖາວອນ.

10. ສ້າງຕັ້ງ, ສົ່ງເສີມ ມູນນິທິສົງ, ກອງທຶນສູນກາງອົງການພຸດທະສາສະໜາສັມພັນ ແຫ່ງ ສປປ ລາວ ແລະ ຂອງອົງການພຸດທະສາສະໜາຂັ້ນຕ່າງໆ ໃນການລະດົມທຶນ ເພື່ອສ້າງເງື່ອນໄຂ ແລະ ເອື້ອອຳນວຍຄວາມສະດວກໃນການເຄື່ອນໄຫວວຽກງານຂອງຕົນ ໃຫ້ດີຂຶ້ນກວ່າເກົ່າ;

11. ສືບຕໍ່ວຽກງານ ການພົວພັນຮ່ວມມືກັບອົງການຈັດຕັ້ງຊາວພຸດ, ອົງການຈັດຕັ້ງສາສະໜາອື່ນ ທີ່ຢູ່ພາຍໃນ ແລະ ຕ່າງປະເທດ, ນັບທັງອອກຕົນຍາດໂຍມເຊື້ອຊາດລາວ ທີ່ອາໄສຢູ່ຕ່າງປະເທດ ເພື່ອຂົນຂວາຍໃຫ້ໄດ້ມາເຊິ່ງການຊ່ວຍເຫຼືອ, ການອຸປະຖຳທາງດ້ານທຶນຮອນ ແລະ ວັດຖຸປັດໄຈອື່ນໆໃຫ້ໄດ້ຫຼາຍກວ່າເກົ່າ.

## III. ແຜນພັດທະນາອົງການພຸດທະສາສະໜາສັມພັນ ແຫ່ງ ສປປ ລາວ 5 ປີຕໍ່ໜ້າ

### ແຜນງານທີ 1 ວຽກງານສຶກສາອົບຮົມ ແລະ ເຕົ້າໂຮມຄວາມສາມັກຄີ

ສຶກສາອົບຮົມ ພຣະສົງ, ສາມະເນນ, ພໍ່ຂາວ, ແມ່ຂາວ ແລະ ພຸດທະສາສະນິກະຊົນລາວບັນດາເຜົ່າໃຫ້ມີຄວາມໜັກແໜ້ນ ເຄັ່ງຄັດໃນການປະຕິບັດຫຼັກພຣະທັມມະວິນັຍ, ທັມມະນູນສົງລາວ, ກົດໝາຍ ແລະ ລະບຽບການ ພ້ອມທັງຮັກສາມູນເຊື້ອຄວາມສາມັກຄີອັນດີງາມ ຂອງອົງການພຸດທະສາສະໜາສັມພັນ ແຫ່ງ ສປປ ລາວ.

ຕ້ານ ແລະ ສະກັດກັ້ນ ປະກົດການຫຍໍ້ທໍ້ກ່ຽວກັບພຶດຕິກຳທີ່ບໍ່ສອດຄ່ອງຕາມຫຼັກພຣະທັມມະວິນັຍ, ທັມມະນູນສົງລາວ, ກົດໝາຍ ແລະລະບຽບ

ການຂອງພຣະສົງ, ສາມະເນນ, ພໍ່ຂາວ, ແມ່ຂາວ ແລະ ພຸດທະສາສະນິກະຊົນຈຳນວນໜຶ່ງ.

ເພື່ອໃຫ້ບັນລຸເປົ້າໝາຍພັດທະນາວຽກງານສຶກສາອົບຮົມ ແລະ ເຕົ້າໂຮມຄວາມສາມັກຄີ, ຈະປະກອບມີ 2 ໂຄງການ ຄື:

ໂຄງການຄົ້ນຄວ້າວິທະຍາສາດ ກ່ຽວກັບອົງການພຸດທະສາສະໜາໃນໄລຍະໃໝ່. ຄາດຄະເນຈະນຳໃຊ້ງົບປະມານ 350,000,000 ກີບ;

ໂຄງການໂຄສະນາ ສຶກສາອົບຮົມ, ເຕົ້າໂຮມ ແລະ ສົ່ງເສີມຄວາມສາມັກຄີປອງດອງໃນຄະນະສົງ ແລະ ພຸດທະສາສະນິກກະຊົນບັນດາເຜົ່າ, ຄາດຄະເນຈະນຳໃຊ້ງົບປະມານທັງໝົດ 760,000,000 ກີບ.

### ແຜນງານທີ 2 ພັດທະນາວຽກງານຫ້ອງການບໍລິຫານງານ

ສ້າງເງື່ອນໄຂຮອບດ້ານ ເພື່ອຊຸກຍູ້ ແລະ ອຳນວຍຄວາມສະດວກໃຫ້ແກ່ແຕ່ລະກັມມາທິການ ຂອງອົງການພຸດທະສາສະໜາ ນັບແຕ່ຂັ້ນສູນກາງຮອດຂັ້ນທ້ອງຖິ່ນ. ລົງເຄື່ອນໄຫວວຽກງານຕາມພາຣະບົດບາດ, ຂອບເຂດສິດ ແລະ ໜ້າທີ່ ຂອງຕົນໂດຍປະສານສົມທົບກັບອົງການຈັດຕັ້ງພັກ-ລັດ ທີ່ກ່ຽວຂ້ອງ.

ສ້າງຄວາມເຂັ້ມແຂງທາງດ້ານວຽກງານບໍລິຫານ ໃຫ້ກັບຄະນະບໍລິຫານງານພຣະສົງຂັ້ນແຂວງ, ຂັ້ນເມືອງ ໃຫ້ມີຄວາມສາມາດໃນການຈັດຕັ້ງຄຸ້ມຄອງແຜນວຽກ ແລະ ແຜນງົບປະມານໃຫ້ຖືກຕ້ອງສອດຄ່ອງກັບລະບຽບການຕ່າງໆ ທີ່ວາງອອກໃນແຕ່ລະໄລຍະ.

ເພື່ອໃຫ້ບັນລຸເປົ້າໝາຍພັດທະນາວຽກງານຫ້ອງການບໍລິຫານງານຈະຕ້ອງປະຕິບັດໃຫ້ໄດ້ທັງໝົດ 6 ໂຄງການ, 14 ກິດຈະກຳ ດັ່ງນີ້:

**<u>ໂຄງການ ທີ 1:</u>** ສ້າງຄວາມເຂັ້ມແຂງດ້ານວຽກງານເຕັກໂນໂລຊີ ທັນເປັນທັນສະໄໝ ໂດຍສະເພາະວຽກງານການຄຸ້ມຄອງທາງດ້ານເອກະສານ, ປະກອບມີ 2 ກິດຈະກຳ, ຄາດຄະເນຈະນຳໃຊ້ງົບປະມານທັງໝົດ 500,000,000 ກີບ

**<u>ໂຄງການທີ 2:</u>** ຕິດຕາມຊຸກຍູ້ ການປະຕິບັດໜ້າທີ່ຂອງອົງການພຸດທະສາສະໜາສັມພັນລາວຂັ້ນແຂວງ ແລະ ຂັ້ນເມືອງ. ປະກອບມີ 2 ກິດຈະກໍາ ຄາດຄະເນຈະນໍາໃຊ້ງົບປະມານທັງໝົດ 2,800,000,000 ກີບ

**<u>ໂຄງການ ທີ 3:</u>** ສ້າງຄວາມເຂັ້ມແຂງບຸກຄະກອນພຣະສົງ ແລະ ຄາລະວາດ ຂອງອົງການພຸດທະສາສະໜາສັມພັນລາວຂັ້ນແຂວງ ແລະ ຂັນເມືອງ. ປະກອບມີ 1 ກິດຈະກໍາ, ຄາດຄະເນຈະນໍາໃຊ້ງົບປະມານທັງໝົດ 500,000,000 ກີບ

**<u>ໂຄງການ ທີ 4</u>**: ຊຸກຍູ້ ແລະ ສົ່ງເສີມ ການສ້າງຕັ້ງສໍານັກງານອົງການພຸດທະສາສະໜາສັມພັນລາວ ຂັ້ນແຂວງໃຫ້ມີສໍານັກງານເປັນຂອງຕົນເອງ. ປະກອບມີ 3 ກິດຈະກໍາ, ຄາດຄະເນຈະນໍາໃຊ້ງົບປະມານທັງໝົດ 760,000,000ກີບ

**<u>ໂຄງການທີ 5:</u>** ສ້າງ ແລະ ປັບປຸງບັນດານິຕິກໍາ ທີ່ກ່ຽວຂ້ອງກັບການເຄື່ອນໄຫວວຽກງານຂອງອົງການພຸດທະສາສະໜາສັມພັນ ແຫ່ງ ສປປ ລາວ. ປະກອບມີ 5 ກິດຈະກໍາ, ຄາດຄະເນຈະນໍາໃຊ້ງົບປະມານທັງໝົດ 1,750,000,000ກີບ

**<u>ໂຄງການທີ 6:</u>** ສືບຕໍ່ໂຄງການຈັດພິມ ແລະ ແຈກຢາຍ ພຣະໄຕຣປິດົກສະບັບພາສາປາລີ ແລະ ສະບັບພາສາລາວ. ປະກອບມີ 2 ກິດຈະກໍາ, ຄາດຄະເນຈະນໍາໃຊ້ງົບປະມານທັງໝົດ 41,500,000,000ກີບ

**ແຜນງານທີ 3 ພັດທະນາວຽກງານການຈັດຕັ້ງສົງ**

ພັດທະນາພື້ນຖານໂຄງລ່າງ ແລະ ປັບປຸງແບບແຜນວິທີເຮັດວຽກຂອງອົງການພຸດທະສາສະໜາ ສັມພັນ ແຫ່ງ ສປປ ລາວ ຢູ່ຂັ້ນຕ່າງໆ ໃຫ້ເປັນລະບົບຢ່າງຄົບຊຸດ, ມີຄວາມທັນສະໄໝ, ມີຄວາມສະດວກວ່ອງໄວ ແລະ ຖືກຕ້ອງສອດຄ່ອງກັບແນວທາງນະໂຍບາຍປ່ຽນແປງໃໝ່ ຂອງພັກ-ລັດ ວາງອອກໃນແຕ່ລະໄລຍະ.

ເພື່ອໃຫ້ບັນລຸເປົ້າໝາຍພັດທະນາວຽກງານກັມມາທິການປົກຄອງສົງຈະຕ້ອງປະຕິບັດໃຫ້ໄດ້ທັງໝົດ 5 ໂຄງການ, 8 ກິດຈະກໍາ

**<u>ໂຄງການທີ 1:</u>** ສ້າງຄວາມເຂັ້ມແຂງວຽກງານປົກຄອງສົງຂັ້ນແຂວງ, ຂັ້ນເມືອງ ແລະ ຂັ້ນວັດ ມີ 2 ກິດຈະກໍາ, ຄາດຄະເນຈະນໍາໃຊ້ງົບປະມານທັງໝົດ 400,000,000 ກີບ

**<u>ໂຄງການ ທີ 2:</u>** ເກັບກໍາສະຖິຕິພຣະສົງ ປະກອບມີ 1 ກິດຈະກໍາ, ຄາດຄະເນຈະນໍາໃຊ້ງົບປະມານທັງໝົດ 75,000,000 ກີບ

**<u>ໂຄງການ ທີ 3:</u>** ອອກປຶ້ມສໍາມະໂນຄົວ, ໜັງສືສຸດທິ ແລະ ບັດປະຈໍາຕົວດິຈິຕໍລ໌ ປະກອບມີ 1 ກິດຈະກໍາ, ຄາດຄະເນຈະນໍາໃຊ້ງົບປະມານທັງໝົດ 470,000,000 ກີບ

**<u>ໂຄງການທີ 4:</u>** ເຜີຍແຜ່ທັມມະນູນສົງລາວ ແລະ ນິຕິປິ່ນອ້ອມ ໃຫ້ແກ່ ຄະນະ ອພສ ແຂວງ, ເມືອງ ແລະ ເຈົ້າອະທິການວັດ, ປະກອບມີ 2 ກິດຈະກໍາ, ຄາດຄະເນຈະນໍາໃຊ້ງົບປະມານທັງໝົດ 380,000,000ກີບ

**<u>ໂຄງການ ທີ 5:</u>** ຫັນເປັນທັນສະໄໝໃນການຄຸ້ມຄອງພຣະສົງ-ສາມະເນນ ທົ່ວປະເທດ ປະກອບມີ 2 ກິດຈະກໍາ, ຄາດຄະເນຈະນໍາໃຊ້ງົບປະມານທັງໝົດ 750,000,000 ກີບ

### ແຜນງານທີ 4 ວຽກງານກັມມາທິການສຶກສາສົງ

ຍົກສູງການສຶກສາສົງ ດ້ານປະລິຍັດຕິທັມ ແລະ ສາມັນສຶກສາສົງຄຽງຄູ່ກັນໄປ ເພື່ອຮັບປະກັບຄຸນນະພາບ ຄວາມຮູ້ ແລະ ວິຊາການຮ່ວມສະໄໝໃຫ້ພຣະພິກຂຸ, ສາມະເນນ, ພໍ່ຂາວ ແລະ ແມ່ຂາວ.

ເພື່ອໃຫ້ບັນລຸເປົ້າໝາຍພັດທະນາວຽກງານກັມມາທິການສຶກສາສົງ ຈະຕ້ອງປະຕິບັດໃຫ້ໄດ້ທັງໝົດ 3 ໂຄງການ, 8 ກິດຈະກໍາ

**ໂຄງການ ທີ 1:** ສົ່ງເສີມການສຶກສາທາງດ້ານປະລິຍັດຕິທັມໃຫ້ແກ່ພຣະສົງ, ສາມະເນນ, ພໍ່ຂາວ ແລະ ແມ່ຂາວ ໃນຂອບເຂດທົ່ວປະເທດ, ປະກອບມີ 2 ກິດຈະກໍາ, ຄາດຄະເນຈະນໍາໃຊ້ງົບປະມານທັງໝົດ 850,000,000 ກີບ

**ໂຄງການທີ 2:** ຊຸກຍູ້, ສົ່ງເສີມ ການຂະຫຍາຍໂຮງຮຽນຊັ້ນປະຖົມ, ມັດທະຍົມຕອນຕົ້ນ ແລະ ຕອນປາຍ ໄປຍັງບັນດາເມືອງຕ່າງໆ ໃນຂອບເຂດ

ທົ່ວປະເທດ, ປະກອບມີ 3 ກິດຈະກຳ, ຄາດຄະເນຈຳນຳໃຊ້ງົບປະມານທັງໝົດ 1,750,000,000 ກີບ

**ໂຄງການທີ 3:** ສ້າງບຸກຄະລາກອນພຣະສົງ ແລະ ຄາລະວາດ ໃຫ້ມີຄວາມເຂັ້ມແຂວງທາງດ້ານວິຊາການ, ປະກອບມີ 3 ກິດຈະກຳ, ຄາດຄະເນຈະນຳໃຊ້ງົບປະມານທັງໝົດ 950,000,000 ກີບ.

## ແຜນງານທີ 5 ວຽກງານກັມມາທິການເຜີຍແຜ່ສີລະທັມ ແລະ ປະຕິບັດກັມມະຖານ

ປັບປຸງກົງຈັກ ແລະ ບຸກຄະລາກອນສົງ ຂັ້ນສູນກາງ ແລະ ຂັ້ນທ້ອງຖິ່ນໃຫ້ມີຄວາມເໝາະສົມສາມາດຈັດຕັ້ງການຝຶກອົບຮົມ, ການເຜີຍແຜ່ ແລະ ການຜັນຂະຫຍາຍບັນດານິຕິກຳ, ຄຳສັ່ງ ແລະ ວຽກງານ ຈຸດສຸມຕ່າງໆ ຂອງອົງການພຸດທະສາສະໜາສັມພັນ ແຫ່ງ ສປປ ລາວ ທີ່ວາງອອກ ໃນແຕ່ລະໄລຍະ.

ເພື່ອໃຫ້ບັນລຸເປົ້າໝາຍພັດທະນາວຽກງານກັມມາທິການເຜີຍແຜ່ສີລະທັມ ແລະ ປະຕິບັດກັມມະຖານ ຈະຕ້ອງປະຕິບັດໃຫ້ໄດ້ທັງໝົດ 3 ໂຄງການ, 10 ກິດຈະກຳ

**ໂຄງການ ທີ 1:** ສ້າງຄວາມເປັນເອກະພາບທາງດ້ານເນື້ອໃນ ຂອງການເຜີຍແຜ່ສີລະທັມ ໃນຂອບເຂດທົ່ວປະເທດ, ປະກອບມີ 4 ກິດຈະກຳ, ຄາດຄະເນຈະນຳໃຊ້ງົບປະມານທັງໝົດ 970,000,000 ກີບ

**ໂຄງການ ທີ 2:** ສ້າງລະບຽບໃນການຄຸ້ມຄອງ ແລະ ຂະຫຍາຍສູນປະຕິບັດ, ປະກອບມີ 3 ກິດຈະກຳ, ຄາດຄະເນຈະນຳໃຊ້ງົບປະມານທັງໝົດ 1,500,000,000 ກີບ;

**ໂຄງການ ທີ 3:** ສ້າງບຸກຄະລາກອນ ວິປັດສະນາຈານ ໃນດ້ານການເຜີຍແຜ່ສີລະທັມ, ຈະປະກອບມີ 3 ກິດຈະກຳ, ຄາດຄະເນຈະນຳໃຊ້ງົບປະມານທັງໝົດ 950,000,000 ກີບ.

**ແຜນງານທີ 6 ວຽກງານກັມມາທິການສາທາຣະນູປະການ**

ເສີມຂະຫຍາຍບົດບາດ ນຳໜ້າພາທາງ ຂອງພຣະພິກຂຸ, ສາມະເນນ, ພໍ່ຂາວ ແລະ ແມ່ຂາວ ເອົາໃຈໃສ່ປົກປັກຮັກສາ ແລະ ສ້າງສາວັດວາອາຮາມ, ປູຊະນີຍະສະຖານ, ສະຖານທີ່ສັກກາຣະບູຊາ ໃຫ້ໝັ້ນຄົງຖາວອນ.

ເພື່ອໃຫ້ບັນລຸເປົ້າໝາຍພັດທະນາວຽກງານກັມມາທິການ ສາທາຣະນູປະການ ຈະຕ້ອງປະຕິບັດໃຫ້ໄດ້ທັງໝົດ 3 ໂຄງການ, 10 ກິດຈະກຳ

**ໂຄງການ ທີ 1:** ຫັນເອົາໂຄງການທີ່ກໍ່ສ້າງສຳເລັດ ແລະ ກຳລັງກໍ່ສ້າງໃໝ່ ຂອງບັນດາວັດຕ່າງໆ ໃນຂອບເຂດທົ່ວປະເທດ ເຂົ້າສູ່ລະບຽບການຂອງລັດທີ່ວາງອອກໃນແຕ່ລະໄລຍະ, ຈະປະກອບມີ 4 ກິດຈະກຳ, ຄາດຄະເນຈະນຳໃຊ້ງົບປະມານທັງໝົດ 950,000,000 ກີບ

**ໂຄງການ ທີ 2:** ເກັບສະຖິຕິ ປູຊະນີຍະສະຖານ, ບູຮານສະຖານທີ່ກ່ຽວຂ້ອງກັບພຸດທະສາສະໜາ, ຈະປະກອບມີ 2 ກິດຈະກຳ, ຄາດຄະເນຈະນຳໃຊ້ງົບປະມານທັງໝົດ 560,000,000 ກີບ

**ໂຄງການ ທີ 3:** ປະສານສົມທົບ ກັບກັມມາທິການປົກຄອງສົງຈັດສົ່ງພຣະສົງໄປຈຳພັນສາ ແລະ ນຳພາສ້າງສາ ຢູ່ໃນວັດທີ່ບໍ່ມີພຣະສົງຈຳພັນຢູ່, ປະກອບມີ 4 ກິດຈະກຳ, ຄາດຄະເນຈະນຳໃຊ້ງົບປະມານທັງໝົດ 760,000,000 ກີບ.

**ແຜນງານທີ 7 ວຽກງານກັມມາທິການ ການຕ່າງປະເທດ**

ສ້າງສູນ ຄົ້ນຄວ້າ ເພື່ອການສຶກສາ ແລະ ແລກປ່ຽນທາງດ້ານສາສະໜາ, ຮີດຄອງປະເພນີ, ວັດທະນະທັມອັນດີງາມ ທີ່ເປັນເອກະລັກຂອງຊາດທີ່ຕິດພັນກັບພຣະພຸດທະສາສະໜາ ດ້ວຍຫຼາຍຮູບການກັບບັນດາປະເທດທີ່ເປັນສະມາຊິກສະມາຄົມອາຊຽນ, ພາກພື້ນ ແລະ ສາກົນ;

ສ້າງ ແລະ ຂະຫຍາຍວັດທີ່ມີພື້ນຖານໃຫ້ສາມາດຮອງຮັບເອົາການຂະຫຍາຍຕົວ ແລະ ການເຊື່ອມໂຍງກັບບັນດາປະເທດອາຊຽນ, ພາກພື້ນ ແລະ ສາກົນ.

ເພື່ອໃຫ້ບັນລຸເປົ້າໝາຍພັດທະນາວຽກງານກັມມາທິການການຕ່າງປະເທດ ຈະຕ້ອງປະຕິບັດໃຫ້ໄດ້ທັງໝົດ 2 ໂຄງການ, 6 ກິດຈະກຳ

**ໂຄງການ ທີ 1:** ສືບຕໍ່ສ້າງພຣະທັມມະທູດລາວ ໃຫ້ມີຄວາມເຂັ້ມແຂງທາງດ້ານການເຜີຍແຜ່ພຸດທະສາສະໜາ, ຈະປະກອບມີ 5 ກິດຈະກຳ, ຄາດຄະເນຈະນຳໃຊ້ງົບປະມານທັງໝົດ 560,000,000 ກີບ;

**ໂຄງການ ທີ 2:** ຮ່າງລະບຽບການຄຸ້ມຄອງພຣະສົງ-ສາມະເນນ ລາວທີ່ເຄື່ອນໄຫວຢູ່ຕ່າງປະເທດ, ຈະປະກອບມີ 5 ກິດຈະກຳ, ຄາດຄະເນຈະນຳໃຊ້ງົບປະມານທັງໝົດ 870,000,000 ກີບ.

**ງ. ມາດຕະການໃນການຈັດຕັ້ງປະຕິບັດ**

ແຕ່ລະຂັ້ນ ເພື່ອເຮັດໃຫ້ເນື້ອໃນຈິດໃຈບົດລາຍງານ ໃນກອງປະຊຸມໃຫຍ່ຂອງອົງການພຸດທະສາສະໜາ ສັມພັນ ແຫ່ງ ສປປ ລາວ ນຳເຂົ້າໄປສູ່ພາກປະຕິບັດຕົວຈິງ ໃຫ້ໄດ້ຮັບໝາກຜົນດີ, ອົງການພຸດທະສາສະໜາສັມພັນແຫ່ງ ສປປ ລາວ ພວກເຮົາຕ້ອງເອົາໃຈໃສ່ປະຕິບັດບັນດາມາດຕະການ ດັ່ງລຸ່ມນີ້:

1. ຕ້ອງແບ່ງຄວາມຮັບຜິດຊອບລະຫວ່າງຄະນະບໍລິຫານງານອົງການພຸດທະສາສະໜາສັມພັນ ແຫ່ງ ສປປ ລາວ ແຕ່ລະຂັ້ນ ໂດຍສະເພາະແມ່ນການມອບວຽກໃຫ້ອົງການພຸດທະສາສະໜາຂັ້ນເມືອງ ເປັນຜູ້ຈັດຕັ້ງນຳພາ, ຄຸ້ມຄອງຢ່າງມີແຜນການ ແລະ ມີຄວາມຮັບຜິດຊອບສູງ, ໃຫ້ອົງການພຸດທະສາສະໜາຢູ່ຂັ້ນວັດ ເປັນຜູ້ຜັນຂະຫຍາຍຈັດຕັ້ງປະຕິບັດຕົວຈິງ ທຸກວຽກງານທີ່ໄດ້ກຳນົດໄວ້ ໃນບົດລາຍງານ ຂອງກອງປະຊຸມໃຫຍ່ສະບັບນີ້.

2. ເອົາໃຈໃສ່ດຳເນີນວຽກງານກວດກາຢ່າງເປັນປະຈຳ, ເພື່ອເກັບກຳສະພາບການຕ່າງໆ ໃຫ້ແທດກັບຕົວຈິງ, ພ້ອມກັນນັ້ນກໍຍ້ອງຍໍຕໍ່ຜູ້ມີຜົນງານດີ

ເດັ່ນ, ກ່າວເຕືອນ, ລົງວິໄນຜູ້ທີ່ລະເມີດພຣະທັມມະວິໄນ, ທັມມະນູນສົງລາວ, ກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ. ດ້ານໜຶ່ງທີ່ສຳຄັນ ແມ່ນຕ້ອງເອົາໃຈໃສ່ ສ້າງແຜນ ງົບປະມານໃຫ້ພຣະສົງສາມາດລົງຮາກຖານຢ່າງເປັນປົກກະຕິ ເພື່ອຕິດຕາມຊີ້ນຳ ການສ້າງຂະບວນການ ແລະ ລົງຖອດຖອນບົດຮຽນຕົວຈິງຢ່າງແທດເໝາະ ແລະ ທັນກັບເວລາ, ທັງຮູ້ໝູນໃຊ້ໃຫ້ສອດຄ່ອງກັບສະພາບຕົວຈິງ ຂອງທ້ອງຖິ່ນຮາກຖານ.

**ນະມັດສະການ ພຣະເຖຣານຸເຖຣະ, ຈະເລີນພອນບັນດາທ່ານ**
**ອອກຕົນຍາດໂຍມ, ແຂກທີ່ຊົງກຽດ**

ກອງປະຊຸມໃຫຍ່ ສະໄໝທີ IX ຂອງອົງການພຸດທະສາສະໜາສັມພັນ ແຫ່ງ ສປປ ລາວ ພວມດຳເນີນໄປໃນທ່າມກາງບັນຍາກາດອັນອົບອຸ່ນ ອາຕະມາພາບ/ຂ້ານ້ອຍ ຂໍຖືໂອກາດນີ້ ຮຽກຮ້ອງມາຍັງຜູ້ແທນພຣະສົງທຸກອົງທີ່ຢູ່ໃນກອງປະຊຸມໃຫຍ່ອັນຊົງກຽດນີ້, ຮຽກຮ້ອງມາຍັງບັນດາຄະນະກັມມະການບໍລິຫານງານ ອົງການພຸດທະສາສະໜາສັມພັນ ແຫ່ງ ສປປ ລາວ ໃນທຸກຂັ້ນ ກໍຄືອອກຕົນຍາດໂຍມຊາວພຸດລາວບັນດາເຜົ່າ ຈົ່ງສາມັກຄີກັນເຂົ້າເປັນກ້ອນກຳລັງແຮງມະຫາສານ, ສືບຕໍ່ເສີມຂະຫຍາຍມູນເຊື້ອອັນສະຫງ່າຣາສີຂອງອົງການພຸດທະສາສະໜາສັມພັນ ແຫ່ງ ສປປ ລາວ ເພື່ອພ້ອມກັນຈັດຕັ້ງປະຕິບັດ ເນື້ອໃນຈິດໃຈທີ່ ກອງປະຊຸມໃຫຍ່ຄັ້ງນີ້ ໄດ້ວາງອອກ ໃຫ້ໄດ້ບັນລຸຜົນສຳເລັດໃຫຍ່ຫຼວງຂຶ້ນໄປເລື້ອຍໆ.

ພວກເຮົາຈົ່ງສາມັກຄີກັນ, ໃຊ້ສະຕິປັນຍາ ແລະ ຫົວຄິດປະດິດສ້າງ ເຮັດໃຫ້ວຽກງານ ຂອງອົງການພຸດທະສາສະໜາສັມພັນ ແຫ່ງ ສປປ ລາວ ກາຍເປັນການກະທຳຕົວຈິງໃນຊີວິດປະຈຳວັນ ຂອງອອກຕົນຍາດໂຍມລາວບັນດາເຜົ່າ ໃນທົ່ວປະເທດ; ອຸດສາຫະພາກພຽນພະຍາຍາມ ເຮັດໃຫ້ພຣະພຸດທະສາສະໜາຈະເລີນຮຸ່ງເຮືອງກ້າວໜ້າ, ອອກຕົນຍາດໂຍມຮັ່ງມີ, ປະເທດຊາດເຂັ້ມແຂງ, ສັງຄົມມີຄວາມສະເໝີພາບ, ສີວິໄລ ແລະ ຍຸຕິທັມ.

**ຂໍນະມັດສະການ/ຈະເລີນພອນ**
**ຂໍຂອບໃຈ**

# ບົດລາຍງານ
# ຜົນກອງປະຊຸມຄັ້ງປະຖົມມະຣືກ ຄະນະບໍລິຫານງານ
# ສູນກາງອົງການພຸດທະສາສະໜາສົມພັນ ແຫ່ງ ສປປ ລາວ
# ສະໄໝທີ IX

ພຣະອາຈານ ບຸນສ່ວນ ພັນທະວົງ

ຮອງປະທານ ສູນກາງອົງການພຸດທພສາສພໜາສັມພັນ ແຫ່ງ ສປປ ລາວ

-ຂໍນ້ອມໄຫວ້: ພຣະຣັດຕະນະໄຕຣ ທີ່ເຄົາລົບຢ່າງສູງສຸດ

-ນ້ອມນະມັດສະການ/ຈະເລີນພອນ: ຄະນະປະທານກອງປະຊຸມທີ່ເຄົາລົບ ແລະ ນັບຖືຢ່າງສູງ

-ພຣະເຖຣານຸເຖຣະ ທີ່ເຄົາລົບ.

-ບັນດາທ່ານການນຳພັກ-ລັດ ຜູ້ແທນກອງປະຊຸມ, ແຂກຜູ້ຊົງກຽດ ຜູ້ຊົງຄຸນວຸດທິພຸດທະສາສະນິກະຊົນ ທຸກທ່ານ ທີ່ນັບຖື ແລະ ຮັກແພງ.

- ອີງຕາມ ທັມມະນູນສົງລາວ, ສະບັບເລກທີ 96/ອພສ, ລົງວັນທີ 15 ທັນວາ 2022;
- ອີງຕາມ ຜົນການຄົ້ນຄວ້າຮັບຮອງຄະນະບໍລິຫານງານ ສູນກາງອົງການພຸດທະສາສະໜາສົມພັນ ແຫ່ງ ສປປ ລາວ ສະໄໝທີ IX ໃນກອງປະຊຸມຄັ້ງປະຖົມມະຣືກ;

ຂ້ານ້ອຍ, ອາຕະມາ ຕາງໜ້າໃຫ້ຄະນະຮັບຜິດຊອບບຸກຄະລາກອນ ຂໍລາຍງານຜົນກອງປະຊຸມຄັ້ງປະຖົມມະຣືກຄະນະບໍລິຫານງານສູນກາງອົງການພຸດທະສາສະໜາສົມພັນ ແຫ່ງ ສປປ ລາວ ສະໄໝທີ 9 ມີລາຍລະອຽດ ດັ່ງນີ້:

I. ຄະນະກັມມະການບໍລິຫານງານສູນກາງອົງການພຸດທະສາສະໜາສັມພັນແຫ່ງ ສປປ ລາວ ຈໍານວນ 99 ອົງ ປະກອບມີ:

1. ພຣະອາຈານໃຫຍ່ ມະຫາເຫວດ ມະເສໄນ
2. ພຣະອາຈານ ມະຫາຄໍາມາ ປັນຍາວິຈິດ
3. ພຣະອາຈານ ບຸນສ່ວນ ພັນທະວົງ
4. ພຣະອາຈານ ບຸນທະວີ ປະສິດທິສັກ
5. ພຣະອາຈານ ສີທົນ ໄຊຍະວົງສອນ
6. ພຣະອາຈານ ອະທິປະໄຕ ໄມຕີຈິດ
7. ພຣະອາຈານ ປອ. ພວງປະເສີດ ພູມາວົງ
8. ພຣະອາຈານ ປອ. ດໍາຣົງ ພົມມະຈັກ
9. ພຣະອາຈານ ວັນຄໍາ ວົງສາສຸລິນ
10. ພຣະອາຈານ ປອ. ຖາວອນ ຕາພອນປະເສີດ
11. ພຣະອາຈານ ດາວເຮືອງ ຄໍາປະເສີດ
12. ພຣະອາຈານ ຄໍາວັນ ວໍລະເດດ
13. ພຣະອາຈານ ສຸວັນ ຈັນທະລາດ
14. ພຣະອາຈານ ອ່ອນແກ້ວ ສິດທິວົງ
15. ພຣະອາຈານ ປອ. ດາວສະເດັດ ເລີດມະນີ
16. ພຣະອາຈານ ບຸນປອນ ສອນສັກສິດ
17. ພຣະອາຈານ ບຸນເສີຍ ເພົາພາສິດ
18. ພຣະອາຈານ ພົງສະຫວັນ ອານຸສິນ
19. ພຣະອາຈານ ປອ. ອໍາມະລິນ ບຸນວິເສດ
20. ພຣະອາຈານ ບຸນທະວີ ສີບຸນເຮືອງ
21. ພຣະອາຈານ ກິແກ້ວ ຈັນທະນົງສີ
22. ພຣະອາຈານ ລໍາເງິນ ສຸວັນນະສານ
23. ພຣະອາຈານ ປອ.ສີສຸກ ສະເຫຼີມຄຸນ
24. ພຣະອາຈານ ທອງເສີມ ສີບຸນເຮືອງ
25. ພຣະອາຈານ ພັນທອງ ໂພມີໄຊ

26. พระอาจาน พูคำ แก้วปะทุม
27. พระอาจาน คำหมั้น สิสะหวัด
28. พระอาจาน อุດົມ แหวนคำ
29. พระอาจาน มะหาอุดอน อะนุตตะโร
30. พระอาจาน สอน นิมแก้วนาม
31. พระอาจาน อินปัน พิลาวัน
32. พระอาจาน อ้วน ວົງມະລິ
33. พระอาจาน คำสุภ ทองจำปา
34. พระอาจาน ทะวิไຊ พูมປະເສີດ
35. พระอาจาน หุมเพ้ງ ພັນທະສາໂຣ
36. พระอาจาน พอนสะหวັນ ພູມປະເສີດ
37. พระอาจาน ປອ. ຂັນໄຊ ສີສຸດາ
38. พระอาจาน ໄຊຍະເດດ ວົງໂສພາ
39. พระอาจาน ຂວັນໃຈ ວິໄຊຍະເສີດ
40. พระอาจาน ບຸນທັນ ແກ້ວບຸນກອງ
41. พระอาจาน ແກ້ວພະຈັນ ຍົດປັນຍາ
42. พระอาจาน ມະຫາວຽງສັກ ເດດສີສະຫວັດ
43. พระอาจาน ຄຳປານ ແສນບຸດຕະລາດ
44. พระอาจาน ຄຳມົນ ສຸທັມມະໂກສານ
45. พระอาจาน ປອ.ບຸນຈັນ ຈັນທະສິດ
46. พระอาจาน ບຸນລ່ວມ ອິນສີຊຽງໃໝ່
47. พระอาจาน ພົມມະລິນ ສີສຸລິນທອນ
48. พระอาจาน ປອ. ມະຫາໂສພາ ສີບຸນເຮືອງ
49. พระอาจาน ຖະໜອມສັກ ທອງຄຳມີ
50. พระอาจาน ໄຊຊະນະ ບຸນທະວົງ
51. พระอาจาน ສົມກຽດ ຄຳເພັດມີໄຊ
52. พระอาจาน ປອ. ອານັນທະສັກ ພັດທະສີລາ
53. พระอาจาน ສຳນຽງ ບຸບຜາວົງ

54. พระอาจาน ปอ.ไพวัน มาลาวົງ
55. พระอาจาน อุไທ ສຳວຽງໄຊ
56. พระอาจาน ສອນເພັດ ວົງມະນີ
57. พระอาจาน ບຸນທະວີ ມ່ວງຄຳສີ
58. พระอาจาน ສີສະຫວາດ ເພັດສະຫວັນ
59. พระอาจาน ບຸນມາ ຫອມສົມບັດ
60. พระอาจาน ດາດສະດາ ຊາຕິກະເມທີ
61. พระอาจาน ອາໂນຊາ ໄມຕີຈິດ
62. พระอาจาน ມະຫາສິງຫາ ໄຊ່ອຳພອນ
63. พระอาจาน ອາລຸນ ວົງພັກດີ
64. พระอาจาน ທອງລອນ ມະຫາວົງ
65. พระอาจาน ສິງໄຊ ທຳມະວົງ
66. พระอาจาน ສົມບູນ ວິລະວົງ
67. พระอาจาน ໝີນ້ອຍ ຊາມົນຕີ
68. พระอาจาน ສົມຈັນ ຂັນຕິສັກ
69. พระอาจาน ສົມພອນ ແສງພະຈັນ
70. พระอาจาน ດວງຈັນ ວົງພາສີ
71. พระอาจาน ບຸນທຳ ບຸນວົງ
72. พระอาจาน ຄຳແພງເພັດ ຄູນປະເສີດ
73. พระอาจาน ຄຳຜຸຍ ບຸບຜາພອນ
74. พระอาจาน ວັດຊະຣະ ຂັດຕິຍະ
75. พระอาจาน ປອ. ໄຊຍະພອນ ສີປັນຍາ
76. พระอาจาน ຈັນທະລິນ ອຸດົມສຸກ
77. พระอาจาน ບົວວັນ ປຸນຍະສາໂຣ
78. พระอาจาน ບຸນທຽນ ປັນຍາແກ້ວ
79. พระอาจาน ສົມພອນ ຄຳຈະເລີນ
80. พระอาจาน ລຳພັນ ບຸນມີໄຊ
81. พระอาจาน ວັນສົມ ບຸດດາວົງ

82. พระອາຈານ ພົມມາ ເຮືອງສະໝອນ
83. ພຣະອາຈານ ຕຸງ ຈັນທະວົງ
84. ພຣະອາຈານ ແຫຼ້ ລັດສະໝີ
85. ພຣະອາຈານ ຄຳປັນ ອິນທະວົງ
86. ພຣະອາຈານ ຫວາງ ພົມມະວົງ
87. ພຣະອາຈານ ວັນເພັນ ໄຊຍະສອນ
88. ພຣະອາຈານ ພອນທິບ ເພັງພົມມະຈັນ
89. ພຣະອາຈານ ປານ ສຸພັນໂທ
90. ພຣະອາຈານ ແກ້ວອຸດອນ ໂຊຕິທຳໂມ
91. ພຣະອາຈານ ຈັນດາ ເຄນສັກດາ
92. ພຣະອາຈານ ປອ.ສີປະເສີດ ໄຊຍະປັນຍາ
93. ພຣະອາຈານ ສູນທອນ ຈັນທະວັງໂສ
94. ພຣະອາຈານ ຣສ.ປອ. ຄຳຕູ້ ອິນທະວົງ
95. ພຣະອາຈານ ໂສພາ ປັດໂຊໂຕ
96. ພຣະອາຈານ ບຸນໂຖ້ຍ ໄຊຍະບຸດ
97. ພຣະອາຈານ ສີສະຫວາດ ເທບວົງສາ
98. ພຣະອາຈານ ວຽງສັນ ມະນີຣັດ
99. ພຣະອາຈານ ສຸບິນ ແກ້ວປະເສີດ

**II. ຄະນະກຳມະການບໍລິຫານງານປະຈຳການ ສູນກາງອົງການພຸດທະສາສະໜາສັມພັນ ແຫ່ງ ສປປ ລາວ ຈຳນວນ 26 ອົງ ປະກອບດ້ວຍ**

1. ພຣະອາຈານ ມະຫາເຫວດ ມະເສໄນ
2. ພຣະອາຈານ ມະຫາຄຳມາ ປັນຍາວິຈິດ
3. ພຣະອາຈານ ບຸນສ່ວນ ພັນທະວົງ
4. ພຣະອາຈານ ບຸນທະວີ ປະສິດທິສັກ
5. ພຣະອາຈານ ສີທົນ ໄຊຍະວົງສອນ
6. ພຣະອາຈານ ອະທິປະໄຕ ໄມຕີຈິດ
7. ພຣະອາຈານ ປອ. ພວງປະເສີດ ພູມາວົງ
8. ພຣະອາຈານ ປອ. ດຳຣົງ ພິມມະຈັກ
9. ພຣະອາຈານ ວັນຄຳ ວົງສາສຸລິນ
10. ພຣະອາຈານ ປອ. ຖາວອນ ຕາພອນປະເສີດ
11. ພຣະອາຈານ ດາວເຮືອງ ຄຳປະເສີດ
12. ພຣະອາຈານ ຄຳວັນ ວໍລະເດດ
13. ພຣະອາຈານ ສຸວັນ ຈັນທະລາດ
14. ພຣະອາຈານ ອ່ອນແກ້ວ ສິດທິວົງ
15. ພຣະອາຈານ ປອ. ດາວສະເດັດ ເລີດມະນີ
16. ພຣະອາຈານ ບຸນປອນ ສອນສັກສິດ
17. ພຣະອາຈານ ບຸນເສີຍ ເຜົາພາສິດ
18. ພຣະອາຈານ ພົງສະຫວັນ ອານຸສິນ
19. ພຣະອາຈານ ປອ. ອຳມະລິນ ບຸນວິເສດ
20. ພຣະອາຈານ ບຸນທະວີ ສີບຸນເຮືອງ
21. ພຣະອາຈານ ກິແກ້ວ ຈັນທະນິງສີ
22. ພຣະອາຈານ ລຳເງິນ ສຸວັນນະສານ
23. ພຣະອາຈານ ປອ. ສີສຸກ ສະເຫຼີມຄຸນ
24. ພຣະອາຈານ ທອງເສີມ ສີບຸນເຮືອງ
25. ພຣະອາຈານ ພັນທອງ ໂພມີໄຊ
26. ພຣະອາຈານ ພູຄຳ ແກ້ວປະທຸມ

**III. ຄະນະປະທານ ສູນກາງອົງການພຸດທະສາສະໜາສັມພັນ ແຫ່ງ ສປປ ລາວ ປະກອບມີ 9 ອົງຄື:**

1. ພຣະອາຈານໃຫຍ່ ມະຫາເຫວດ ມະເສໄນ ເປັນປະທານສູນກາງ ອົງການພຸດທະສາສະໜາສັມພັນ ແຫ່ງສປປ ລາວ ຊີ້ນຳລວມ;
2. ພຣະອາຈານ ມະຫາຄຳມາ ປັນຍາວິຈິດ ເປັນຮອງປະທານ ສູນກາງອົງການພຸດທະສາສະໜາສັມພັນ ແຫ່ງ ສປປ ລາວ.
3. ພຣະອາຈານ ບຸນສ່ວນ ພັນທະວົງ, ເປັນຮອງປະທານສູນກາງອົງ ການພຸດທະສາສະໜາສັມພັນແຫ່ງ ສປປ ລາວ, ຜູ້ປະຈຳການ;
4. ພຣະອາຈານ ບຸນທະວີ ປະສິດທິສັກ, ເປັນຮອງປະທານ, ຄວບ ຫົວໜ້າກັມມາທິການ ສາທາຣະນູປະການ;
5. ພຣະອາຈານ ສີຫົນ ໄຊຍະວົງສອນ, ເປັນຮອງປະທານ, ຄວບຫົວ ໜ້າກັມມາທິການເຜີຍແຜ່ສີລະທັມ ແລະ ປະຕິບັດກັມມະ ຖານ;
6. ພຣະອາຈານ ອະທິປະໄຕ ໄມຕີຈິດ, ເປັນຮອງປະທານ, ຄວບຫົວ ໜ້າຫ້ອງການບໍລິຫານງານ;
7. ພຣະອາຈານ ປອ. ພວງປະເສີດ ພູມາວົງ, ເປັນຮອງປະທານ, ຄວບຫົວໜ້າກັມມາທິການສຶກສາສົງ;
8. ພຣະອາຈານ ປອ. ດຳຣົງ ພົມມະຈັກ, ເປັນຮອງປະທານ, ຄວບ ຫົວໜ້າກັມມາທິການ ການຕ່າງປະເທດ.
9. ພຣະອາຈານ ວັນຄຳ ວົງສາສຸລິນ, ເປັນຮອງປະທານ, ຄວບຫົວ ໜ້າກັມມາທິການປົກຄອງສົງ;

IV. ຄະນະທີ່ປຶກສາຂອງຄະນະກຳມະການບໍລິຫານງານ ສູນກາງອົງການພຸດທະສາສະໜາສຳພັນ ແຫ່ງ ສປປ ລາວ ຈຳນວນ 15 ອົງ ປະກອບມີ:

1. ພຣະອາຈານໃຫຍ່ ມະຫານ້ອຍ ຊຸເສນ
2. ພຣະອາຈານໃຫຍ່ ບຸນຍົດ ນິນທະໂຄດ
3. ພຣະອາຈານໃຫຍ່ ມະຫາບຸນມີ ພູມິນ
4. ພຣະອາຈານໃຫຍ່ ມະຫາວັນນາ ສຸລິຍະວົງ
5. ພຣະອາຈານໃຫຍ່ ທອງໃສ ພັນທະວົງ
6. ພຣະອາຈານໃຫຍ່ ບຸນມີ ຍານະວີໂຣ
7. ພຣະອາຈານໃຫຍ່ ສົມພົງ ເມດຕາຈິດໂຕ
8. ພຣະອາຈານໃຫຍ່ ຄຳຄູນ ດວງອາໄພວົງ
9. ພຣະອາຈານໃຫຍ່ ບຸນທັນ ປຸນຍະກາໂມ
10. ພຣະອາຈານໃຫຍ່ ສົມບູນ ສີລີປັນໂຍ
11. ພຣະອາຈານໃຫຍ່ ສົມສະໜຸກ ບຸດຕະລາດ
12. ພຣະອາຈານໃຫຍ່ ຄຳພັນ ຍານະວະໂຣ
13. ພຣະອາຈານໃຫຍ່ ບຸນທາຍ ຈັນທະໄພຈິດ
14. ພຣະອາຈານໃຫຍ່ ຊ້ອຍ ຈັນທະສຸກ
15. ພຣະອາຈານໃຫຍ່ ຄຳເງິນ ຄຳວົງ

V. ຮັບຮອງເອົາຫົວໜ້າຫ້ອການບໍລິຫານງານ, ຫົວໜ້າກັມມາທິການ, ຮອງຫົວໜ້າຫ້ອງການບໍລິຫານງານ ແລະ ຮອງຫົວໜ້າກັມມາທິການ ຂອງຄະນະບໍລິຫານງານສູນກາງອົງການພຸດທະສາສະໜາສຳພັນ ແຫ່ງ ສປປ ລາວ ມີດັ່ງນີ້:

**5.1. ຫ້ອງການບໍລິຫານງານ ສູນກາງ ອພສ ປະກອບມີ:**

1. ພຣະອາຈານ ອະທິປະໄຕ ໄມຕີຈິດ ເປັນຫົວໜ້າຫ້ອງການບໍລິຫານງານ;
2. ພຣະອາຈານ ດາວເຮືອງ ຄຳປະເສີດ ເປັນຮອງຫົວໜ້າຫ້ອງການບໍລິຫານງານ;
3. ພຣະອາຈານ ປອ. ອຳມະລິນ ບຸນວິເສດ ເປັນຮອງຫົວໜ້າຫ້ອງການບໍລິຫານງານ;

**5.2. ກົມມາທິການປົກຄອງສົງ ສູນກາງ ອສພ ປະກອບມີ:**

1. ພຣະອາຈານ ວັນຄຳ ວົງສາສຸລິນ ເປັນຫົວໜ້າກົມມາທິການປົກຄອງສົງ;
2. ພຣະອາຈານ ບຸນປອນ ສອນສັກສິດ ເປັນຮອງຫົວໜ້າກົມມາທິການປົກຄອງສົງ;
3. ພຣະອາຈານ ທອງເສີມ ສີບຸນເຮືອງ ເປັນຮອງຫົວໜ້າກົມມາທິການປົກຄອງສົງ.

**5.3. ກົມມາທິການສຶກສາສົງ ສູນກາງ ອພສ ປະກອບມີ:**

1. ພຣະອາຈານ ປອ. ພວງປະເສີດ ພູມາວົງ ເປັນຫົວໜ້າກົມມາທິການສຶກສາສົງ;
2. ພຣະອາຈານ ກິແກ້ວ ຈັນທະນົງສີ ເປັນຮອງຫົວໜ້າກົມມາທິການສຶກສາສົງ;
3. ພຣະອາຈານ ພັນທອງ ໂພມີໄຊ ເປັນຮອງຫົວໜ້າກົມມາທິການສຶກສາສົງ.

**5.4. ກົມມາທິການເຜີຍແຜ່ສິລະທັມ ແລະ ປະຕິບັດກັມມະຖານ ສູນກາງ ອພສ ປະກອບມີ:**

1. ພຣະອາຈານ ສີທົນ ໄຊຍະວົງສອນ ເປັນຫົວໜ້າກົມມາທິການເຜີຍແຜ່ສິລະທັມ ແລະປະຕິບັດກັມມະຖານ;
2. ພຣະອາຈານ ປອ. ສີສຸກ ສະເຫຼີມຄຸນ ເປັນຮອງຫົວໜ້າກົມມາທິການເຜີຍແຜ່ສິລະທັມ ແລະ ປະຕິບັດກັມມະຖານ;
3. ພຣະອາຈານ ບຸນທະວີ ສີບຸນເຮືອງ ເປັນຮອງຫົວໜ້າກົມມາທິການເຜີຍແຜ່ສິລະທັມ ແລະ ປະຕິບັດກັມມະຖານ.

**5.5. ກັມມາທິການສາທາຣະນູປະການ ສູນກາງ ອພສ ປະກອບມີ:**

1. ພຣະອາຈານ ບຸນທະວີ ປະສິດທິສັກ ເປັນຫົວໜ້າກັມມາທິການ ສາທາລະນູປະການ;
2. ພຣະອາຈານ ຄໍາວັນ ວໍລະເດດ ເປັນຮອງຫົວໜ້າກັມມາທິການ ສາທາຣະນູປະການ;
3. ພຣະອາຈານ ບຸນເສີຍ ເຜົາພາສິດ ເປັນຮອງຫົວໜ້າກັມມາທິ ການສາທາຣະນູປະການ;
4. ພຣະອາຈານ ພົງສະຫວັນ ອານຸສິນ ເປັນຮອງຫົວໜ້າກັມມາທິ ການສາທາຣະນູປະການ.

**5.6. ຄະນະກັມມາທິການ ການຕ່າງປະເທດ ສູນກາງ ອພສ ປະກອບມີ:**

1. ພຣະອາຈານ ປອ. ດໍາຣົງ ພົມມະຈັກ ເປັນຫົວໜ້າກັມມາທິການ ການຕ່າງປະເທດ;
2. ພຣະອາຈານ ປອ. ດາວສະເດັດ ເລີດມະນີ ເປັນຮອງຫົວໜ້າກັມ ມາທິການການຕ່າງປະເທດ;
3. ພຣະອາຈານ ພູຄໍາ ແກ້ວປະທຸມ ເປັນຮອງຫົວໜ້າກັມມາທິການ ການຕ່າງປະເທດ;
4. ພຣະອາຈານ ລໍາເງິນ ສຸວັນນະສານ ເປັນຮອງຫົວໜ້າກັມມາທິ ການການຕ່າງປະເທດ;

ເພື່ອເປັນການຮັບຮອງ ບຸກຄະລາກອນ ປະກອບເຂົ້າໃສ່ກົງຈັກ ການຈັດຕັ້ງ ສູນກາງອົງການພຸດທະສາສະໜາສັມພັນ ແຫ່ງ ສປປ ລາວ ສະໄໝທີ IX ຄັ້ງນີ້ ຂໍສະເໜີຕໍ່ຜູ້ແທນກອງປະຊຸມໃຫຍ່ ກ່າວອະນຸໂມທະນາ ສາທຸການພ້ອມໆກັນເທີ້ນ: ***ສາທຸ ສາທຸ ສາທຸ.***

**ຂໍນະມັດສະການ/ຈະເລີນພອນ, ຂໍຂອບໃຈ**

## ມະຕິ

## ກອງປະຊຸມໃຫຍ່ຜູ້ແທນພຣະສົງທົ່ວປະເທດ ສະໄໝທີ IX ຂອງສູນກາງອົງການພຸດທະສາສະໜາສັມພັນ ແຫ່ງ ສປປ ລາວ

ພຣະອາຈານ ອະທິປະໄຕ ໄມຕິຈິດ
ຫົວໜ້າຫ້ອງການບໍລິຫານງານ ສູນກາງ ອພສ

- ຂໍນ້ອມໄຫວ້ ພຣະຣັດຕະນະໄຕຣ ທີ່ເຄົາລົບຢ່າງສູງສຸດ
- ນ້ອມນະມັດສະການ/ຈະເລີນພອນ: ຄະນະປະທານກອງປະຊຸມທີ່ເຄົາລົບ ແລະ ນັບຖືຢ່າງສູງ
- ພຣະເຖຣານຸເຖຣະ ທີ່ເຄົາລົບ.
- ບັນດາທ່ານການນຳພັກ-ລັດ ຜູ້ແທນກອງປະຊຸມ, ແຂກຜູ້ຊົງກຽດ ຜູ້ຊົງຄຸນ ວຸດທິ ພຸດທະສາສະນິກະຊົນ ທຸກທ່ານ ທີ່ນັບຖື ແລະ ຮັກແພງ.

ກອງປະຊຸມໃຫຍ່ຜູ້ແທນພຣະສົງທົ່ວປະເທດ ສະໄໝທີ IX ຂອງອົງການພຸດທະສາສະໜາສັມພັນ ແຫ່ງ ສປປ ລາວ ໄດ້ໄຂຂຶ້ນຢ່າງເປັນທາງການໃນຕອນເຊົ້າວັນທີ 23 ທັນວາ 2025 ທີ່ຫໍປະຊຸມແຫ່ງຊາດ ນະຄອນຫຼວງວຽງຈັນ. ໂດຍການເປັນປະທານຂອງພຣະອາຈານໃຫຍ່ ມະຫາເຫວດ ມະເສໄນ ປະທານສູນກາງ ອພສ ເປັນກຽດເຂົ້າຮ່ວມເປັນຄະນະປະທານຂອງທ່ານສອນໄຊ ສີພັນດອນ ນາຍົກລັດຖະມົນຕີ ແຫ່ງ ສປປ ລາວ, ທ່ານ ສິນລະວົງ ຄຸດໄພທູນ ກຳມະການກົມການເມືອງສູນກາງພັກ ປະທານສູນກາງແນວລາວສ້າງຊາດ. ຄະນະຜູ້ແທນພຣະສົງ ແລະ ແຂກຖືກເຊີນທັງ ໝົດ 1,123 ອົງ/ທ່ານ, ເພດຍິງ 350 ທ່ານ. ໃນນີ້ຜູ້ແທນສົມບູນຈຳນວນ 330 ອົງ.

ກອງປະຊຸມໃຫຍ່ ໄດ້ດຳເນີນພາຍໃຕ້ບັນຍາກາດແຫ່ງຄວາມສາມັກຄີ ຄວາມເປັນເອກະພາບ, ຄວາມຮັບຜິດຊອບການເມືອງສູງ, ມີບັນຍາກາດຟົດຟື້ນ, ສ້າງສັນ ແລະ ກົງໄປກົງມາ. ກອງປະຊຸມພ້ອມໄດ້ພ້ອມກັນຄົ້ນຄວ້າຕົກລົງບັນຫາສຳຄັນຂອງອົງການພຸດທະສາສະໜາ ດ້ວຍຄວາມເປັນເອກະພາບ

ສູງ ແລະ ໄດ້ມີຜົນສຳເລັດອັນຈົບງົບງາມ; ກອງປະຊຸມໃຫຍ່ໄດ້ຄົ້ນວຄ້າ ແລະ ຮັບຮອງ ບັນດາເນື້ອໃນ ດັ່ງນີ້:

1. ກອງປະຊຸມໃຫຍ່ ໄດ້ຄົ້ນຄວ້າຢ່າງເລິກເຊິ່ງ ແລະ ໄດ້ຮັບຮອງເອົາຢ່າງເປັນເອກະພາບ ຕໍ່ບົດລາຍງານຜົນສຳເລັດການເຄື່ອນໄຫວວຽກງານຕະຫຼອດໄລຍະ 5 ປີ, ກອງປະຊຸມໄດ້ສະແດງຄວາມເຫັນດີເປັນເອກະພາບຕໍ່ການສະຫຼຸບຕີລາຄາຜົນການຈັດຕັ້ງປະຕິບັດມະຕິກອງປະຊຸມໃຫຍ່ ຜູ້ແທນພຣະສົງທົ່ວປະເທດ ສະໄໝທີ VIII ບັນດາຜົນງານອັນພົ້ນເດັ່ນທີ່ຍາດມາໄດ້ໃນໄລຍະ 5 ປີ ຜ່ານມາ, ໄດ້ປະກອບຄຳເຫັນຢ່າງກົງ ໄປກົງມາ ແລະ ໄດ້ໄຈ້ແຍກຢ່າງເລິກເຊິ່ງ ບັນດາສາເຫດ ທີ່ພາໃຫ້ມີຂໍ້ຄົງຄ້າງ ຈາກນັ້ນໄດ້ຮັບຮອງເອົາຂໍ້ສະຫຼຸບຈຳນວນໜຶ່ງ ທີ່ເປັນບົດຮຽນທີ່ມີຄວາມໝາຍ ຄວາມສຳຄັນສຳລັບການສືບຕໍ່ຈັດຕັ້ງປະຕິບັດວຽກງານຂອງອົງການພຸດ ທະສາສະໜາສັມພັນແຫ່ງ ສປປ ລາວ ໃນຕໍ່ໜ້າ;

2. ກອງປະຊຸມໃຫຍ່ໄດ້ຮັບຮອງເອົາທິດທາງແຜນການ, ວຽກຈຸກສຸມ ແລະ ແຜນພັດທະນາອົງການອົງການພຸດທະສາສະໜາ 5 ປີຕໍ່ໜ້າ ຊຶ່ງຈະປະກອບມີ 11 ວຽກຈຸດສຸມ, 7 ແຜນງານ, 24 ໂຄງການ, 58 ກິດຈະກຳ;

3. ກອງປະຊຸມໄດ້ຮັບຟັງການປະກອບຄຳເຫັນຂອງບັນດາກະຊວງ-ອົງການ ປະກອບມີ 3 ພາກສ່ວນຄື: ກະຊວງວັດທະນະທຳ ແລະ ການທ່ອງທ່ຽວ, ຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ, ສູນກາງແນວລາວສ້າງຊາດ;

4. ໄດ້ຄົ້ນຄວ້າ ແລະ ເປັນເອກະພາບສູງ ຮັບຮອງເອົາຄະນະບໍລິຫານງານສູນກາງອົງການພຸດທະສາສະໜາສັມພັນ ແຫ່ງ ສປປ ລາວ ສະໄໝທີ IX, ຈຳນວນ 99 ອົງ;

5. ກອງປະຊຸມຄັ້ງປະຖົມມະຣືກຄະນະບໍລິຫານງານສູນກາງອົງການພຸດທະສາສະໜາ ສັມພັນ ແຫ່ງ ສປປ ລາວ ສະໄໝທີ IX ໄດ້ຮັບຮອງຄະນະກັມມະການບໍລິຫານງານປະຈຳການ ຈຳນວນ 26 ອົງຄື:

1. ພຣະອາຈານ ມະຫາເຫວດ ມະເສໄນ
2. ພຣະອາຈານ ມະຫາຄຳມາ ປັນຍາວິຈິດ
3. ພຣະອາຈານ ບຸນສ່ວນ ພັນທະວົງ
4. ພຣະອາຈານ ບຸນທະວີ ປະສິດທິສັກ
5. ພຣະອາຈານ ສີທົນ ໄຊຍະວົງສອນ
6. ພຣະອາຈານ ອະທິປະໄຕ ໄມຕີຈິດ
7. ພຣະອາຈານ ປອ. ພວງປະເສີດ ພູມາວົງ
8. ພຣະອາຈານ ປອ. ດຳຣົງ ພິມມະຈັກ
9. ພຣະອາຈານ ວັນຄຳ ວົງສາສຸລິນ
10. ພຣະອາຈານ ປອ. ຖາວອນ ຕາພອນປະເສີດ
11. ພຣະອາຈານ ດາວເຮືອງ ຄຳປະເສີດ
12. ພຣະອາຈານ ຄຳວັນ ວໍລະເດດ
13. ພຣະອາຈານ ສຸວັນ ຈັນທະລາດ
14. ພຣະອາຈານ ອ່ອນແກ້ວ ສິດທິວົງ
15. ພຣະອາຈານ ປອ. ດາວສະເດັດ ເລີດມະນີ
16. ພຣະອາຈານ ບຸນປອນ ສອນສັກສິດ
17. ພຣະອາຈານ ບຸນເສີຍ ເພົາພາສິດ
18. ພຣະອາຈານ ພົງສະຫວັນ ອານຸສິນ
19. ພຣະອາຈານ ປອ. ອຳມະລິນ ບຸນວິເສດ
20. ພຣະອາຈານ ບຸນທະວີ ສີບຸນເຮືອງ
21. ພຣະອາຈານ ກິແກ້ວ ຈັນທະນິງສີ
22. ພຣະອາຈານ ລຳເງິນ ສຸວັນນະສານ
23. ພຣະອາຈານ ປອ. ສີສຸກ ສະເຫຼີມຄຸນ
24. ພຣະອາຈານ ທອງເສີມ ສີບຸນເຮືອງ
25. ພຣະອາຈານ ພັນທອງ ໂພມີໄຊ
26. ພຣະອາຈານ ພູຄຳ ແກ້ວປະທຸມ

- **ຮັບຮອງຄະນະປະທານ ສູນກາງອົງການພຸດທະສາສະໜາສັມພັນ ແຫ່ງ ສປປ ລາວ ປະກອບມີ 9 ອົງຄື:**

1. ພຣະອາຈານໃຫຍ່ ມະຫາເຫວດ ມະເສໄນ ເປັນປະທານສູນກາງອົງການພຸດທະສາສະໜາສັມພັນ ແຫ່ງສປປ ລາວ ຊີ້ນຳລວມ;
2. ພຣະອາຈານ ມະຫາຄຳມາ ປັນຍາວິຈິດ ເປັນຮອງປະທານສູນກາງອົງການພຸດທະສາສະໜາສັມພັນ ແຫ່ງ ສປປ ລາວ.
3. ພຣະອາຈານ ບຸນສ່ວນ ພັນທະວົງ, ເປັນຮອງປະທານສູນກາງອົງການພຸດທະສາສະໜາສັມພັນແຫ່ງ ສປປ ລາວ, ຜູ້ປະຈຳການ;
4. ພຣະອາຈານ ບຸນທະວີ ປະສິດທິສັກ, ເປັນຮອງປະທານ, ຄວບຫົວໜ້າກັມມາທິການ ສາທາຣະນູປະການ;
5. ພຣະອາຈານ ສີຫົນ ໄຊຍະວົງສອນ, ເປັນຮອງປະທານ, ຄວບຫົວໜ້າກັມມາທິການເຜີຍແຜ່ສີລະທັມ ແລະ ປະຕິບັດກັມມະ ຖານ;
6. ພຣະອາຈານ ອະທິປະໄຕ ໄມຕີຈິດ, ເປັນຮອງປະທານ, ຄວບຫົວໜ້າຫ້ອງການບໍລິຫານງານ;
7. ພຣະອາຈານ ປອ. ພວງປະເສີດ ພູມາວົງ, ເປັນຮອງປະທານ, ຄວບຫົວໜ້າກັມມາທິການສຶກສາສົງ;
8. ພຣະອາຈານ ປອ. ດຳຣົງ ພິມມະຈັກ, ເປັນຮອງປະທານ, ຄວບຫົວໜ້າກັມມາທິການ ການຕ່າງປະເທດ.
9. ພຣະອາຈານ ວັນຄຳ ວົງສາສຸລິນ, ເປັນຮອງປະທານ, ຄວບຫົວໜ້າກັມມາທິການປົກຄອງສົງ;

- **ຮັບຮອງຄະນະທີ່ປຶກສາຂອງຄະນະກຳມະການບໍລິຫານງານສູນກາງອົງການພຸດທະສາສະໜາສຳພັນ ແຫ່ງ ສປປ ລາວ ຈຳນວນ 15 ອົງ ປະກອບມີ:**

1. ພຣະອາຈານໃຫຍ່ ມະຫານ້ອຍ ຊູເສນ
2. ພຣະອາຈານໃຫຍ່ ບຸນຍົດ ນິນທະໂຄດ
3. ພຣະອາຈານໃຫຍ່ ມະຫາບຸນມີ ພູມິນ
4. ພຣະອາຈານໃຫຍ່ ມະຫາວັນນາ ສຸລິຍະວົງ
5. ພຣະອາຈານໃຫຍ່ ທອງໃສ ພັນທະວົງ
6. ພຣະອາຈານໃຫຍ່ ບຸນມີ ຍານະວີໂຣ
7. ພຣະອາຈານໃຫຍ່ ສົມພົງ ເມດຕາຈິດໂຕ
8. ພຣະອາຈານໃຫຍ່ ຄຳຄູນ ດວງອາໄພວົງ
9. ພຣະອາຈານໃຫຍ່ ບຸນທັນ ປຸນຍະກາໂມ
10. ພຣະອາຈານໃຫຍ່ ສົມບູນ ສີລິປັນໂຍ
11. ພຣະອາຈານໃຫຍ່ ສົມສະໜຸກ ບຸດຕະລາດ
12. ພຣະອາຈານໃຫຍ່ ຄຳພັນ ຍານະວະໂຣ
13. ພຣະອາຈານໃຫຍ່ ບຸນທາຍ ຈັນທະໄພຈິດ
14. ພຣະອາຈານໃຫຍ່ ຊ້ອຍ ຈັນທະສຸກ
15. ພຣະອາຈານໃຫຍ່ ຄຳເງິນ ຄຳວົງ

- ຮັບຮອງເອົາຫົວໜ້າຫ້ອງການບໍລິຫານງານ, ຫົວໜ້າກັມມາທິການ ຮອງຫົວໜ້າຫ້ອງການບໍລິຫານງານ ແລະ ຮອງຫົວໜ້າກັມມາທິການ ຂອງຄະນະບໍລິຫານງານສູນກາງອົງການພຸດທະສາສະໜາສັມພັນ ແຫ່ງ ສປປ ລາວ ມີດັ່ງນີ້:

5.1. ຫ້ອງການບໍລິຫານງານ ສູນກາງ ອພສ ປະກອບມີ:

1. ພຣະອາຈານ ອະທິປະໄຕ ໄມຕິຈິດ ເປັນຫົວໜ້າຫ້ອງການບໍລິຫານງານ;
2. ພຣະອາຈານ ດາວເຮືອງ ຄຳປະເສີດ ເປັນຮອງຫົວໜ້າຫ້ອງການບໍລິຫານງານ;
3. ພຣະອາຈານ ປອ. ອຳມະລິນ ບຸນວິເສດ ເປັນຮອງຫົວໜ້າຫ້ອງການບໍລິຫານງານ;

5.2. ກັມມາທິການປົກຄອງສົງ ສູນກາງ ອພສ ປະກອບມີ:

1. ພຣະອາຈານ ວັນຄຳ ວົງສາສຸລິນ ເປັນຫົວໜ້າກັມມາທິການປົກຄອງສົງ;
2. ພຣະອາຈານ ບຸນປອນ ສອນສັກສິດ ເປັນຮອງຫົວໜ້າກັມມາທິການປົກຄອງສົງ;
3. ພຣະອາຈານ ທອງເສີມ ສີບຸນເຮືອງ ເປັນຮອງຫົວໜ້າກັມມາທິການປົກຄອງສົງ.

5.3. ກັມມາທິການສຶກສາສົງ ສູນກາງ ອພສ ປະກອບມີ:

1. ພຣະອາຈານ ປອ. ພວງປະເສີດ ພູມາວົງ ເປັນຫົວໜ້າກັມມາທິການສຶກສາສົງ;
2. ພຣະອາຈານ ກິແກ້ວ ຈັນທະນິງສີ ເປັນຮອງຫົວໜ້າກັມມາທິການສຶກສາສົງ;
3. ພຣະອາຈານ ພັນທອງ ໂພມີໄຊ ເປັນຮອງຫົວໜ້າກັມມາທິການສຶກສາສົງ.

**5.4. ກົມມາທິການເຜີຍແຜ່ສິລະທັມ ແລະປະຕິບັດກົມມະຖານ ສູນກາງ ອພສ ປະກອບມີ:**

1. ພຣະອາຈານ ສີຫົນ ໄຊຍະວົງສອນ ເປັນຫົວໜ້າກົມມາທິການເຜີຍແຜ່ສີລະທັມ ແລະ ປະຕິບັດກົມມະຖານ;
2. ພຣະອາຈານ ບຸນທະວີ ສີບຸນເຮືອງ ເປັນຮອງຫົວໜ້າກົມມາທິການເຜີຍແຜ່ສີລະທັມ ແລະ ປະຕິບັດກົມມະຖານ;
3. ພຣະອາຈານ ປອ. ສີສຸກ ສະເຫຼີມຄຸນ ເປັນຮອງຫົວໜ້າກົມມາທິການເຜີຍແຜ່ສີລະທັມ ແລະ ປະຕິບັດກົມມະຖານ.

**5.5. ກົມມາທິການສາທາຣະນູປະການ ສູນກາງ ອພສ ປະກອບມີ:**

1. ພຣະອາຈານ ບຸນທະວີ ປະສິດທິສັກ ເປັນຫົວໜ້າກົມມາທິການສາທາລະນູປະການ;
2. ພຣະອາຈານ ຄຳວັນ ວໍລະເດດ ເປັນຮອງຫົວໜ້າກົມມາທິການສາທາຣະນູປະການ;
3. ພຣະອາຈານ ບຸນເສີຍ ເຜົ່າພາສິດ ເປັນຮອງຫົວໜ້າກົມມາທິການສາທາຣະນູປະການ;
4. ພຣະອາຈານ ພົງສະຫວັນ ອານຸສິນ ເປັນຮອງຫົວໜ້າກົມມາທິການສາທາຣະນູປະການ.

**5.6. ຄະນະກົມມາທິການ ການຕ່າງປະເທດ ສູນກາງ ອພສ ປະກອບມີ:**

1. ພຣະອາຈານ ປອ. ດຳຣົງ ພົມມະຈັກ ເປັນຫົວໜ້າກົມມາທິການການຕ່າງປະເທດ;
2. ພຣະອາຈານ ປອ. ດາວສະເດັດ ເລີດມະນີ ເປັນຮອງຫົວໜ້າກົມມາທິການການຕ່າງປະເທດ;
3. ພຣະອາຈານ ພູຄຳ ແກ້ວປະທຸມ ເປັນຮອງຫົວໜ້າກົມມາທິການການຕ່າງປະເທດ;
4. ພຣະອາຈານ ລຳເງິນ ສຸວັນນະສານ ເປັນຮອງຫົວໜ້າກົມມາທິການການຕ່າງປະເທດ;

6. ກອງປະຊຸມໄດ້ມີຄວາມພາກພູມໃຈ ແລະ ຮູ້ບຸນຄຸນເປັນຢ່າງສູງ ຕໍ່ພະນະທ່ານ ສອນໄຊ ສີພັນດອນ ກຳມະການກົມການເມືອງສູນກາງພັກ ນາຍົກລັດຖະມົນຕີ ແຫ່ງ ສປປ ລາວ ທີ່ຕາງໜ້າໃຫ້ກົມການເມືອງສູນກາງພັກ ລັດຖະບານ ໄດ້ໃຫ້ກຽດເຂົ້າຮ່ວມ ແລະ ມີຄຳເຫັນໂອ້ລົມຕໍ່ກອງປະຊຸມໃຫຍ່ ເຊິ່ງມີຫຼາຍເນື້ອໃນທີ່ສຳຄັນ ທີ່ເປັນເຂັມທິດເຍືອງທາງໃຫ້ແກ່ການຈັດຕັ້ງ ແລະ ການເຄື່ອນໄຫວ ປະຕິບັດໜ້າທີ່ໃນໄລຍະໃໝ່, ໃຫ້ມີປະສິດທິພາບ ແລະ ປະສິດທິຜົນ ເປັນບ່ອນອີງໃນການຈັດຜົນຂະຫຍາຍມະຕິກອງປະຊຸມໃຫຍ່ ຂອງສູນກາງອົງການພຸດທະສາສະໜາສໍາພັນ ແຫ່ງ ສປປ ລາວ ແລະ ມະຕິກອງປະຊຸມໃຫຍ່ຂອງພັກ, ແຜນພັດທະນາ ຂອງລັດຖະບານ ແລະ ມະຕິກອງປະຊຸມໃຫຍ່ ສະໄໝທີ 9 ຂອງສູນກາງອົງການພຸດທະສາສະໜາສໍາພັນ ແຫ່ງ ສປປ ລາວ.

ກອງປະຊຸມຮຽກຮ້ອງໃຫ້ກຳມະການ ສູນກາງ ອພສ ຊຸດໃໝ່ຕະຫຼອດຮອດ ກຳມະການ ອພສ ແຕ່ລະຂັ້ນ, ພຣະສົງ, ສາມະເນນ, ພໍ່ຂາວ, ແມ່ຂາວ ແລະ ພຸດທະສາສະນິກະຊົນ ໃນຂອບເຂດທົ່ວປະເທດ ຈົ່ງສາມັກຄີ ຮ່ວມແຮງຮ່ວມໃຈກັນຈັດຕັ້ງປະຕິບັດໜ້າທີ່ໜ້າທີ່ວຽກງານທີ່ກອງປະຊຸມໃນຄັ້ງນີ້ວາງອອກໃຫ້ໄດ້ຮັບຜົນສຳເລັດຢ່າງຈົບງາມ.

ມະຕິໄດ້ຖືກຮັບຮອງຢ່າງເປັນເອກະສັນ ຈາກກອງປະຊຸມໃຫຍ່ຜູ້ແທນພຣະສົງທົ່ວປະເທດ ສະໄໝທີ 9, ໃນເວລາ 16 ໂມງ 30 ນາທີ ຂອງວັນທີ 23 ທັນວາ 2025.

ນະຄອນຫຼວງວຽງຈັນ, ວັນທີ 23 ທັນວາ 2025

ກອງປະຊຸມໃຫຍ່ຜູ້ແທນພຣະສົງທົ່ວປະເທດ ສະໄໝທີ 9

**ບົດກ່າວອັດກອງປະຊຸມໃຫຍ່**
**ຜູ້ແທນພຣະສົງທົ່ວປະເທດ ສະໄໝທີ IX**
**ຂອງ ອົງການພຸດທະສາສະໜາສໍາພັນ ແຫ່ງ ສປປ ລາວ**
ພຣະອາຈານໃຫຍ່ ມະຫາເຫວດ ມະເສໄນ
ປະທານສູນກາງອົງການພຸດທະສາສະໜາສໍາພັນ ແຫ່ງ ສປປ ລາວ

ນ້ອມໄຫວ້: ພຣະຣັດຕະນະໄຕຣ ທີ່ເຄົາລົບຢ່າງສູງສຸດ
ນະມັດສະການ: ຄະນະປະທານ, ພຣະເຖຣານຸເຖຣະ ທີ່ເຄົາລົບຢ່າງສູງ.
ຈະເລີນພອນ: ພະນະທ່ານ ສອນໄຊ ສີພັນດອນ ກຳມະການກົມການເມືອງ
ສູນກາງພັກ, ນາຍົກລັດຖະມົນຕີ ແຫ່ງ ສປປ ລາວ
ທ່ານ ປອ. ສິນລະວົງ ຄຸດໄພທູນ ກຳມະການກົມການເມືອງສູນກາງພັກ,
ປະທານສູນກາງແນວລາວສ້າງຊາດ ທີ່ນັບຖືຢ່າງສູງ,
ບັນດາທ່ານ ການນຳພັກ-ລັດ ແຂກຜູ້ຊົງກຽດ ຜູ້ຊົງຄຸນວຸດທິ
ພຸດທະສາສະນິກະຊົນ ທຸກທ່ານ ທີ່ນັບຖື ແລະ ຮັກແພງ.

ກອງປະຊຸມໃຫຍ່ ຜູ້ແທນພຣະສົງທົ່ວປະເທດ ສະໄໝທີ IX ໄດ້ດຳເນີນມາເປັນເວລາ 1 ມື້ຢ່າງມີບັນຍາກາດຟົດຟື້ນ, ມີຄວາມສະໜານສາມັກຄີ ແລະ ມີປະຊາທິປະໄຕກວ້າງຂວາງ, ກອງປະຊຸມໃຫຍ່ ຂອງພວກເຮົາໄດ້ບັນລຸຕາມຄາດໝາຍທີ່ວາງໄວ້ທຸກປະການ.

ກອງປະຊຸມໃຫຍ່ ໄດ້ບັນລຸຜົນສຳເລັດໃນການປຶກສາຫາລື ແລະ ເປັນເອກະພາບຜ່ານເອກະສານສຳຄັນຕ່າງໆ, ໂດຍສະເພາແມ່ນບົດສະຫຼຸບຕີລາຄາການຈັດຕັ້ງປະຕິບັດມະຕິກອງປະຊຸມໃຫຍ່ຜູ້ແທນພຣະສົງທົ່ວປະເທດ ສະໄໝທີ VIII ແລະ ໄດ້ກຳນົດທິດທາງໜ້າທີ່ ຂອງອົງການພຸດທະສາສະໜາສໍາພັນ ແຫ່ງ ສປປ ລາວ ສຳລັບ 5 ປີຕໍ່ໜ້າ; ກອງປະຊຸມໄດ້ຮັບຮອງເອົາຄະນະບໍລິ

ທານງານສູນກາງອົງການພຸດທະສາສະໜາສຳພັນ ແຫ່ງ ສປປ ລາວ ສະໄໝທີ IX ໄດ້ເປັນຜົນສຳເລັດຢ່າງຈົບງາມ.

ອາຕະມາພາບ ຂໍສະແດງຄວາມຮູ້ບຸນຄຸນ ແລະ ຂອບໃຈເປັນຢ່າງສູງ ຕໍ່ກອງປະຊຸມໃຫຍ່ ທີ່ໄວ້ວາງໃຈ ຄັດເລືອກເອົາອາຕະມາພາບ ເປັນປະທານສູນກາງອົງການພຸດທະສາສະໜາສຳພັນ ແຫ່ງ ສປປ ລາວ ໃນກອງປະຊຸມໃຫຍ່ ສະໄໝທີ IX, ອາຕະມາພາບ ຂໍປະຕິຍານຕົນວ່າຈະພ້ອມພຽງຮັດແໜ້ນຄວາມສາມັກຄີກັບບັນດາຮອງປະທານ ແລະ ຄະນະບໍລິຫານງານສູນກາງອົງການພຸດທະສາສະໜາສຳພັນ ແຫ່ງ ສປປ ລາວ, ປະຕິບັດໜ້າທີ່ຂອງຕົນຢ່າງຕັ້ງໜ້າ ເພື່ອບັນລຸຜົນສຳເລັດວຽກງານໃນ 5 ປີຕໍ່ ໜ້າ ໂດຍມີການເຮັດວຽກປະສານສົມທົບ ກັບອົງການ ຈັດຕັ້ງພັກ-ລັດ, ອົງການແນວລາວສ້າງຊາດ, ຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ ແລະ ອົງການຈັດຕັ້ງພັກ-ລັດ ທີ່ກ່ຽວຂ້ອງ. ເພື່ອຊີ້ນຳ-ນຳພາ ອົງການພຸດທະສາສະໜາສຳພັນ ແຫ່ງ ສປປ ລາວ ໃນທຸກຂັ້ນ ເຄື່ອນໄຫວວຽກງານຕາມພາຣະບົດບາດ, ສິດ ແລະ ໜ້າທີ່ຂອງຕົນ ໃນໄລຍະໃໝ່ ໃຫ້ຄົບຖ້ວນສົມບູນຫຼາຍກວ່າເກົ່າ.

ໃນໂອກາດ ທີ່ມີຄວາມໝາຍຄວາມສຳຄັນນີ້, ຕາງໜ້າໃຫ້ຜູ້ແທນກອງປະຊຸມໃຫຍ່ ຂໍສະແດງຄວາມຮູ້ບຸນຄຸນ ແລະ ຖືເປັນກຽດຢ່າງສູງ ທີ່ໄດ້ຮັບການໂອ້ລົມ ຂອງ ສອນໄຊ ສີພັນດອນ ກຳມະການກົມການເມືອງສູນກາງພັກ, ນາຍົກລັດຖະມົນຕີ ແຫ່ງ ສປປ ລາວ. ຄຳໂອ້ລົມຂອງທ່ານ ໄດ້ເປັນດັ່ງເຂັມທິດຊີ້ທາງ, ທັງເປັນການຊີ້ນຳ ແລະ ມອບໝາຍຄວາມຮັບຜິດຊອບ ໃຫ້ແກ່ອົງການພຸດທະສາສະໜາສຳພັນ ແຫ່ງ ສປປ ລາວ ກໍຄື ພຣະສົງ-ສາມະເນນ ແລະ ພຸດທະສາສະນິກະຊົນ ໃນຕໍ່ໜ້າ.

ນະມັດສະການ ຄະນະປະທານ, ພຣະມະຫາເຖຣານຸເຖຣະ,

ຂໍຈະເລີນພອນ ທ່ານການນຳພັກ-ລັດ ແລະ ແຂກຜູ້ຊົງກຽດ ທຸກທ່ານ.

ໃນທ່າມກາງບັນຍາກາດອັນສະຫງ່າຣາສີນີ້, ກອງປະຊຸມໃຫຍ່ຜູ້ແທນພຣະສົງທົ່ວປະເທດ ສະໄໝທີ IX ຂໍສະແດງຄວາມຮູ້ບຸນຄຸນ ຕໍ່ພຣະມະຫາເຖຣະ, ພຣະສົງ-ສາມະເນນ ທີ່ໄດ້ເສຍສະຫຼະເວລາອັນມີຄ່າມາຮ່ວມກອງປະຊຸມໃຫຍ່ໃນຄັ້ງນີ້.

ກອງປະຊຸມໃຫຍ່ ຂໍສະແດງຄວາມຂອບໃຈເປັນຢ່າງສູງ ຕໍ່ບັນດາກະຊວງ, ອົງການ, ກົມ ແລະ ຂະແໜງການສູນກາງ, ຄະນະພັກ, ອຳນາດການປົກຄອງ, ບັນດາພະນັກງານ, ທະຫານ, ຕຳຫຼວດ ທີ່ໄດ້ເອົາໃຈໃສ່ເຮັດວຽກ ທັງກາງເວັນ ແລະ ກາງຄືນ, ພ້ອມດ້ວຍຊາວນະຄອນຫຼວງວຽງຈັນ ກໍຄືປະຊາຊົນລາວບັນດາເຜົ່າ ແລະ ພຣະສົງ-ສາມະເນນ ໃນຂອບເຂດທົ່ວປະເທດ ທີ່ໄດ້ໃຫ້ຄວາມອຸປະຖຳ, ສະໜັບສະໜູນອູ້ມຊູໃຫ້ແກ່ກອງປະຊຸມໃຫຍ່ ໃນຄັ້ງນີ້ ຢ່າງສຸດອົກສຸດໃຈ.

ອາຕະມາພາບ ຂໍຕາງໜ້າໃຫ້ແກ່ຄະນະປະທານກອງປະຊຸມໃຫຍ່ສະແດງຄວາມຂອບໃຈເປັນຢ່າງສູງ ມາຍັງບັນດາພຣະສົງໃນທົ່ວປະເທດ ກໍຄືບັນດາແຂກທີ່ຕາງໜ້າອົງການຈັດຕັ້ງພັກ-ລັດ, ອົງການແນວລາວສ້າງຊາດ, ອົງການຈັດຕັ້ງມະຫາຊົນ, ຜູ້ຊົງຄຸນວຸດທິ ແລະ ພຸດທະ ສາສະນິກະຊົນລາວທັງຫຼາຍ ທີ່ໄດ້ສຸມສະຕິປັນຍາ, ເຫື່ອແຮງ ແລະ ຄວາມຮັບຜິດຊອບປະກອບສ່ວນເຮັດໃຫ້ກອງປະຊຸມໃຫຍ່ຄັ້ງນີ້ ໄດ້ຮັບຜົນສຳເລັດຢ່າງສະຫງ່າງາມ.

ອາຕະມາພາບ ຂໍຮຽກຮ້ອງໃຫ້ ບັນດາຄະນະບໍລິຫານງານສູນກາງອົງການພຸດທະສາສະໜາສັມພັນ ແຫ່ງ ສປປ ລາວ ສະໄໝທີ IX ຈົ່ງເພີ່ມທະວີຄວາມສາມັກຄີ ເປັນເອກະພາບ ເພື່ອພ້ອມກັນຜັນຂະຫຍາຍເນື້ອໃນຈິດໃຈຜົນສຳເລັດຂອງກອງປະຊຸມໃຫຍ່ ໃຫ້ພຣະສົງ-ສາມະເນນ ໃນທ້ອງຖິ່ນຂອງຕົນຮັບຜິດຊອບ ໄດ້ຮັບຮູ້ຢ່າງທົ່ວເຖິງ, ພ້ອມກັນເຮັດໃຫ້ສັດທາ ແລະ ຄວາມເຫຼື້ອມໃສຂອງພຸດທະສາສະນິກະຊົນທັງຫຼາຍ ທີ່ມີຕໍ່ພຣະພຸດທະສາສະໜາ ກໍຄືເຮັດໃຫ້ພາຣະບົດບາດ, ສິດ ແລະ ໜ້າທີ່ ຄວາມເຊື່ອຖືຂອງພຸດທະສາສະນິກະຊົນ ແລະ ການນຳພັກ-ລັດ ຕໍ່ພຣະພຸດທະສາສະໜາ ນັບມື້ນັບເພີ່ມພູນຫຼາຍຍິ່ງຂຶ້ນ.

ອາຕະມາພາບ ຂໍອໍານວຍອວຍພອນໄຊອັນປະເສີດ ແດ່ບັນດາຜູ້ແທນພຣະສົງ ພ້ອມດ້ວຍການນໍາພັກ-ລັດ, ຜູ້ຊົງຄຸນວຸດທິ ແລະ ແຂກທີ່ຊົງກຽດທຸກທ່ານຈົ່ງມີອາຍຸ, ວັນນະ, ສຸຂະ, ພະລະ ແລະ ເດີນທາງກັບສູ່ທ້ອງຖິ່ນຮາກຖານຂອງຕົນດ້ວຍຄວາມສະຫວັດດີພາບທຸກໆອົງ ທຸກໆທ່ານເທີ້ນ.

ມາຮອດນີ້ ກອງປະຊຸມໃຫຍ່ຜູ້ແທນພຣະສົງທົ່ວປະເທດ ສະໄໝທີ IX ຂອງອົງການພຸດທະສາສະໜາສັມພັນ ແຫ່ງ ສປປ ລາວ ໄດ້ສໍາເລັດຜົນ. ຕ່າງໜ້າຄະນະປະທານກອງປະຊຸມໃຫຍ່, ອາຕະມາພາບ ຂໍປະກາດອັດກອງປະຊຸມຢ່າງເປັນທາງການ ນັບແຕ່ບັດນີ້ເປັນຕົ້ນໄປ.

ນະມັດສະການ/ຈະເລີນພອນ, ຂໍຂອບໃຈ

# ພາກທີ 2
# ພາກປະກອບຄຳເຫັນ

## ບົດກ່າວປະກອບຄຳເຫັນ

ທ່ານ ສອນໄຊ ສີພັນດອນ ນາຍົກລັດຖະມົນຕີ ແຫ່ງ ສປປ ລາວ

**ຕໍ່ກອງປະຊຸມໃຫຍ່ຜູ້ແທນສົງທົ່ວປະເທດ ສະໄໝທີ IX**

**ຂອງອົງການພຸດທະສາສະໜາສຳພັນ ແຫ່ງ ສປປ ລາວ**

- ຂໍນ້ອມນະມັດສະການ ພຣະອາຈານໃຫຍ່ ມະຫາເຫວດ ມະເສໄນ ປະທານສູນກາງອົງການພຸດທະສາສະໜາສຳພັນ ແຫ່ງ ສປປ ລາວ ທີ່ເຄົາລົບ ແລະ ນັບຖື
- ຂໍນ້ອມນະມັດສະການພຣະເຖຣາ-ນຸເຖຣະ
- ບັນດາທ່ານຜູ້ຊົງຄຸນວຸດທິ, ຄອບຄົວການນຳ ແລະ ບັນດາແຂກຜູ້ມີກຽດ ທີ່ຮັກແພງທັງຫຼາຍ

ມື້ນີ້, ຂ້າພະເຈົ້າມີຄວາມປິຕິຊົມຊື່ນ ແລະ ເປັນກຽດຢ່າງຍິ່ງ ທີ່ໄດ້ຕ່າງໜ້າກົມການເມືອງສູນກາງພັກ, ສະພາແຫ່ງຊາດ, ລັດຖະບານ ແລະ ແນວລາວສ້າງຊາດ ເຂົ້າຮ່ວມກອງປະຊຸມໃຫຍ່  ຜູ້ແທນພຣະສົງທົ່ວປະເທດ ຄັ້ງທີ IX, ເຊິ່ງກອງປະຊຸມໃຫຍ່ໃນຄັ້ງນີ້ ໄດ້ໄຂຂຶ້ນໃນທ່າມກາງບັນຍາກາດ ທີ່ທົ່ວພັກ, ທົ່ວລັດ, ທົ່ວກຳລັງປະກອບອາວຸດ ແລະ ທົ່ວປວງຊົນລາວບັນດາເຜົ່າ ພວມອອກແຮງແຂ່ງຂັນກັນ ຈັດຕັ້ງປະຕິບັດມະຕິກອງປະຊຸມໃຫຍ່ ຄັ້ງທີ XI ຂອງພັກ ແລະ ສະເຫຼີມສະຫຼອງ 3 ວັນປະຫວັດສາດ ຂອງພັກຂອງຊາດ ຢ່າງເປັນຂະບວນຟົດຟື້ນ ແລະ ກວ້າງຂວາງ.

ໃນໂອກາດທີ່ມີຄວາມໝາຍຄວາມສຳຄັນນີ້ ຕ່າງໜ້າການນຳຂັ້ນສູງຂອງພັກ-ລັດ ຂ້າພະເຈົ້າຂໍນຳເອົາຄວາມຢື້ຢາມຖາມຂ່າວ, ຄວາມສາມັກຄີ

ຮັກແພງອັນອົບອຸ່ນ ມາຍັງຄະນະບໍລິຫານງານສູນກາງອົງການພຸດທະສາສະໜາສໍາພັນ ແຫ່ງ ສປປ ລາວ ກໍຄືພຣະສົງ-ສາມະເນນໃນຂອບເຂດທົ່ວປະເທດ ແລະ ແຂກຖືກເຊີນເຂົ້າຮ່ວມກອງປະຊຸມໃຫຍ່ໃນຄັ້ງນີ້. ກ່ອນອື່ນຫມົດ ຂ້າພະເຈົ້າ ຂໍສະແດງຄວາມຊົມເຊີຍ ແລະ ເປັນເອກະພາບສູງຕໍ່ກັບເນື້ອໃນບົດສະຫຼູບຕີລາຄາການເຄື່ອນໄຫວວຽກງານ ໄລຍະ 5 ປີ ຜ່ານມາ ແລະ ທິດທາງແຜນການ ແລະ ແຜນພັດທະນາອົງການພຸດທະສາສະໜາສັມພັນ ແຫ່ງ ສປປ ລາວ ໄລຍະ 5 ປີຕໍ່ໜ້າ ແລະ ຜົນການຄົ້ນຄວ້າຮັບຮອງເອົາຄະນະບໍລິຫານງານ; ຄະນະບໍລິຫານງານປະຈໍາການ, ປະທານ-ຮອງປະທານ, ທີ່ປຶກສາ ສູນກາງອົງການພຸດທະສາສະໜາສັມພັນ ແຫ່ງ ສປປ ລາວ ສະໄໝທີ IX ດ້ວຍຄວາມເປັນເອກະພາບສູງ ແລະ ສໍາເລັດລົງດ້ວຍຄວາມຈົບງາມ;

- ພຣະເຖຣາ-ນຸເຖຣະ,
- ບັນດາແຂກຜູ້ມີກຽດ ທີ່ນັບຖື ແລະ ຮັກແພງທັງຫຼາຍ !

ຕະຫຼອດໄລຍະ 5 ປີ ຜ່ານມາ ໃນເງື່ອນໄຂສະພາບເສດຖະກິດ-ການເມືອງຂອງພາກພື້ນ ແລະ ສາກົນຜັນແປໄປຢ່າງສັບສົນ ເຊິ່ງໄດ້ສົ່ງຜົນກະທົບຕໍ່ການພັດທະນາປະເທດຊາດ ກໍ່ຄືຊີວິດການເປັນຢູ່ຂອງພະນັກງານ, ທະຫານ, ຕໍາຫຼວດ ແລະ ປະຊາຊົນບັນດາເຜົ່າ ໃນທົ່ວປະເທດ, ຊຶ່ງບັນຫາດັ່ງກ່າວກໍ່ສົ່ງຜົນກະທົບບໍ່ໜ້ອຍຕໍ່ການເຄື່ອນໄຫວຂອງອົງການພຸດທະສາສະໜາແຕ່ລະຂັ້ນ, ຕະຫຼອດຮອດພຣະສົງ-ສາມະເນນ ແລະ ການສ້າງສາ, ບູລະນະວັດວາອາຮາມຢູ່ປະເທດຂອງພວກເຮົາ.

ແຕ່ເຖິງຢ່າງໃດກໍ່ຕາມ ພາຍໃຕ້ການນໍາພາຢ່າງເອົາການເອົາງານຂອງພັກ, ການບໍລິຫານຂອງລັດຖະບານ ກໍ່ຄືການປະກອບສ່ວນຂອງອົງການພຸດທະສາສະໜາ ແຕ່ລະຂັ້ນ ຈຶ່ງສາມາດຜ່ານຜ່າຄວາມຫຍຸ້ງຍາກ ແລະ ຍາດໄດ້ຜົນສໍາເລັດ ກໍຄືໄຊຊະນະຫຼາຍດ້ານ ໃນການຈັດຕັ້ງປະຕິບັດມະຕິ XI ຂອງພັກ ແລະ ມະຕິກອງປະຊຸມໃຫຍ່ຜູ້ແທນສົງທົ່ວປະເທດ ຄັ້ງທີ VIII ວາງອອກ. ຊຶ່ງ

ໝາກຜົນຕົ້ນຕໍ ສະແດງອອກ ຄື: ໄດ້ນຳພາປະຕິບັດມະຕິກອງປະຊຸມໃຫຍ່ຜູ້ແທນສົງທົ່ວປະເທດ ຄັ້ງທີ VIII ພ້ອມທັງນຳພາກຳນົດວິໄສທັດ ຮອດປີ 2040, ຍຸດທະສາດຮອດປີ 2030, ແຜນວຽກຈຸດສຸມ 5 ປີ ຂອງອົງການພຸດທະສາສະໜາສັມພັນລາວ ພ້ອມທັງນຳພາຈັດຕັ້ງປະຕິບັດມະຕິດັ່ງກ່າວມີຜົນສຳເລັດຢ່າງຈົບງາມ; ນຳພາປັບປຸງທຳມະນູນປົກຄອງສົງລາວ ໃຫ້ແທດເໝາະກັບສະພາບແວດລ້ອມການເມືອງ ແລະ ສັງຄົມລາວໄລຍະໃໝ່; ສືບຕໍ່ນຳພາຮຽບຮຽງ ແລະ ຈັດພິມປຶ້ມພຣະໄຕຣປິດົກເປັນພາສາລາວ ແລະ ພາສາບາລີ ພ້ອມທັງໄດ້ຈັດພິມ ຈຳນວນ 5.000 ຊຸດ ຊຸດລະ 45 ຫົວ ຖືເປັນຄັ້ງປະຫວັດສາດທາງພຸດທະສາສະໜາຂອງລາວເຮົາ; ສືບຕໍ່ສ້າງກຸດຕິປະທານສົງສຳເລັດ; ນຳພາອອກຕົນຍາດໂຍມສ້າງສາ ແລະ ບູລະນະວັດວາອາຮາມ, ເຈດີ, ໂຮງຮຽນສົງ, ສ້າງສຸກສາລາ, ສ້າງທາງເຂົ້າບ້ານ, ສ້າງຂົວ ແລະ ອະນຸເຄາະແກ່ປະຊາຊົນເຂດຫ່າງໄກສອກຫຼີກ; ຄະນະບໍລິຫານງານສູນກາງ ອພສ ທີ່ສັງກັດຢູ່ອ້ອມຂ້າງສູນກາງ, ນະຄອນຫຼວງວຽງຈັນ ແລະ ບັນດາແຂວງ ໄດ້ອອກເຫື່ອເທແຮງໃນການເທດສະໜາສັ່ງສອນພຸດທະສາສະນິກະຊົນໃຫ້ປະພຶດຕົນເປັນຄົນດີຂອງຊາດ, ເສີມສ້າງຄຸນນະທຳ ແລະ ເສີມສ້າງຄວາມສາມັກຄີປອງດອງອັນດີງາມຂອງປະຊາຊົນທັງປວງ; ພິເສດ ໃນໄລຍະການແຜ່ລະບາດພະຍາດໂຄວິດ-19 ແລະ ໄລຍະເກີດໄພພິບັດນ້ຳຖ້ວມ ໂດຍການນຳພາຂອງພຣະອາຈານໃຫຍ່ປະທານ-ຮອງປະທານສູນກາງອົງການພຸດທະສາສະໜາ ມີພຣະສົງຫຼາຍອົງໄດ້ລະດົມສັດທາຍາດໂຍມຈາກພາຍໃນ ແລະ ຕ່າງປະເທດເພື່ອອະນຸເຄາະແກ່ປະຊາຊົນທີ່ໄດ້ຮັບຜົນກະທົບຈາກໄພພິບັດມີມູນຄ່າຫຼວງຫຼາຍ; ໄດ້ປະກອບສ່ວນປະຕິບັດສອງວາລະແຫ່ງຊາດ ເປັນຕົ້ນໄດ້ອົບຮົມສີລະທຳຢູ່ຕາມໂຮງຮຽນ, ປະຕິບັດໂຄງການບວດສາມະເນນໄລຍະປິດພາກຮຽນ ເພື່ອເຮັດໃຫ້ຊາວໜຸ່ມ, ເຍົາວະຊົນຫ່າງໄກສິ່ງເສບຕິດ. ຄຽງຄູ່ກັບການປັບປຸງວຽກງານອົງການພຸດທະສາສະໜາສັມ

ພັນລາວແລ້ວ ຍັງໄດ້ອອກແຮງເສີມສ້າງສາຍພົວພັນລະຫວ່າງອົງການພຸດລາວ ກັບອົງການພຸດໃນພາກພື້ນ ແລະ ສາກົນ ເປັນຕົ້ນກັບອົງການພຸດຫວຽດນາມ; ກຳປູເຈຍ, ສປ ຈີນ, ໄທ, ມຽນມາ, ຍີ່ປຸ່ນ ແລະ ພິເສດໄດ້ພະຍາຍາມຟື້ນຟູວັດລາວຢູ່ອິນເດຍ, ຍີ່ປຸ່ນ ແລະ ອື່ນໆ. ນອກນັ້ນ, ຍັງມີຜົນງານອີກຈຳນວນຫຼວງຫຼວງຫຼາຍ ຕາມການສະຫຼຸບ ແລະ ຕີລາຄາ.

ໃນໂອກາດອັນເປັນສິລິມຸງຄຸນນີ້ ຕາງໜ້າໃຫ້ກົມການເມືອງສູນກາງພັກ, ສະພາແຫ່ງຊາດ, ລັດຖະບານ ແລະ ແນວລາວສ້າງຊາດ ຂ້າພະເຈົ້າ ຂໍສະແດງຄວາມສາທຸອະນຸໂມທະນາ ແລະ ຍ້ອງຍໍຊົມເຊີຍ ຕໍ່ຜົນສຳເລັດອັນພົ້ນເດັ່ນທີ່ພຣະເຖຣາ-ນຸເຖຣະ ກັມມະການສູນກາງອົງການພຸດທະສາສະໜາທຸກອົງຍາດມາໄດ້ໃນ 5 ປີຜ່ານມາ ຢ່າງສຸດອົກສຸດໃຈ. (ສາທຸ)

- ພຣະເຖຣາ-ນຸເຖຣະ,

- ບັນດາແຂກຜູ້ມີກຽດ ທີ່ນັບຖື ແລະ ຮັກແພງທັງຫຼາຍ !

ຄຽງຄູ່ກັບຜົນງານທີ່ຍາດມາໄດ້ນັ້ນ, ເມື່ອທຽບໃສ່ຄວາມຮຽກຮ້ອງຕ້ອງການຂອງໜ້າທີ່ການເມືອງ ກໍ່ຄືການຊັ່ງຊາໃນສະພາບການໃໝ່ ເຫັນວ່າ ພວກເຮົາ ຍັງຈະຕ້ອງໄດ້ບຸກບືນສູ້ຊົນຕື່ມອີກ; ບັນຫາຂໍ້ຄົງຄ້າງຕ່າງໆ ທີ່ຍົກຂຶ້ນມາໃນຮ່າງບົດສະຫຼຸບຕີລາຄາ, ແຜນພັດທະນາອົງການພຸດທະສາສະໜາສັມພັນລາວ ກໍ່ຄືການປະກອບຄຳເຫັນຂອງພາກສ່ວນທີ່ກ່ຽວຂ້ອງນັ້ນ, ຂ້າພະເຈົ້າເຫັນດີສະໜັບສະໜູນ, ແຕ່ແນວໃດກໍ່ຕາມຂໍໃຫ້ພຣະເຖຣາ-ນຸເຖຣະ, ກັມມະການສູນກາງອົງການພຸດທະສາສະໜາສັມພັນແຫ່ງ ສປປ ລາວ ສະໄໝທີ IX ຈົ່ງພ້ອມກັນຕັດສິນໃຈແກ້ໄຂ 7 ຈຸດ ທີ່ຄົງຄ້າງ ດັ່ງທີ່ໄດ້ກ່າວໃນບົດຫຼຸບຕີລາເຊັ່ນ: (1). ການເຄື່ອນໄຫວຂອງແຕ່ລະກັມມາທິການບໍ່ທັນໜັກແໜ້ນ, ເຂັ້ມແຂງ, ການເຮັດວຽກບໍ່ທັນເປັນລະບົບ ແລະ ຂາດລະບອບແບບແຜນໃນການນຳພາເຄື່ອນໄຫວ; (2). ກົນໄກການປະສານສົມທົບລະຫວ່າງສູນກາງ ແລະ

ທ້ອງຖິ່ນ, ການປະສານສົມທົບກັບຄະນະພັກ, ອົງການປົກຄອງ ແລະ ພາກສ່ວນທີ່ກ່ຽວຂ້ອງຍັງເຮັດບໍ່ທັນໄດ້ດີ; (3). ຄວາມເປັນເຈົ້າການໃນການບູລະນະປະຕິສັງຂອນວັດວາອາຣາມ, ພຣະທາດເຈດີ, ປູຊະນີຍະສະຖານທີ່ເປັນມໍລະດົກເກົ່າແກ່ ປ່ອຍປະລະເລີຍໃຫ້ຄົນບໍ່ດີໄປຂຸດຄົ້ນເອົາວັດຖຸມີຄ່າຢູ່ໃນພຣະທາດເຈດີ, ພຣະພຸດທະຮູບເກົ່າແກ່ຖືກຄົນລັກໄປ ແລະ ອື່ນໆ; (4). ການເຄື່ອນໄຫວຂອງພຣະສົງ-ສາມະເນນ ແລະ ຊາວພຸດຈຳນວນໜຶ່ງບໍ່ທັນສອດຄ່ອງກັບພຣະທຳ ວິໄນ, ທຳມະນູນປົກຄອງສົງ ແລະ ດຳລັດ 315/ລບ ພາໃຫ້ພາບພົດຂອງພຸດທະສາສະໜາ ກໍຄືການຈັດຕັ້ງສົງເສຍບົດບາດ; (5). ການຮັບເອົາຜູ້ບວດເຂົ້າມາໃໝ່ຈຳນວນໜຶ່ງ ບໍ່ທັນຖືກຕາມມາດຖານເງື່ອນໄຂທີ່ກຳນົດໃນພຣະທຳ ວິໄນ, ທຳມະນູນປົກຄອງສົງ ແລະ ລະບຽບກົດໝາຍ ເຊັ່ນ: ຜູ້ຕິດຢາ ແລະ ພົວພັນບັນຫາຢາເສບຕິດ, ກະທຳຜິດກົດໝາຍແລ້ວໜີເຂົ້າມາບວດ ແລະ ອື່ນໆ ເວລາບວດແລ້ວຍັງສືບຕໍ່ພຶດຕິກຳດັ່ງກ່າວ; (6). ພຣະສົງ ແລະ ຍາດໂຍມຈຳນວນໜຶ່ງສວຍໃຊ້ພຸດທະສາສະໜາ ເພື່ອຊອກຫາຜົນປະໂຫຍດຊຶ່ງຂັດກັບຫຼັກການທາງສາສະໜາ; (7). ບຸກຄະລາກອນສົງມີຄວາມຈຳກັດທາງດ້ານປະລິມານ ແລະ ຄຸນນະພາບ ໂດຍສະເພາະແມ່ນຂັ້ນທ້ອງຖິ່ນ, ຈຳນວນພຣະສົງ-ສາມະເນນ ນັບມື້ຫຼຸດລົງ, ການພົວພັນຮ່ວມມືກັບອົງການພຸດພາກພື້ນ ແລະ ສາກົນຍັງບໍ່ທັນກວ້າງຂວາງ.

- ພຣະເຖຣາ-ນຸເຖຣະ,
- ບັນດາແຂກຜູ້ມີກຽດ ທີ່ນັບຖື ແລະ ຮັກແພງທັງຫຼາຍ !

ໃນຊຸມປີຕໍ່ໜ້ານີ້ ບົນເສັ້ນທາງກ້າວເດີນຂອງພວກເຮົາ, ປະເທດເຮົາມີຂໍ້ສະດວກ, ມີເງື່ອນໄຂດີຂຶ້ນກວ່າເກົ່າ, ແຕ່ພວກເຮົາຍັງຈະປະເຊີນໜ້າກັບຄວາມທ້າທາຍ, ທົດສອບຫຼາຍດ້ານ, ສະພາບການຂອງສາກົນ ແລະ ພາກພື້ນ

ຍັງຈະສືບຕໍ່ຜັນແປຢ່າງສັບສົນ, ສະພາບເສດຖະກິດ-ສັງຄົມພາຍໃນຂອງພວກເຮົາ ເຖິງວ່າຈະຜ່ອນຄາຍລົງ, ແຕ່ກໍ່ຍັງຈະມີຄວາມຫຍຸ້ງຍາກຢູ່, ໃນສະພາບການດັ່ງກ່າວ ອາດຈະມີພວກບໍ່ດີປັ່ນປ່ວນ ໂດຍສະເພາະການສວຍໃຊ້ບັນຫາສາສະໜາ, ບັນຫາເຜົ່າ, ສື່ສັງຄົມອອນລາຍ ເວົ້າໂຍກຈຸດອ່ອນ-ຂໍ້ຄົງຄ້າງຂອງພັກ-ລັດ, ແຕ່ຖືຕໍ່າບັນດາຜົນງານ ແລະ ຜົນສໍາເລັດທີ່ພວກເຮົາຍາດມາໄດ້, ສ້າງຄວາມບໍ່ສະຫງົບທາງດ້ານການເມືອງ, ສ້າງເງື່ອນໄຂໃຫ້ມີການແຊກແຊງວຽກງານພາຍໃນຂອງພວກເຮົາ ນໍາໃຊ້ກົນອຸບາຍຍຸດທະສາດ ການຫັນປ່ຽນໂດຍສັນຕິ ແລະ ຍູ້ແຮງ ການຫັນປ່ຽນດ້ວຍຕົນເອງ ດ້ວຍຫຼາຍຮູບການຕິດພັນກັບໄພອັນຕະລາຍຕ່າງໆ; ດັ່ງນັ້ນ ຕໍ່ໜ້າສະພາບດັ່ງກ່າວ ຮຽກຮ້ອງໃຫ້ພຣະເຖຣາ-ນຸເຖຣະ, ກັມມະການສູນກາງອົງການພຸດທະສາສະໜາ, ພຣະສົງ-ສາມະເນນ ຕະຫຼອດຮອດບັນດາພຸດທະສາສະນິກະຊົນທັງຫຼາຍ ຕ້ອງຢືນຢູ່ບົນຈິດໃຈປະຕິວັດ ແລະ ຍຶດໝັ້ນໃນອຸດົມການຂອງພັກ, ຂໍໃຫ້ເອົາ ມະຕິ 12 ຂອງພັກ: ເສີມຂະຫຍາຍບົດບາດນໍາພາທີ່ເຂັ້ມແຂງຂອງພັກ ເຂົ້າໃນການເຄື່ອນໄຫວຂອງອົງການພຸດທະສາສະໜາສັມພັນແຫ່ງ ສປປ ລາວ ໃຫ້ປະກົດຜົນເປັນຈິງ, ກອງປະຊຸມໃຫຍ່ຜູ້ແທນພຣະສົງທົ່ວປະເທດ ຄັ້ງທີ IX ຂອງອົງການພຸດທະສາສະໜາສໍາພັນແຫ່ງ ສປປ ລາວ ໃນຄັ້ງນີ້ ເປັນບາດກ້າວທີ່ສໍາຄັນ ໄດ້ມີການຄົ້ນຄວ້າຄັດເລືອກ ແລະ ຮັບຮອງເອົາບຸກຄະລາກອນສົງ ເພື່ອມານໍາພາພຣະສົງ-ສາມະເນນ, ພໍ່ຂາວ, ແມ່ຂາວໃນການເຄື່ອນໄຫວ ຂ້າພະເຈົ້າ ຂໍຮຽກຮ້ອງໃຫ້ກັມມະການສູນກາງອົງການພຸດທະສາສະໜາ ຊຸດໃໝ່ໄດ້ເອົາໃຈໃສ່ຕໍ່ບັນຫາ, ດັ່ງນີ້:

1. ຕ້ອງສ້າງການຫັນປ່ຽນໃໝ່ຢ່າງແຂງແຮງເລິກເຊິ່ງຮອບດ້ານທາງດ້ານແນວຄິດຈິນຕະນາການຂອງພຣະສົງ-ສາມະເນນ, ພໍ່ຂາວ, ແມ່ຂາວ, ພຸດທະສາສະນິກະຊົນ ໂດຍການສ້າງແນວຄິດເຊື່ອມຊຶມມູນເຊື້ອຂອງພັກ, ຂອງຊາດ ແລະ ຄວາມເປັນມາຂອງພຸດທະສາສະໜາ, ໃຫ້ດຶງດູດມີສັດທາຂອງປະ

ຊາຊົນຕໍ່ພຸດທະສາສະໜາ, ຄວາມເຊື່ອໝັ້ນຕໍ່ການນຳພາຂອງພັກ ຂອງລັດ, ມີນ້ຳໃຈຮັກຊາດ ຮັກບ້ານເກີດເມືອງນອນ, ມີສະຕິເຄົາລົບປະຕິບັດພຣະທຳ, ວິໄນ, ທຳມະນູນປົກຄອງສົງລາວ ແລະ ລະບຽບກົດໝາຍ, ເພີ່ມຄວາມກະຕືລືລົ້ນ ໃນການພັດທະນາອົງການພຸດ ແລະ ພັດທະນາບຸກຄະລາກອນສົງ ເພື່ອຍົກລະດັບຄວາມຮູ້ ຄວາມສາມາດ. ພ້ອມນັ້ນ ກໍ່ຕ້ອງໄດ້ສືບຕໍ່ເທດສະໜາສັ່ງສອນອອກຕົນຍາດໂຍມ ດ້ວຍຮູບການຕ່າງໆ, ເທດສະໜາຜ່ານສື່ຕ່າງໆໃຫ້ເລິກເຊິ່ງ, ກວ້າງຂວາງ ແລະ ແທດເຖິງ; ປຸກລະດົມຂົນຂວາຍພຸດທະສາສະນິກະຊົນເຂົ້າໃນການຈັດຕັ້ງປະຕິບັດມະຕິຂອງພັກ, ແຜນພັດທະນາເສດຖະກິດ-ສັງຄົມຂອງລັດ ກໍຄື ການສ້າງເສດຖະກິດເອກະລາດ ເປັນເຈົ້າຕົນເອງ, ເຮັດໃຫ້ຊີວິດການເປັນຢູ່ທາງດ້ານວັດຖຸ, ຈິດໃຈ ໄດ້ຮັບການຍົກສູງໃຫ້ເຂັ້ມແຂງຂຶ້ນໄປເລື້ອຍໆ ເພື່ອໃຫ້ປະຊາຊົນຮັບຮູ້ ແລະ ເຂົ້າໃຈບາບ ບຸນ ຄຸນໂທດ; ຮູ້ເສີມສ້າງຄຸນນະທຳ, ປັບປຸງຮູບການ ແລະ ວິທີການເທດສະນາສັ່ງສອນ ຄຳເວົ້າໃຫ້ເຂົ້າໃຈງ່າຍ ສາມາດນຳໄປປະພຶດປະຕິບັດໃຫ້ເກີດປະໂຫຍດໃນຊີວິດປະຈຳວັນໃຫ້ເປັນຮູບປະທຳ; ການເຮັດບຸນ ແລະ ພິທີທາງພຸດທະສາສະໜາ ຖືວ່າຫຼາຍ ແລະ ກວ້າງຂວາງ ເຮັດແນວໃດເພື່ອປະຢັດເວລາລົງ ແຕ່ຮັກສາໄດ້ເນື້ອໃນ ຄວນມີການດັດປັບໃຫ້ເຂົ້າກັບສະພາບໄລຍະໃໝ່, ອັນໃດຄວນໃຫ້ເປັນລັກສະນະມວນຊົນ, ອັນໃດທາງການ ແລະ ອັນໃດຄວນເຊີນສູນກາງ, ອັນໃດຄວນມອບທ້ອງຖິ່ນ ຄວນກຳນົດແຈ້ງ.

2. ກັມມະການອົງການພຸດທະສາສະໜາແຕ່ລະຂັ້ນ ຕ້ອງໄດ້ເອົາໃຈໃສ່ນຳເອົາເນື້ອໃນ ມະຕິກອງປະຊຸມໃຫຍ່ຜູ້ແທນສົງທົ່ວປະເທດ ຄັ້ງທີ IX ໄປຈັດຕັ້ງຜັນຂະຫຍາຍ ນຳເຂົ້າສູ່ພາກປະຕິບັດຕົວຈິງໃຫ້ໄດ້ຮັບໝາກຜົນດີ ດ້ວຍການນຳພາເຜີຍແຜ່ໃຫ້ພຣະສົງ-ສາມະເນນ ແລະ ອອກຕົນຍາດໂຍມໃຫ້ເຂົ້າໃຈຢ່າງແຈ່ມແຈ້ງຕໍ່ມະຕິກອງປະຊຸມໃຫຍ່ ແລະ ປະຕິບັດໃຫ້ເຂົ້າສູ່ລວງເລິກ

ແລະ ກວ້າງຂວາງ, ຮັບປະກັນການເຄື່ອນໄຫວໃຫ້ໄປຕາມທິດລວມຂອງພັກ ໂດຍສະເພາະ ແມ່ນໄປຕາມມະຕິກອງປະຊຸມໃຫຍ່ ຄັ້ງທີ XII ຂອງພັກ, ໂຄງການການເມືອງຂອງພັກ ສະບັບທີ 3; ສືບຕໍ່ໃນການຈັດພິມຄຳພີພຣະໄຕປິດົກລາວ ໃຫ້ສຳເລັດຕາມແຜນ ເພື່ອເປັນຂໍ້ມູນໃຫ້ແກ່ອົງການຕ່າງໆ, ໂຮງຮຽນ, ສະຖາບັນການສຶກສາ ແລະ ສາສະນິກະຊົນ ຜູ້ທີ່ສົນໃຈພຸດທະສາສະໜາທັງພາຍໃນ ແລະ ຕ່າງປະເທດ; ເອົາໃຈໃສ່ປົກປັກຮັກສາວັດວາອາຮາມ, ປູຊະນີຍະສະຖານ, ສະຖານທີ່ສັກກາລະບູຊາໃຫ້ໝັ້ນຄົງຖາວອນ;

3. ສືບຕໍ່ປະກອບສ່ວນວຽກງານສັງຄົມສົງເຄາະ, ການບັນເທົາທຸກຜູ້ປະສົບໄພທຳມະຊາດທີ່ອາດຈະເກີດຂຶ້ນ, ປຸກລະດົມຂົນຂວາຍໃຫ້ຍາດໂຍມປະກອບສ່ວນປະຕິບັດຂະບວນການແຂ່ງຂັນຮັກຊາດ ແລະ ພັດທະນາ ເປັນຕົ້ນຂະບວນການສ້າງຄຸນງາມຄວາມດີ ຫຼື ຮັກບ້ານເກີດ, ຜັນຂະຫຍາຍມະຕິ 04/ກມສພ ແລະ ມະຕິ 05/ລບ ຊຸກຍູ້ໃຫ້ອອກຕົນຍາດໂຍມມີການຜະລິດຜ້າຈີວອນ ແລະ ເຄື່ອງສັງຄະທານ ທົດແທນການນຳເຂົ້າເຄື່ອງດັ່ງກ່າວຈາກຕ່າງປະເທດ ຊຸກຍູ້ການຜະລິດ ແລະ ຊື້ສິນຄ້າລາວໃຫ້ຫຼາຍຂຶ້ນ; ສືບຕໍ່ໃນການລະດົມທຶນເຂົ້າມູນນິທິພຸດທະບັນດິດ (ມູນທິທິສົງ) ແລະ ກອງທຶນຂອງບັນດາກຳມາທິການ ທີ່ຕັ້ງຂຶ້ນແລ້ວໃຫ້ມີຈຳນວນເງິນເພີ່ມຂຶ້ນ ເພື່ອຮັບໃຊ້ແກ່ການເຄື່ອນໄຫວວຽກງານງານອົງການພຸດທະສາສະໜາສັມພັນລາວໃຫ້ນັບເຕີບໂຕ; ປະກອບສ່ວນໃນການປະຕິບັດສອງວາລະແຫ່ງຊາດຂອງລັດຖະບານ ໂດຍສະເພາະ ແມ່ນວາລະແຫ່ງຊາດວ່າດ້ວຍການຕ້ານຢາເສບຕິດ ດ້ວຍການເທດສັ່ງສອນປະຊາຊົນ, ຊາວໜຸ່ມເຍົາວະຊົນໃຫ້ຫ່າງໄກຈາກສິ່ງເສບຕິດ, ອົບຮົມຈິດໃຈປະຊາຊົນໃຫ້ປະຕິບັດຂະບວນການ 4 ບໍ່ ຄື: ບໍ່ເສບ, ບໍ່ຊື້, ບໍ່ຂາຍ ແລະ ບໍ່ຜະລິດ-ລຳລຽງ ຢາເສບຕິດ;

4. ເພີ່ມທະວີການພົວພັນຮ່ວມມືກັບອົງການພຸດປະເທດເພື່ອນມິດຍຸດທະສາດ, ອົງການພຸດພາກພື້ນ ແລະ ສາກົນ ຕາມແນວທາງການຕ່າງປະເທດຂອງພັກ ເພື່ອຍາດແຍ່ງເອົາບົດຮຽນ, ເຕັກນິກວິທະຍາສາດ ແລະ ທຶນ

ຮອບເພື່ອມາພັດທະນາວຽກງານອົງການພຸດສາສະໜາລາວເຮົາໃຫ້ມີການຫັນປ່ຽນຢ່າງແຂງແຮງເລິກເຊິ່ງ ແລະ ຮອບດ້ານ. ເພີ່ມທະວີການພົວພັນຮ່ວມມືກັບບັນດາອົງການສົງລາວຢູ່ຕ່າງປະເທດ ໂດຍຜ່ານການເຄື່ອນໄຫວວຽກງານຂອງ ພະສະມະທູດລາວ ຢ່າງແຂງແຮງ.

5. ຕ້ອງເປັນເຈົ້າການ ໃນການເຄື່ອນໄຫວຕາມພາລະບົດບາດ, ສິດ ແລະ ໜ້າທີ່ຂອງບັນດາກຳມະການ ໂດຍສະເພາະຊຸກຍູ້, ຕິດຕາມການຈັດຕັ້ງປະຕິບັດທຳມະນູນສົງລາວ, ມະຕິກອງປະຊຸມໃຫຍ່, ແຜນພັດທະນາອົງການພຸດທະສາສະໜາໃນແຕ່ລະໄລຍະໃຫ້ເປັນປົກກະຕິ, ສຶບຕໍ່ເກັບກຳສະພາບແນວຄິດ, ຄຳຄິດຄຳເຫັນ ແລະ ທາງສຽງສັງຄົມຂອງພຣະສົງ-ສາມະເນນ, ອອກຕົນຍາດໂຍມ ທີ່ມີຕໍ່ການຈັດຕັ້ງ ແລະ ບຸກຄະລາກອນສົງເພື່ອແກ້ໄຂໃຫ້ທັນເວລາ.

6. ກົມມະການສູນກາງອົງການພຸດທສາສະໜາສົມພັນລາວຕ້ອງເປັນໃຈກາງເຕົ້າໂຮມຄວາມສາມັກຄີເປັນປຶກແຜ່ນພາຍໃນ ຄະນະ ອພສ ແຕ່ລະຂັ້ນພຣະສົງ-ສາມະເນນ ໃຫ້ໜັກແໜ້ນ ເພື່ອປັບປຸງການຈັດຕັ້ງ ໃຫ້ມີຄວາມເຂັ້ມແຂງ, ມີຄຸນນະພາບໃໝ່ ປະກອບສ່ວນຢ່າງຕັ້ງໜ້າເຂົ້າໃນພາລະ ກິດປົກປັກຮັກສາ ແລະ ສ້າງສາພັດທະນາປະເທດຊາດກ້າວຂຶ້ນສູ່ຈຸດໝາຍສັງຄົມນິຍົມ, ເຊິ່ງຄະນະພັກ, ອົງການປົກຄອງ, ແນວລາວສ້າງຊາດ ແລະ ພາກສ່ວນກ່ຽວຂ້ອງຕ້ອງອຳນວຍຄວາມສະດວກ, ໃຫ້ການຮ່ວມມືຢ່າງສຸດຂີດ ແລະຕ້ອງສ້າງເງື່ອນໄຂອຳນວຍຄວາມສະດວກໃຫ້ແກ່ ອພສ ແຕ່ລະຂັ້ນ;

7. ກອງປະຊຸມໃຫຍ່ ຜູ້ແທນສົງທົ່ວປະເທດ ຄັ້ງທີ IX ໄດ້ຮັບຮອງເອົາກຳມະການສູນກາງອົງການພຸດທະສາສະໜາ, ຄະນະບໍລິຫານງານປະຈຳການ, ປະທານ-ຮອງປະທານ ຢ່າງຖືກຕ້ອງຕາມພຣະທຳ ວິໄນ ແລະ ທຳມະນູນສົງລາວ, ຮັບປະກັນດ້ານມາດຕະຖານ, ເງື່ອນໄຂ ແລະ ໂຄງປະກອບຕາມທີ່ກຳນົດໄວ້, ມີລັກສະນະແບບກ້າວກະໂດດ ມີຜູ້ເກົ່າ, ຜູ້ໃໝ່, ຜູ້ອາວຸໂສ, ກາງ, ແຕ່

ຂ້າພະເຈົ້າຂໍມີຄວາມເຫັນຕື່ມ ຕໍ່ກຳມະການສູນກາງອົງການພຸດທະສາສະໜາຊຸດໃໝ່ ດັ່ງນີ້:

- ໃຫ້ຮີບຮ້ອນຈັດຕັ້ງຜັນຂະຫຍາຍມະຕິກອງປະຊຸມໃຫຍ່ເທື່ອນີ້ເປັນແຜນງານ, ໂຄງການ ແລະ ຫັນເປັນນິຕິກຳລະອຽດ; ຈັດຕັ້ງເຜີຍແຜ່, ເຊື່ອມຊຶມໃຫ້ກົມມະການອົງການພຸດທະສາສະໜາແຕ່ລະຂັ້ນ, ພຣະສົງ-ສາມະເນນ, ພຸດທະສາສະນິກະຊົນໃຫ້ທົ່ວເຖິງ ເພື່ອສ້າງຄວາມຮັບຮູ້-ເຂົ້າໃຈ ແລະ ເອກະພາບຕໍ່ເນື້ອໃນ, ຄາດໝາຍສູ້ຊົນໃນຕໍ່ໜ້າ ເພື່ອສ້າງທັດສະນະ ແລະ ຄວາມຮັບຜິດຊອບໃນການນຳພາຕົວຈິງ ໃຫ້ມີການຫັນປ່ຽນຢ່າງແຂງແຮງ, ເລິກເຊິ່ງ ແລະ ຮອບດ້ານ ໃນວຽກງານອົງການພຸດ.

- ໃຫ້ຮີບຮ້ອນແບ່ງວຽກ, ແບ່ງຄວາມຮັບຜິດຊອບ ພາຍໃນກຳມະການສູນກາງອົງການພຸດທະສາສະໜາ ກໍ່ຄືປະທານ-ຮອງປະທານ, ຄະນະບໍລິຫານງານປະຈຳການ ໃຫ້ລະອຽດ, ຈະແຈ້ງເພື່ອນຳພາ-ຊີ້ນຳວຽກງານ ອພສ ກໍ່ຄືການປະຕິບັດມະຕິກອງປະຊຸມເທື່ອນີ້ ເຂົ້າສູ່ວຽກງານຕົວຈິງໂດຍໄວ; ປັບປຸງທຳມະນູນສົງລາວໃຫ້ເໝາະສົມກັບສະພາບການໃໝ່, ປັບປຸງພາລະບົດບາດຄະນະທີ່ປຶກສາອົງການພຸດທສາສະໜາແຕ່ລະຂັ້ນ, ຍົກສູງບົດບາດຂອງຄະນະທີ່ປຶກສາ, ສ້າງຄະນະທີ່ປຶກສາໃຫ້ຫຼາຍ.

- ຕ້ອງເຊີດຊູຄວາມເປັນເຈົ້າການຄວາມຮັບຜິດຊອບຕໍ່ໜ້າພາລະບົດ, ໜ້າທີ່, ທຸ້ມເທເຫື່ອແຮງ, ສະຕິປັນຍາ, ຄວາມຮູ້-ຄວາມສາມາດ, ມີຄວາມເສຍສະຫຼະ ເພື່ອເຮັດສຳເລັດໜ້າທີ່ ທີ່ຖືກມອບໝາຍ; ຄຽງຄູ່ກັບການເຝິກຝົນຫຼໍ່ຫຼອມຕົນເອງ ເສີມສ້າງດ້ານຄຸນນະທຳ, ຄວາມເປັນແບບຢ່າງນຳໜ້າຕ່າງໆ, ຈິງໃຈຊ່ວຍເຫຼືອກໍ່ສ້າງເຊິ່ງກັນແລະກັນ ໃຫ້ມີຄວາມເຂັ້ມແຂງ, ມີຄວາມກ້າ

ຫານເວົ້າວ່າກັນ, ເສີມຂະຫຍາຍມູນເຊື້ອ ກໍ່ຄືບົດບາດຂອງການຈັດຕັ້ງອົງການພຸດເພື່ອຮັກສາສັດທາຂອງອອກຕົນຍາດໂຍມໃຫ້ໝັ້ນຄົງ.

- ຄະນະບໍລິຫານງານສູນກາງສະຫະພັນກຳມະບານລາວ ຍາມໃດກໍ່ຕ້ອງຍຶດໝັ້ນ ແລະ ປະຕິບັດຢ່າງເຂັ້ມງວດ ຕໍ່ພຣະທຳ ວິໄນ, ທຳມະນູນສົງລາວ, ບັນດາຫຼັກການ, ລະບອບແບບແຜນວິທີການນຳພາ-ວິທີການເຮັດວຽກ; ຮັບຜິດຊອບໂດຍກົງ ຕໍ່ຜົນໄດ້-ຜົນເສຍ ຕໍ່ວຽກງານອົງການພຸດທະສາສະໜາ.

- ພຣະເຖຣາ-ນຸເຖຣະ,

- ບັນດາແຂກຜູ້ມີກຽດ ທີ່ນັບຖື ແລະ ຮັກແພງທັງຫຼາຍ !

ຂ້າພະເຈົ້າ ມີຄວາມເຊື່ອໝັ້ນຢ່າງແຮງກ້າວ່າ ດ້ວຍຄວາມຮັບຜິດຊອບ ດ້ວຍຄວາມຕັດສິນໃຈສູງ ແລະ ຄວາມເປັນເອກະພາບອັນສູງສົ່ງ ຂອງຄະນະບໍລິຫານງານສູນກາງອົງການພຸດທະສາສະໜາສັມພັນແຫ່ງ ສປປ ລາວ ສະໄໝທີ IX ພາຍໃຕ້ການນຳພາໂດຍກົງ ແລະ ເປັນແກນນຳຂອງພຣະອາຈານໃຫຍ່ມະຫາເຫວດ ມະເສໄນ, ປະທານສູນກາງອົງການພຸດທະສາສະໜາສັມພັນ ແຫ່ງ ສປປ ລາວ ພ້ອມຄະນະ, ຈະສືບຕໍ່ນຳພາອົງການພຸດປະເທດເຮົາມີບົດບາດທີ່ພົ້ນເດັ່ນ ໄດ້ຮັບການພັດທະນາກ້າວຂຶ້ນຢ່າງບໍ່ຢຸດຢັ້ງ.

ສຸດທ້າຍນີ້, ໃນໂອກາດທີ່ເປັນສິລິມຸງຄຸນ ແລະ ມໍ່ວັນປີໃໝ່ສາກົນ, ຂໍອວຍພອນໄຊອັນປະເສີດ ແດ່ພຣະອາຈານໃຫຍ່ໃນຄະນະປະທານ, ພຣະເຖຣາ-ນຸເຖຣະ, ຜູ້ແທນສົງ, ພຣະສົງ-ສາມະເນນໃນຂອບເຂດທົ່ວປະເທດ, ບັນດາຄອບຄົວການນຳ, ຜູ້ຊົງຄຸນວຸດທິ,ແຂກຮັບເຊີນ, ຈົ່ງມີພາລະນາໄມສົມບູນ, ມີຄວາມສຸກ ໃນຊີວິດສ່ວນຕົວ, ມີຜົນສຳເລັດໃນໜ້າທີ່ວຽກງານ ແລະ ພ້ອມກັນຈັດຕັ້ງຜັນຂະຫຍາຍ ມະຕິກອງປະຊຸມໃຫຍ່ຄັ້ງນີ້ໃຫ້ມີຜົນສຳເລັດຢ່າງສະຫງ່າງາມ.

ສາທຸ/ຂໍຂອບໃຈ.

**ບົດປະກອບຄຳເຫັນ**

ທ່ານ ນ. ດຣ.ອິນລາວັນ ແກ້ວບຸນພັນ

ຮອງປະທານ ສູນກາງແນວລາວສ້າງຊາດ ຜູ້ຊີ້ນຳວຽກງານສາສະໜາ

**“ບົດບາດພຣະສົງລາວຕໍ່ການເຕົ້າໂຮມຄວາມສາມັກຄີປະຊາຊົນລາວບັນດາເຜົ່າ”**

**ຕໍ່ກອງປະຊຸມໃຫຍ່ຜູ້ແທນພຣະສົງ ທົ່ວປະເທດ ສະໄໝທີ IX**

**ຂອງອົງການພຸດທະສາສະໜາສັມພັນ ແຫ່ງ ສປປ ລາວ**

- ນ້ອມນະມັດສະການ: ພຣະອາຈານໃຫຍ່ ມະຫາເຫວດ ມະເສໄນ, ປະທານ ສູນກາງອົງການພຸດທະສາສະໜາສັມພັນ ແຫ່ງ ສປປ ລາວ ທີ່ເຄົາລົບຢ່າງສູງ;
- ນະມັດສະການພຣະເຖຣານຸເຖລະ;
- ຮຽນ: ບັນດາທ່ານ ການນຳພັກ-ລັດທີ່ເຄົາລົບຢ່າງສູງ;
- ຮຽນ: ບັນດາທ່ານ ແຂກທີ່ມີກຽດ, ທ່ານຍິງ ທ່ານຊາຍ ທີ່ນັບຖື ແລະ ຮັກແພງ.

ມື້ນີ້ ຂ້າພະເຈົ້າ/ຂະນ້ອຍ ມີຄວາມພາກພູມໃຈ ແລະ ຖືເປັນກຽດຢ່າງສູງ ທີ່ໄດ້ຕາງໜ້າການນຳສູນກາງແນວລາວສ້າງຊາດ ກໍຄື ຄະນະປະຈຳສູນກາງແນວລາວສ້າງຊາດ ເຂົ້າຮ່ວມກອງປະຊຸມສຳຄັນນີ້ ແລະ ໄດ້ປະກອບ ຄຳເຫັນຕໍ່ກອງປະຊຸມໃຫຍ່ຜູ້ແທນພຣະສົງ ທົ່ວປະເທດ ສະໄໝທີ IX ຂອງ ອົງການພຸດທະສາສະໜາສັມພັນ ແຫ່ງ ສປປ ລາວ ໃນຄັ້ງນີ້.

ກ່ອນອື່ນຂ້າພະເຈົ້າ ຂໍນຳເອົາຄວາມຂໍານັບຊົມເຊີຍ, ຄໍາອວຍພອນອັນປະເສີດຈາກຄະນະກໍາມະການສູນກາງແນວລາວສ້າງຊາດ ສະໄໝທີ XI ເຊິ່ງຈະໄດ້ດໍາເນີນກອງປະຊຸມສາມັນຄົບຄະນະ ກໍາມະການສູນກາງແນວລາວສ້າງຊາດ ຄັ້ງທີ 5 ໃນວັນທີ 24-25 ທັນວາ 2025 ນີ້ ມາຍັງກອງປະຊຸມໃຫຍ່ຜູ້ແທນພຣະສົງທົ່ວປະເທດ ສະໄໝທີ IX ຂອງ ອົງການພຸດທະສາສະໜາສຳພັນ ແຫ່ງ ສປປ ລາວ ໃນຄັ້ງສໍາຄັນນີ້.

**<u>ພິເສດ</u>** ໃນໂອກາດອັນເປັນສິລິມຸງຄຸນນີ້ ຂ້າພະເຈົ້າໃນນາມຕາງໜ້າຄະນະປະຈຳສູນກາງແນວລາວສ້າງຊາດ ແລະ ໃນນາມສ່ວນຂະນ້ອຍ ຂໍອະນຸໂມທະນາສາທຸການ ຕໍ່ມະຕິຂອງຄະນະປະຈຳສູນກາງ ອພສ ທີ່ໄດ້ເອກະພາບກັນຮັບຮອງເອົາພຣະອາຈານໃຫຍ່ ມະຫາເຫວດ ມະເສໄນ ເປັນອົງປະທານສູນກາງ ອພສ. ແຫ່ງ ສປປ ລາວ.

ພ້ອມດຽວກັນນີ້ ຂໍສະແດງຄວາມເຫັນດີເປັນເອກະພາບຢ່າງສົມບູນຕໍ່ບົດລາຍງານການເຄື່ອນໄຫວວຽກງານໃນ 05 ປີຜ່ານມາ ແລະ ທິດທາງວຽກງານໃນ 05 ປີຕໍ່ໜ້າ ແລະ ແຜນຍຸດທະສາດຂອງອົງການ ອພສ ທີ່ສະເໜີໂດຍ ພຣະອາຈານໃຫຍ່ ບຸນສ່ວນ ພັນທະວົງ ຮອງປະທານ ສູນກາງ ອພສ. ໄດ້ສະເໜີຜ່ານໄປແລ້ວນັ້ນ.

ສະນັ້ນ, ໃນໂອກາດ ອັນສະຫງ່າລາສີນີ້ ຂ້າພະເຈົ້າ /ຂະນ້ອຍ ຂໍອະນຸຍາດມີຄຳເຫັນກ່ຽວກັບຫົວຂໍ້ "ບົດບາດຂອງພຣະສົງລາວຕໍ່ການເຕົ້າໂຮມຄວາມສາມັກຄີປະຊາຊົນລາວບັນດາເຜົ່າ"

ກ່ອນອື່ນຂ້າພະເຈົ້າ/ຂະນ້ອຍ ຂໍຍົກເອົາຕົວຢ່າງພາລະບົດບາດຂອງແນວລາວສ້າງຊາດ ກ່ຽວກັບມູນເຊື້ອການເຕົ້າໂຮມຄວາມສາມັກຄີດາເຜົ່າ.... ຄືບັນດາທ່ານຮັບຮູ້ແລ້ວວ່າ ອົງການແນວລາວສ້າງຊາດ ແມ່ນພາກສ່ວນໜຶ່ງ ໃນລະບົບການເມືອງ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ໂດຍແມ່ນພັກປະຊາຊົນປະຕິວັດລາວເປັນແກນນຳ, ທັງເປັນພື້ນຖານການເມືອງຂອງລະບອບປະຊາທິປະໄຕປະຊາຊົນລາວ ແລະ ມີມູນເຊື້ອມາຈາກແນວລາວອິດສະຫຼະ ແລະ ແນວລາວຮັກຊາດ ໃນເມື່ອກ່ອນ; ແນວລາວສ້າງຊາດ ແມ່ນອົງການຈັດຕັ້ງສຳພັນທາງການເມືອງ ຂອງທົ່ວສັງຄົມ ເປັນສະຫະພັນການຈັດຕັ້ງການເມືອງ-ສັງຄົມ, ການຈັດຕັ້ງສັງຄົມ ແລະ ບຸກຄົນທີ່ເປັນຕົວແທນໃຫ້ແກ່ຊັ້ນຄົນ, ຊົນເຜົ່າ, ສາສະໜາ, ເພດ-ໄວ ລວມທັງຕົວແທນຄົນເຊື້ອຊາດລາວ ທີ່ດຳລົງຊີວິດຢູ່ຕ່າງປະເທດ; ແນວລາວສ້າງຊາດ ມີພາລະບົດບາດໜ້າທີ່ໃນການເຕົ້າໂຮມຄວາມສາມັກຄີປອງດອງປວງຊົນທັງຊາດ, ສຶກສາອົບຮົມ, ປຸກລະດົມ ແລະ ຂົນຂວາຍມະຫາຊົນ ເພື່ອເປັນກຳລັງແຮງ ເຂົ້າຮ່ວມໃນພາລະກິດປົກປັກຮັກສາ ແລະ ສ້າງສາພັດທະນາປະເທດຊາດ.

**<u>ສຳລັບ</u>** ອົງການພຸດທະສາສະໜາສັມພັນລາວ ຖືວ່າເປັນອົງການພາຄີໜຶ່ງຂອງອົງການແນວລາວສ້າງຊາດ ແລະ ມີມູນເຊື້ອໃນການພົວພັນ ປະສານສົມ ທົບກັນ ມາແຕ່ສະໄໝຕໍ່ສູ້ກູ້ຊາດ, ອົງການພຸດທະສາສະໜາສັມພັນລາວກໍ່ຄືພຣະສົງລາວ ຍາມໃດກໍ່ຢູ່ຄຽງບ່າຄຽງໄຫຼ່ ແລະ ປະກອບສ່ວນໃນພາລະກິດປະຕິວັດ ຂອງປະເທດເຮົາ ຢ່າງສະເໝີຕົ້ນສະເໝີປາຍ. ມູນເຊື້ອການດຳລົງຊີວິດ ຂອງປະຊາຊົນລາວບັນດາເຜົ່າຈຳນວນຫຼາຍ ແມ່ນຕິດພັນກັບວັດວາ-ພຸດທະສາສະໜາ ມາແຕ່ດຶກດຳບັນ "**ພຣະພຸດທະສາສະໜາ ຕັດແຍກອອກຈາກຊາດບໍ່ໄດ້ ແລະ ພຣະສົງ-ສາມະເນນ ກໍຕັດແຍກອອກຈາກຍາດໂຍມລາວບັນດາເຜົ່າບໍ່ໄດ້**" ມູນເຊື້ອ ແລະ ປະຫວັດສາດຂອງຊາດລາວເຮົາໄດ້ຢັ້ງຢືນວ່າ: ພຣະສົງລາວໃນທຸກຍຸກທຸກສະໄໝ ລ້ວນແຕ່ຖືຄັນທຸງຊາດ ເປັນຊີວິດຈິດໃຈ ແລະ ຖືສິນທຳເປັນປັດໄຈປະກອບສ່ວນເຂົ້າໃນການກອບກູ້ເອກະລາດ ຜືນແຜ່ນດິນລາວ ແລະ ສະໜັບສະໜູນແນວທາງ-ນະໂຍບາຍຂອງພັກລັດວາງອອກແຕ່ລະໄລຍະ ເພື່ອຈຸດປະສົງສ້າງຄວາມສາມັກຄີປອງດອງປະຊາຊົນບັນດາເຜົ່າ ແລະ ເພື່ອຄວາມຮັ່ງມີຜາສຸກ - ຄວາມສີວິໄລ ຂອງປະຊາຊົນບັນດາເຜົ່າ.

ພາຍຫຼັງປະເທດຊາດໄດ້ຮັບການປົດປ່ອຍ ຈົນມາຮອດປັດຈຸບັນນີ້; ອົງການພຸດທະສາສະໜາສັມພັນລາວ ຍັງສືບຕໍ່ເສີມຂະຫຍາຍມູນເຊື້ອອັນດີງາມດັ່ງກ່າວ ປະກອບສ່ວນຢ່າງຕັ້ງໜ້າ ໃນພາລະກິດປົກປັກຮັກສາ ແລະ ສ້າງສາພັດທະນາປະເທດ, ໃນການເຄື່ອນໄຫວຕົວຈິງ ໄດ້ມີຜົນງານຫຼາຍດ້ານທີ່ພົ້ນເດັ່ນ ຄືທີ່ໄດ້ກ່າວໃນບົດລາຍງານນັ້ນແລ້ວ; ສິ່ງທີ່ຢັ້ງຢືນໃຫ້ເຫັນບົດບາດສຳຄັນ ຂອງພຣະສົງໃນການເຕົ້າໂຮມຄວາມສາມັກຄີພາຍໃນພຣະສົງ, ວັດຍັງເປັນບ່ອນເຕົ້າໂຮມສຶກສາອົບຮົມ ອອກຕົນຍາດໂຍມໃຫ້ເປັນພົນລະເມືອງດີ, ມີນ້ຳໃຈຮັກເຊື້ອແພງຊາດ, ຮັກບ້ານເກີດເມືອງນອນ, ຮູ້ບາບບຸນຄຸນໂທດ, ຮູ້ລົດລະປ່ອຍວາງ ໃນສິ່ງທີ່ບໍ່ດີຫຼືອະບາຍຍະມຸກຕ່າງໆ (ປະກົດການຫຍໍ້ທໍ້ອື່ນໆ).

ວັດ ແລະ ພຣະສົງລາວ ໄດ້ກາຍເປັນທີ່ເພິ່ງທາງໃຈ ໃຫ້ແກ່ປະຊາຊົນລາວບັນດາເຜົ່າ ໃນຍາມມີບັນຫາ, ມີຄວາມຂັດສົນໃນດ້ານຈິດໃຈ ...ພຣະສົງລາວໄດ້ນຳເອົາສິນທຳທາງພຸດທະສາສະໜາ ແລະ ແນວທາງອັນຖືກຕ້ອງ

ເປັນທຳ (ສອດຫ້ອຍ-ປະສົມປະສານ) ນຳໄປສິດສອນ ໃຫ້ປະຊາຊົນລາວບັນດາເຜົ່າ ເຂົ້າໃຈຕໍ່ຄວາມເປັນເຈົ້າຕົນເອງ ແລະ ຄວາມຮັກເຊື້ອແພງຊາດເປັນຕົ້ນ.

ນອກຈາກນີ້ ພຣະສົງໄດ້ປະກອບສ່ວນໃນວຽກງານ ພັດທະນາຊັບພະຍາກອນມະນຸດດ້ວຍຫຼາຍຮູບການ, ທາງດ້ານການສຶກສາຢູ່ພາຍໃນປະເທດມີໂຮງຮຽນສົງ ແຕ່ສາຍສາມັນຮອດວິທະຍາໄລສົງ ເປັນການສ້າງໂອກາດໃຫ້ລູກຫຼານປະຊາຊົນບັນດາເຜົ່າ ໄດ້ເຂົ້າຮຽນເປັນຈຳນວນຫຼວງຫຼາຍ, ສົ່ງພຣະສົງໄປສຶກສາຮ່ຳຮຽນຢູ່ຕ່າງປະເທດໃນຫຼາຍລະດັບ, ພ້ອມກັນນີ້ ກໍ່ໄດ້ເຄື່ອນໄຫວປະຕິບັດໂຄງການ ບັນພະຊາສາມະເນນ ໃນຍາມພັກຮຽນ, ເຄື່ອນໄຫວເທດສະໜາສັ່ງສອນນັກຮຽນຢູ່ຊັ້ນຮຽນຕ່າງໆ, ປະກອບສ່ວນໃນການໂຄສະນາເຜີຍແຜ່ ຄວາມຮູ້ໃນດ້ານຕ່າງໆ ເຊັ່ນ: ຄະນະກຳມະການຕ້ານເອດສ໌, ຕ້ານຢາເສບຕິດ, ເຜີຍແຜ່ສິລະທຳ ແລະ ອື່ນໆ.

ບັນຫາສຳຄັນ ພຣະສົງ-ສາມະເນນ ຍັງເປັນແບບຢ່າງໃນການອະນຸລັກຮັກສາຮີດຄອງປະເພນີ ວັດທະນະທຳ, ຂະນົບທຳນຽບອັນດີງາມ ທີ່ເປັນເອກະລັກຂອງຊາດໄວ້ໄດ້ເປັນຢ່າງດີ ປຸກລະດົມນຳພາອອກຕົນຍາດໂຍມ ໃນການສ້າງສາບູລະນະປະຕິສັງຂອນວັດວາອາຮາມ, ປົກປັກຮັກສາສາສະນະວັດຖຸບູຮານ ປູຊະນີຍະສະຖານ ອັນສັກສິດ ແລະ ຊົງຄຸນຄ່າໄວ້ຄູ່ບ້ານຄູ່ເມືອງ ແລະ ເປັນແບບຢ່າງໃນການຊ່ວຍເຫຼືອສັງຄົມ ເຊັ່ນ: ຊ່ວຍສ້າງໂຮງຮຽນ, ໂຮງໝໍ, ສຸກສາລາ, ນ້ຳສະອາດ, ສ້າງທາງເຂົ້າຫາບ້ານ, ຊ່ວຍເຫຼືອປະຊາຊົນຜູ້ທຸກຍາກຢູ່ເຂດຫ່າງໄກ, ຕ້ານໄພໜາວ, ຊ່ວຍເຫຼືອຄອບຄົວທີ່ໄດ້ຮັບຜົນກະທົບຈາກໄພທຳມະຊາດ, ປະກອບສ່ວນຕ້ານພະຍາດໂຄວິດ-19 ໃນຊຸມປີຜ່ານໆມາ ເປັນມູນຄ່າຢ່າງຫຼວງຫຼາຍ ໂດຍສະຫຼຸບແລ້ວການເຄື່ອນໄຫວ ແມ່ນມີຄວາມຄ້າຍໆຄືກັບການປະຕິບັດຄຳຂວັນ ຂອງ ອົງການແນວລາວສ້າງຊາດ ຄື: **"ສີ່ເສີມສ້າງ"..... (ອັນພົ້ນເດັ່ນແມ່ນຂະບວນການຮັກບ້ານເກີດ ຫຼື ກຳມະການແນວລາວສ້າງຊາດ 01 ທ່ານ ..... ເສີມສ້າງຄຸນງາມ-ຄວາມດີ ໃຫ້ໄດ້ 01 ກິດຈະກຳ ເປັນຕົ້ນ)**

**ດ້ານວຽກງານຕ່າງປະເທດ** ອົງການພຸດທະສາສະໜາສັມພັນລາວ ໄດ້ສ້າງ ສາຍພົວພັນກັບອົງການຊາວພຸດ ປະເທດຕ່າງໆໃນໂລກ ລວມທັງຊາວພຸດ ຫຼືປະຊາຊົນລາວບັນດາເຜົ່າ ທີ່ເປັນຄົນເຊື້ອຊາດລາວເຮົາ ທີ່ດຳລົງຊີວິດຢູ່ຕ່າງປະເທດ ແລະ ອົງການຈັດຕັ້ງສາສະໜາຕ່າງໆ ຊຶ່ງເຮັດໃຫ້ບົດບາດຂອງພຣະສົງລາວພົ້ນເດັ່ນຂຶ້ນໃນເວທີພາກພື້ນ ແລະສາກົນ.

ຕະຫຼອດໄລຍະຜ່ານມາ ພັກ-ລັດ ໄດ້ເອົາໃຈໃສ່ ສ້າງເງື່ອນໄຂເອື້ອອຳນວຍຄວາມສະດວກ ໃຫ້ອົງການພຸດທະສາສະໜາສັມພັນລາວ, ພຣະສົງ-ສາມະ ເນນ ແລະ ພຸດທະສາສະນິກະຊົນລາວ ໄດ້ເຄື່ອນໄຫວທີ່ເປັນປະໂຫຍດແກ່ປະ ເທດຊາດ ແລະ ປະຊາຊົນ ດ້ວຍການຕອບສະໜອງດ້ານງົບປະມານ, ພາຫະນະອຸປະກອນ, ບຸກຄະລາກອນ ເຂົ້າໃນວຽກງານບໍລິຫານ, ການສຶກສາສົງ ລວມມູນຄ່າຫຼາຍຕື້ກີບຕໍ່ປີ. ແນວລາວສ້າງຊາດຂັ້ນຕ່າງໆ ໄດ້ມີການປະສານສົມທົບ ກັບ ອພສ ແຕ່ລະຂັ້ນ ໃນການເຄື່ອນໄຫວວຽກງານ, ການສຶກສາອົບຮົມພຣະສົງສາມະເນນ, ການຈັດຕັ້ງສາສະໜາພິທີ ໃນໂອກາດສຳຄັນຕ່າງໆ ດ້ວຍຜົນສຳເລັດທີ່ດີ.

ເຖິງຢ່າງໃດກໍ່ຕາມເພື່ອຮັກສາ ແລະ ເສີມຂະຫຍາຍໄດ້ມູນເຊື້ອອັນດີງາມ, ຜົນງານທີ່ພົ້ນເດັ່ນ, ຮັກສາໄດ້ບົດບາດການນຳພາຂອງພຣະສົງ ກໍ່ຄືຄວາມຈະເລີນຮຸ່ງເຮືອງຂອງພຸດທະສາສະໜາ, ຄວາມສາມັກຄີປອງດອງຂອງພຣະສົງ, ຄວາມເຫຼື້ອມໃສສັດທາ ຂອງ ພຸດທະສາສະນິກະຊົນ ດັ່ງທີ່ກ່າວມາຂ້າງເທິງນັ້ນ.

ທ້າຍສຸດນີ້ ອີກເທື່ອໜຶ່ງໃນນາມຕາງໜ້າໃຫ້ຄະນະກຳມະການແນວລາວສ້າງຊາດ ແລະ ໃນນາມສ່ວນຕົວ, ຂ້າພະເຈົ້າ ຂໍສະແດງຄວາມຮູ້ບຸນຄຸນ ແລະ ຂອບໃຈຕໍ່ພຣະອາຈານໃຫຍ່, ພຣະເຖລານຸເຖລະ ທີ່ໃຫ້ໂອກາດແກ່ຂະນ້ອຍ/ຂ້າພະເຈົ້າ ໄດ້ມີຄຳເຫັນຕໍ່ກອງປະຊຸມຄັ້ງສຳຄັນນີ້.

ຂໍອວຍພອນໃຫ້ພຣະອາຈານໃຫຍ່, ພຣະເຖລານຸເຖລະ ແລະ ບັນດາທ່ານຈົ່ງມີສຸຂະພາບ ພາລະນາໄມສົມບູນ ປະສົບຜົນສຳເລັດໃນທຸກໜ້າທີ່ວຽກງານຂອງຕົນ ທີ່ໄດ້ຮັບມອບໝາຍທຸກປະການ.

**ນ້ອມນະມັດສະການ ແລະ ຂໍຂອບໃຈ!**

**ບົດປະກອບຄຳເຫັນ**

**"ການຄຸ້ມຄອງລັດ ຕໍ່ວຽກງານສາສະໜາ"**

ທ່ານ ເຂີງຄຳ ແກ້ວໜູຈັນ

ຮອງລັດຖະມົນຕີ ຮອງຫົວໜ້າຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ

**ຕໍ່ກອງປະຊຸມໃຫ່ຍຜູ້ແທນພະສົງທົ່ວປະເທດສະໄໝທີ IX**

**ຂອງອົງການພຸດທະສາສະໜາສຳພັນ ແຫ່ງ ສປປ ລາວ**

- ຂໍນ້ອມນະມັດສະການ ພຣະອາຈານໃຫຍ່ ມະຫາເຫວດ ມະເສໄນ, ປະທານ ສູນກາງອົງການພຸດທະສາສະໜາສັມພັນ ແຫ່ງ ສປປ ລາວ ທີ່ເຄົາລົບ ແລະ ນັບຖື ຢ່າງສູງ.
- ຂໍຮຽນທ່ານ  ປະລິນຍາເອກ ສິນລະວົງ ຄູດໄພທູນ,  ກຳມະການກົມການເມືອງ ສູນກາງພັກ, ປະທານສູນກາງແນວລາວສ້າງຊາດ ທີ່ເຄົາລົບ ແລະ ນັບຖື ຢ່າງສູງ.
- ຂໍນ້ອມນະມັດສະການ ຄະນະປະທານກອງປະຊຸມ ທີ່ເຄົາລົບ ແລະນັບຖືຢ່າງສູງ;
- ນະມັດສະການພຣະເຖຣານຸເຖຣະ;
- ຂໍຮຽນບັນດາທ່ານ ການນຳພັກ-ລັດ, ບັນດາທ່ານ ຄອບຄົວການນຳ, ບັນດາ ທ່ານ ແຂກທີ່ມີກຽດ ທີ່ນັບຖື ແລະ ຮັກແພງ.

ໂດຍໄດ້ຮັບການມອບໝາຍ ຈາກທ່ານລັດຖະມົນຕີ, ຫົວຫນ້າຫ້ອງ ວ່າການສຳນັກງານນາຍົກ ລັດຖະມົນຕີ, ມື້ນີ້ຂ້າພະເຈົ້າຮູ້ສຶກເປັນກຽດ ແລະ ມີ ຄວາມພາກພູມໃຈເປັນຢ່າງຍິ່ງ ທີ່ໄດ້ຮັບອະນຸຍາດ ຈາກຄະນະປະທານກອງ ປະຊຸມ ຂຶ້ນມາປະກອບຄຳເຫັນ ກ່ຽວກັບການຄຸ້ມຄອງລັດ ຕໍ່ວຽກງານສາສະ ໜາ ຕໍ່ກອງປະຊຸມໃຫ່ຍ ຜູ້ແທນພຣະສົງທົ່ວປະເທດ ຄັ້ງທີ IX ຂອງອົງການ ພຸດທະສາສະໜາສັມພັນ ແຫ່ງ ສປປ ລາວ.

ເນື່ອງໃນໂອກາດທີ່ມີຄວາມໝາຍສຳຄັນນີ້, ຂ້າພະເຈົ້າຂໍນຳເອົາ ຄວາມເຄົາລົບນັບຖືຢ່າງສູງ, ຄວາມຂໍ່ານັບຊົມເຊີຍ ແລະ ຄຳອວຍພອນໄຊອັນປະເສີດ ຂອງບັນດາພະນັກງານລັດຖະກອນ ຂອງ ຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ ມາຍັງຄະນະປະທານກອງປະຊຸມ, ພຣະເຖຣານຸເຖຣະ, ຜູ້ແທນພຣະສົງ ແລະ ບັນດາທ່ານການນຳພັກລັດ, ຄອບຄົວການນຳ ແລະ ບັນດາທ່ານແຂກທີ່ມີກຽດ ທີ່ ໄດ້ເຂົ້າຮ່ວມກອງປະຊຸມໃນຄັ້ງນີ້ ຢ່າງສຸດອົກສຸດໃຈ.

ຜ່ານການຮັບຟັງລາຍງານຜົນການເຄື່ອນໄຫວວຽກງານຂອງອົງການພຸດທະສາດສະໜາສັມພັນ ແຫ່ງ ສປປ ລາວ ໃນໄລຍະ 5 ປີ ຜ່ານມາ ທີ່ໄດ້ລາຍງານຕໍ່ກອງປະຊຸມໃຫ່ຍຄັ້ງນີ້; ຂ້າພະເຈົ້າ ຂໍສະແດງ ຄວາມເປັນເອກະພາບຢ່າງສູງ ແລະ ຂໍສະແດງຄວາມຊົມເຊີຍ ຕໍ່ກັບຜົນງານທີ່ສູນກາງອົງການພຸດທະສາດສະໜາສັມພັນແຫ່ງ ສປປ ລາວ ຍາດມາໄດ້ ລວມທັງໄດ້ກຳນົດທິດທາງແຜນການ, ວຽກງານຈຸດສຸມ ແລະ ແຜນພັດທະນາ ຂອງອົງການພຸດທະສາດສະໜາສັມພັນ ໃນ 5 ປີ ຕໍ່ຫນ້າຢ່າງຈະແຈ້ງ. ເນື່ອງໃນໂອກາດທີນີ້ ຂ້າພະເຈົ້າຂໍແລກປ່ຽນບາງຄຳເຫັນກ່ຽວກັບການຄຸ້ມຄອງລັດ ຕໍ່ວຽກງານສາສະໜາດັ່ງນີ້:

**ວຽກງານສາສະໜາ: ໂດຍ**ສະເພາະສາສະໜາພຸດ ເປັນສາສະໜາທີ່ປະຊາຊົນລາວ ບັນດາເຜົ່າໃຫ້ຄວາມເຫຼື້ອມໃສສັດທາເປັນຈຳນວນຫຼວງຫຼາຍ ແລະ ໄດ້ຝັງຮາກຖານຕິດພັນກັບ ປະຫວັດສາດຂອງຊາດລາວ ເປັນເວລາດົນນານ ຊຶ່ງໄດ້ປັບໂຕ ແລະ ເຊື່ອມສານເຂົ້າກັບວິຖີການດຳລົງ ຊີວິດ, ວັດທະນະທຳ, ຮີດຄອງປະເພນີ ແລະ ເຮັດໃຫ້ປະຊາຊົນ ຜູ້ເຫຼື້ອມໃສສັດທາ ມີຄວາມເມດຕາ, ໂອບເອື້ອອາລີ, ຊ່ວຍເຫຼືອ ເຊິ່ງກັນ ແລະ ກັນ ພ້ອມທັງ ບົ່ມສອນໃຫ້ຜູ້ເຫຼື້ອມໃສ່ສັດທາເຂົ້າໃຈ, ຮັບຮູ້ ເຖິງເຫດຜົນ, ປັດໄຈ ແລະ ສັດຈະທຳຂອງຊີວິດ. ພຣະສົງລາວ ໄດ້ມີບົດບາດສຳຄັນ ໃນການເທສະໜາທັມໃຫ້ພຸດທະສະນິກະຊົນ ໃຫ້ປະຕິບັດໃນສິນທຳ, ພ້ອມກັນນັ້ນກໍ່ໄດ້ສຶກສາອົບຮົມ ປຸກລະດົມ

ໃຫ້ ສາສະນິກະຊົນ ມີນ້ຳໃຈຮັກຊາດ, ມີຄວາມສາມັກຄີປອງດອງເປັນປຶກແຜ່ນ ໃນວົງຄະນະຍາດແຫ່ງຊາດລາວ, ເຂົ້າຮ່ວມຂະບວນການປະຕິວັດຕໍ່ສູ້ປົດປ່ອຍຊາດຈົນຍາດໄດ້ເອກະລາດ ແລະ ສະຖາປານາ ປະເທດຊາດ.

ດັ່ງນັ້ນ, **ການຄຸ້ມຄອງລັດ ຕໍ່ວຽກງານສາສະໜາ** ເປັນວຽກງານໜຶ່ງທີ່ສຳຄັນຂອງການບໍລິຫານລັດ ຊຶ່ງເປັນການກຳນົດນະໂຍບາຍ ແລະ ນິຕິກຳຕ່າງໆ ເພື່ອບໍລິຫານຄຸ້ມຄອງ, ດັດປັບ ບັນດາ ການເຄື່ອນໄຫວດ້ານເສດຖະກິດ ແລະ ສັງຄົມ ທີ່ກ່ຽວພັນກັບສາສະໜາ ໃຫ້ຖືກຕ້ອງກັບນະໂຍບາຍ, ກົດໝາຍ ແລະ ລະບຽບການ ແນໃສ່ສ້າງເງື່ອນໄຂ ໃຫ້ບັນດາສາສະນິກະຊົນ ໄດ້ຮັບການພັດທະນາ, ຮັບປະກັນສິດຜົນປະໂຫຍດອັນຊອບທຳ, ເຮັດໃຫ້ບັນດາສາສະນິກະຊົນ ມີຄວາມສາມັກຄີ, ເຄົາລົບ ນັບຖື ແລະ ຊ່ວຍເຫຼືອຊຶ່ງກັນ ແລະ ກັນ ພ້ອມກັນປົກປັກຮັກສາ ແລະ ສ້າງສາພັດທະນາປະເທດຊາດ ຂອງພວກເຮົາໃຫ້ນັບມື້ນັບຈະເລີນຮຸ່ງເຮືອງ.

ນິຕິກຳທີ່ເປັນບ່ອນອີງໃນການຄຸ້ມຄອງການເຄື່ອນໄຫວຂອງການຈັດຕັ້ງສາສະໜາຕ່າງໆ ຢູ່ ສປປ ລາວ ລວມທັງສາສະໜາພຸດພວກເຮົາ ໄດ້ຄຸ້ມຄອງຕາມ ລັດຖະທຳມະນູນ ສປປ ລາວ ສະບັບປັບປຸງ ເລກທີ 77/ສພຊ, ລົງວັນທີ 20 ມີນາ 2025 ໄດ້ກຳນົດໄວ້ໃນ ມາດຕາ 9 ໄດ້ກຳນົດໄວ້ວ່າ ລັດເຄົາລົບ ແລະ ປົກປ້ອງການເຄື່ອນໄຫວອັນຖືກກົດໝາຍຂອງພຸດທະສາສະນິກະຊົນ ແລະ ສາສະນິກະຊົນອື່ນ, ປຸກລະດົມສົ່ງເສີມພຣະພິຊຸສົງ-ສາມະເນນ, ນັກບວດ, ນັກສອນສາສະໜາໃຫ້ເຂົ້າຮ່ວມໃນການເຄື່ອນໄຫວ ທີ່ມີປະໂຫຍດແກ່ປະເທດຊາດ ແລະ ສັງຄົມ; ຫ້າມທຸກການກະທຳ ທີ່ເປັນການແບ່ງແຍກສາສະໜາ ແລະ ແບ່ງແຍກຄວາມສາມັກຄີ ຂອງປະຊາຊົນ; ມາດຕາ 36 ພົນລະເມືອງລາວ ໂດຍບໍ່ຈຳແນກ ຍິງ-ຊາຍ, ຖານະ ທາງດ້ານສັງຄົມ, ລະດັບການສຶກສາ, ຄວາມເຊື່ອຖື ແລະ ຊົນເຜົ່າ ລ້ວນແຕ່ມີຄວາມສະເໝີພາບຕໍ່ໜ້າກົດໝາຍ ແລະ ມາດຕາ 44 ພົນລະເມືອງລາວ ມີສິດໃນການເຊື່ອຖື ຫຼື ບໍ່ເຊື່ອ

ຖືສາສະໜາ ທີ່ບໍ່ຂັດກັບກົດໝາຍ. ນອກຈາກນັ້ນ ອີງຕາມມາດຕາ 5 ຂອງດຳລັດ ສະບັບເລກທີ 315/ລບ ໄດ້ກຳນົດການເຄື່ອນໄຫວຂອງການຈັດຕັ້ງສາສະໜາໃຫ້ປະຕິບັດຕາມຫຼັກການພື້ນຖານ ດັ່ງນີ້:

1. ສອດຄ່ອງ ກັບແນວທາງນະໂຍບາຍ, ລັດຖະທຳມະນູນ, ກົດໝາຍ ແລະ ລະບຽບການ;

2. ຖືກຕ້ອງຕາມເນື້ອໃນ, ຫຼັກທຳ, ຄຳສັ່ງສອນຂອງສາສະໜາ;

3. ຮັບປະກັນ ລັກສະນະຊາດ, ວິທະຍາສາດ, ຄວາມກ້າວຫນ້າ ແລະ ມະຫາຊົນ;

4. ຮັກສາມູນເຊື້ອ ວັດທະນະທຳອັນດີງາມຂອງຊາດ;

5. ຮັບປະກັນ ຄວາມສາມັກຄີ ປອງດອງຊາດ, ສາສະໜາ, ຊັ້ນຄົນ ແລະ ປະຊາຊົນບັນດາເຜົ່າ;

6. ຮັບປະກັນຄວາມປອດໄພ, ປະຢັດ, ສອດຄ່ອງກັບມູນເຊື້ອ, ສີສັນທາງວັດທະນະທຳຂອງຊາດ, ປົກປັກຮັກສາ ແລະ ຄຸ້ມຄອງສິ່ງແວດລ້ອມ.

ນອກນັ້ນ, ໃນການຄຸ້ມຄອງລັດຕໍ່ກັບວຽກງານສາສະໜາ ລັດຖະບານຍັງຈະໄດ້ສືບຕໍ່ເອົາໃຈໃສ່ :

1) ຄຸ້ມຄອງການເຄື່ອນໄຫວຂອງການຈັດຕັ້ງສາສະໜາ;

2) ຄຸ້ມຄອງການໃຫ້ສຳມະນາສັກ, ຕຳແຫນ່ງຕ່າງໆ ທາງສາສະໜາ;

3) ຄຸ້ມຄອງການຍົກຍ້າຍການເຄື່ອນໄຫວຂອງນັກບວດ, ນັກສອນສາສະໜາ ແລະ ຄະນະນຳຂອງ ການຈັດຕັ້ງ ສາສະໜາ;

4) ຄຸ້ມຄອງການກໍ່ສ້າງ, ບູລະນະ ແລະ ປະຕິສັງຂອນ, ສ້ອມແປງສາສະນະສະຖານ;

5) ຄຸ້ມຄອງການເຄື່ອນໄຫວ ກໍ່ສ້າງບຳລຸງນັກບວດ, ນັກສອນສາສະໜາ;

6) ຄຸ້ມຄອງສາສະນະສົມບັດ ແລະ ສາສະນະສະຖານ;

7) ຄຸ້ມຄອງປຶ້ມຄຳພີ ແລະ ອຸປະກອນຮັບໃຊ້;

8) ຄຸ້ມຄອງການເຄື່ອນໄຫວກິດຈະກຳທາງສາສະໜາ;

9) ຄຸ້ມຄອງການຮ້ອງທຸກ, ຮ້ອງຟ້ອງຕ່າງໆ ກ່ຽວກັບວຽກງານສາສະໜາເພື່ອຮັບປະກັນການແກ້ ໄຂຕ້ອງໄປຕາມກົດໝາຍ ແລະ ລະບຽບການ, ລະມັດລະວັງ, ບໍ່ລຳອຽງ ແລະ ບໍ່ອັດຕະວິໄສ.

ຜ່ານການປະຕິບັດໜ້າທີ່ຄຸ້ມຄອງລັດ ຕໍ່ກັບວຽກງານສາດສະໜາ ໃນໄລຍະ 5 ປີ ຜ່ານມາ ສາມາດສັງລວມໄດ້ຜົນງານພົ້ນເດັ່ນທີ່ບັນດາຂະແໜງການທັງສູນກາງ ແລະ ທ້ອງຖິ່ນ ຈຳນວນໜຶ່ງ ປະຕິບັດໄດ້ ໄດ້ດັ່ງນີ້:

- ໄດ້ຮັບຮອງ ແລະ ປະກາດໃຊ້ ທຳມະນູນສົງລາວ ຢ່າງເປັນທາງການ ໃນປີ 2023.

-ໄດ້ປັບປຸງກົງຈັກການຈັດຕັ້ງຄຸ້ມຄອງວຽກງານສາດສະໜາ ໂດຍໄດ້ຍົກຍ້າຍກົມຊົນເຜົ່າ ແລະ ສາດສະໜາ ໃນເມື່ອກ່ອນສັງກັດຢູ່ກະຊວງພາຍໃນມາຂຶ້ນກັບຫ້ອງວ່າການສຳນັກງານ ນາຍົກລັດຖະມົນຕີ ເພື່ອສືບຕໍ່ເປັນເສນາທິການໃຫ້ລັດຖະບານ ແລະ ປະສານງານກັບບັນດາ ຂະແໜງການ ແລະ ພາກສ່ວນກ່ຽວຂ້ອງທັງສູນກາງ ແລະ ທ້ອງຖິ່ນ.

-ໄດ້ອະນຸມັດການກໍ່ສ້າງພັດທະສີມາ ແລະ ວັດ ໄດ້ທັງຫມົດ 286 ຫລັງ ໃນນັ້ນພຸດທະສີມາ 188 ຫລັງ ແລະ ວັດ 98 ຫລັງ.

-ໄດ້ລົງຕິດຕາມຊຸກຍູ້ວຽກງານເຜີຍແຜ່ທຳມະນູນສົງລາວ ໄດ້ທັງຫມົດ 17 ແຂວງ ແລະ ບັນດາເມືອງ ໃນຂອບເຂດທົ່ວປະເທດ. ນອກຈາກນັ້ນ ຍັງໄດ້ສົມທົບກັບພາກສ່ວນກ່ຽວຂ້ອງ ເຊັ່ນ ສູນກາງແນວລາວສ້າງຊາດ, ສູນກາງອົງການພຸດທະສາສະໜາສໍາພັນ ແຫ່ງ ສປປ ລາວ, ກະຊວງປ້ອງກັນຄວາມສະຫງົບ, ກະຊວງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ, ອົງການປົກຄອງຂັ້ນແຂວງ ແລະ ຂັ້ນເມືອງກ່ຽວຂ້ອງ ລົງເກັບກຳ ແລະ ແກ້ໄຂສະພາບຂໍ້ຂັດແຍ່ງ ແລະ ປາກົດການຍໍ້ທໍ້ທີ່ເກີດຂຶ້ນ.

-ໃນທ້າຍປີ 2025 ທີ່ຜ່ານມານີ້, ຄະນະຜູ້ແທນ ສປປ ລາວ ປະກອບດ້ວຍ ຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ, ສູນກາງແນວລາວສ້າງຊາດ ແລະ ສູນກາງອົງການພຸດທະສາສະໜາສັມພັນ ແຫ່ງ ສປປ ລາວ ໄດ້ເຂົ້າຮ່ວມໃນກອງປະຊຸມສຸດຍອດພຸດທະສາສະໜາກຳປູເຈຍ, ລາວ ແລະ ຫວຽດນາມ ຄັ້ງທີ 3 ພາຍໃຕ້ຫົວຂໍ້: "ຄວາມສາມັກຄີປອງດອງຂອງສາສະໜາພຸດ ເພື່ອສັນຕິພາບ ແລະ ການພັດທະນາແບບຍືນຍົງ” ທີ່ຈັດຢູ່ນະຄອນຫລວງພະນົມເປັນ, ປະເທດ ກຳປູເຈັຍ ແລະ ຄາດໝາຍ ໃນປີ 2027 ທີ່ຈະມາເຖິງນີ້ ສປປ ລາວເຮົາຈະໄດ້ເປັນເຈົ້າພາບ ຈັດກອງປະຊຸມ ອົງການພຸດທະສາສະໜາ 3 ປະເທດ ຄັ້ງທີ 4. ດັ່ງນັ້ນ, ບັນດາຂະແໜງການທີ່ກ່ຽວຂ້ອງຂອງລັດຖະບານ ແລະ ອົງການພຸດທະສາດສະໜາສັມພັນ ແຫ່ງ ສປປ ລາວ ຈະໄດ້ ຮ່ວມກັນກະກຽມທາງດ້ານເນື້ອໃນ ແລະ ກະກຽມຄວາມພ້ອມໃນການເປັນເຈົ້າພາບກອງປະຊຸມດັ່ງກ່າວ;

**-ຄຽງຄູ່ກັບ ຜົນງານ ທີ່ໄດ້ກ່າວມາຂ້າງເທິງນັ້ນ, ການຄຸ້ມຄອງລັດຕໍ່ວຽກງານສາສະໜາ ກໍຍັງມີບັນຫາຈຳນວນໜຶ່ງ ທີ່ຈະໄດ້ສືບຕໍ່ປັບປຸງແກ້ໄຂໃນດັ່ງນີ້ :**

-ບາງອົງການຈັດຕັ້ງພັກ-ລັດ ຍັງບໍ່ທັນກຳແໜ້ນ ແລະ ປະຕິບັດ ຕາມດຳລັດສະບັບ 315/ລບ ວ່າ ດ້ວຍການ ຄຸ້ມຄອງ ແລະ ປົກປ້ອງການເຄື່ອນໄຫວສາສະໜາ ຢູ່ ສປປ ລາວ ຈຶ່ງເຮັດໃຫ້ການ ຮັບຮູ້ເຂົ້າໃຈດຳລັດສະບັບດັ່ງກ່າວ ຍັງບໍ່ທັນເລິກເຊິ່ງເຖິງຖອງ; ພ້ອມນັ້ນ, ບາງເນື້ອໃນຂອງດຳລັດຜ່ານການຈັດຕັ້ງປະຕິບັດຕົວຈິງເຫັນວ່າ ຍັງບໍ່ທັນສອດຄ່ອງກັບສະພາບຕົວຈິງໃນປັດຈຸບັນຊຶ່ງຈະຕ້ອງໄດ້ຄົ້ນຄວ້າ, ປັບປຸງໃຫ້ມີຄວາມເໝາະສົມ ເພື່ອເຮັດໃຫ້ການຄຸ້ມຄອງລັດຕໍ່ກັບ ວຽກງານສາສະໜາຫັນເຂົ້າສູ່ລະບຽບການຍິ່ງຂຶ້ນ;

-ການອອກນິຕິກຳລຸ່ມດຳລັດ ເຊັ່ນ : ຄຳແນະນຳ ແລະ ແຈ້ງການເພີ່ມເຕີມຍັງບໍ່ທັນເປັນລະບົບຄົບຊຸດ, ໂດຍສະເພາະ ການຄັດເລືອກຜູ້ທີ່ຈະເຂົ້າມາສູ່ພຣະພຸດທະສາສະໜາ, ການລົງໂທດຕໍ່ຜູ້ທີ່ກໍ່ໃຫ້ເກີດຄວາມເສຍຫາຍ

ແກ່ພຣະພຸດທະສາສະໜາ ແລະ ການຊຸກຍູ້ຕິດຕາມການປະຕິບັດ ໜ້າທີ່ຂອງລະບົບປົກຄອງສົງ;

ສືບຕໍ່ປັບປຸງກົນໄກການປະສານສົມທົບລະຫວ່າງອົງການທີ່ຮັບຜິດຊອບວຽກງານສາສະໜາ ດ້ວຍກັນ ແລະ ອົງການພຸດທະສາສະໜາສັມພັນແຫ່ງ ສປປ ລາວ ໃຫ້ນັບມື້ນັບເຂັ້ມແຂງ ແລະ ສອດຄ່ອງຕາມດຳລັດສະບັບເລກທີ 315/ລບ. ລວມທັງການຄຸ້ມຄອງການນຳເຂົ້າ-ສົ່ງອອກ, ການປັ້ນຫຼໍ່ພຣະພຸດທະຮູບ ແລະ ເຄື່ອງໝາຍຕ່າງໆ ຂອງສາສະໜາ, ການກໍ່ສ້າງບູລະນະປະຕິສັງຂອນວັດ ແລະ ພັດທະສີມາ.

**ພຣະເຖຣະ ນຸເຖຣາ, ບັນດາທ່ານທີ່ນັບຖື ແລະ ຮັກແພງ**

ຜ່ານການຈັດຕັ້ງປະຕິບັດ ມາດຕາ 5 ຂອງດຳລັດ 315/ລບ ວ່າດ້ວຍການຄຸ້ມຄອງ ແລະ ປົກ ປ້ອງການເຄື່ອນໄຫວສາສະໜາຢູ່ ສປປ ລາວ ເຫັນໄດ້ການເຄື່ອນໄຫວຂອງອົງການພຸດທະສາສະໜາ ເຄື່ອນໄຫວປະຕິບັດຕາມຫຼັກການພື້ນຖານ ສອດຄ່ອງ ກັບແນວທາງນະໂຍບາຍ, ລັດຖະທຳມະນູນ, ກົດໝາຍ ແລະ ລະບຽບການ, ຖືກຕ້ອງ ຕາມທຳມະນູນສົງລາວ, ເນື້ອໃນຫຼັກທຳ, ຄຳສັ່ງສອນຂອງສາສະໜາ, ຮັບປະກັນ ລັກສະນະຊາດ, ວິທະຍາສາດ, ຄວາມກ້າວໜ້າ ແລະ ມະຫາຊົນ; ຮັກສາມູນເຊື້ອວັດທະນະທຳອັນດີງາມຂອງຊາດ, ຮັບປະກັນຄວາມສາມັກຄີປອງດອງຊາດ, ສາສະໜາ, ຊົນຄົນ ແລະ ປະຊາຊົນບັນດາເຜົ່າ, ຮັບປະກັນຄວາມປອດໄພ, ປະຢັດ, ສອດຄ່ອງກັບມູນເຊື້ອ, ສີສັນທາງ ວັດທະນະທຳ ຂອງຊາດ, ປົກປັກຮັກສາ ແລະ ຄຸ້ມຄອງສິ່ງແວດລ້ອມ ແລະ ແກ້ໄຂປະກົດການຫຍໍ້ທໍ້ ຈຳນວນໜຶ່ງ ດັ່ງສະແດງອອກໃນການຕີລາຄາການເຄື່ອນໄຫວຂອງສູນກາງອົງການພຸດທະສາສະໜາສັມພັນ ແຫ່ງ ສປປ ລາວ ທີ່ກ່າວມານັ້ນ. ຂ້າພະເຈົ້າ ຂໍຮຽນສະເໜີໃຫ້ສູນກາງອົງການພຸດທະສາສະໜາສັມພັນແຫ່ງ ສປປ ລາວ ຊ່ວຍນຳເອົາ ເນື້ອໃນຈິດໃຈທີ່ກ່າວມານັ້ນເພື່ອພິຈາລະນາ ໃນທາງຈັດຕັ້ງ ປະຕິບັດ ທັງນີ້ກໍເພື່ອເຮັດໃຫ້ສູນກາງອົງການພຸດ

ທະສາສະໜາສົມພັນແຫ່ງ ສປປ ລາວ ສືບຕໍ່ເຕີບໃຫ່ຍ ຂະຫຍາຍຕົວຢ່າງບໍ່ຢຸດຢັ້ງ, ເປັນທີ່ເພິ່ງທາງດ້ານຈິດໃຈໃຫ້ແກ່ພຸດທະສະນິກະຊົນ, ພ້ອມທັງຖະນຸບໍາລຸງ ປົກປັກຮັກສາ ພຸດທະສາສະໜາ ໃຫ້ດໍາລົງຄົງຕົວຄູ່ກັບ ປະເທດລາວຕະຫຼອດການລະນານ.

ມາຮອດນີ້ການປະກອບຄໍາເຫັນຂອງຂ້າພະເຈົ້າ ໄດ້ຫມົດພຽງເທົ່ານີ້. ທ້າຍສຸດນີ້ ຂໍອວຍພອນ ແກ່ຄະນະປະທານກອງປະຊຸມ, ພຣະເຖຣານຸເຖຣະ ແລະ ບັນດາທ່ານແຂກທີ່ມີກຽດ ຈົ່ງມີສຸຂະພາບ

ເຂັ້ມແຂງ, ມີຜົນສໍາເລັດໃນຫນ້າທີ່ວຽກງານ. ອວຍພອນໃຫ້ກອງປະຊຸມໃຫຍ່ຜູ້ແທນພຣະສົງທົ່ວ ປະເທດ ສະໄໝທີ 9 ຂອງອົງການພຸດທະສາສະໜາສໍາພັນ ແຫ່ງ ສປປ ລາວ ຈົ່ງປະສົບຜົນສໍາເລັດຕາມລະດັບຄາດໝາຍທີ່ວາງໄວ້ທຸກປະການ.

**ນ້ອມນະມັດສະການ ຂໍຂອບໃຈ**

## ບົດປະກອບຄຳເຫັນ

## "ພຣະສົງກັບການອະນຸລັກຮັກສາປູຊະນີຍະສະຖານ ແລະ ວັດຖຸບູຮານທາງ ພຣະພຸດທະສາສະໜາ"

ທ່ານນາງ ສວນສະຫວັນ ວິຍະເກດ

ລັດຖະມົນຕີກະຊວງ ວັດທະນະທຳ ແລະ ການທ່ອງທ່ຽວ

**ຕໍ່ກອງປະຊຸມໃຫຍ່ຜູ້ແທນພະສົງທົ່ວປະເທດສະໄໝທີ IX**

**ຂອງອົງການພຸດທະສາສະໜາສຳພັນ ແຫ່ງ ສປປ ລາວ**

-ຂໍນ້ອມນະມັດສະການພຣະມະຫາເຖຣະ

-ຄະນະປະທານກອງປະຊຸມ ທີ່ເຄົາລົບ ແລະ ນັບຖືຢ່າງສູງ,

-ຂໍນ້ອມນະມັດສະການພຣະເຖຣານຸເຖຣະ

-ຂໍຮຽນບັນດາທ່ານການນຳພັກລັດ ທີ່ນັບຖືຢ່າງສູງ

-ບັນດາທ່ານແຂກທີ່ມີກຽດ ທ່ານຍິງ - ທ່ານຊາຍ ທີ່ຮັກແພງທັງຫຼາຍ.

ຂ້າພຣະເຈົ້າມີຄວາມຮູ້ສຶກເປັນກຽດ ແລະ ປິຕິຊື່ນຊົມເປັນຢ່າງຍິ່ງທີ່ໄດ້ຕາງໜ້າໃຫ້ແກ່ ກະຊວງວັດທະນະທຳ ແລະ ການທ່ອງທ່ຽວ ໄດ້ຮັບອະນຸຍາດ ຈາກປະທານ ຂຶ້ນມາປະກອບຄຳເຫັນຕໍ່ກອງປະຊຸມໃຫຍ່ຜູ້ແທນພຣະສົງ ທົ່ວປະເທດ ສະໄໝທີ IX ໃນຫົວຂໍ້ "ພຣະສົງກັບການອະນຸລັກຮັກສາ ປູຊະນີຍະສະຖານ ແລະ ວັດຖຸບູຮານ ທາງພຣະພຸດທະສາສະໜາ" ໃນຄັ້ງນີ້.

ປະຊາຊົນລາວບັນດາເຜົ່າໄດ້ຕັ້ງຫຼັກແຫຼ່ງຢູ່ບົນຜືນແຜນດິນ ທີ່ເອີ້ນວ່າ ສປປ ລາວ ນັບເປັນເວລາຫຼາຍພັນປີມາແລ້ວ ໂດຍໄດ້ຜ່ານຂະບວນວິວັດທະນາການທາງດ້ານປະຫວັດສາດອັນຍາວນານ ອັນໄດ້ເຮັດໃຫ້ປະຊາຊົນລາວບັນດາເຜົ່າໄດ້ມີມູນເຊື້ອປະດິດສ້າງ ແລະ ມີຄວາມຊຳນິຊຳນານງານ ໃນດ້ານສິລະປະກໍ່ສ້າງເຄຫະສະຖານ, ສິນລະປະກຳແຕ່ງດອກດວງ, ລວດລາຍ, ປັ້ນຫຼໍ່,

ຄວັດແກະສະຫຼັກ ແລະ ອື່ນໆ ຊຶ່ງພາຍຫຼັງໄດ້ກາຍມາເປັນອົງປະກອບທີ່ສຳຄັນຂອງມໍລະດົກທາງດ້ານວັດທະນະທຳຂອງຊາດ ທີ່ສ່ອງແສງໃຫ້ເຫັນເຖິງເອກະລັກສະເພາະຂອງຊາດລາວ, ສ່ອງແສງໃຫ້ເຫັນເຖິງແບບແຜນວິຖີການດຳລົງຊີວິດ, ຂະນົບທຳນຽມ ແລະ ຮີດຄອງປະເພນີຕ່າງໆ ຂອງປະຊາຊົນລາວ.

ໂດຍເຫັນໄດ້ຄວາມສຳຄັນຂອງວຽກງານປົກປັກຮັກສາມໍລະດົກວັດທະນະທຳຂອງຊາດ; ລັດຖະບານ ສປປ ລາວ ຈຶ່ງໄດ້ມອບໃຫ້ກະຊວງວັດທະນະທຳ ແລະ ການທ່ອງທ່ຽວ ເປັນເຈົ້າການໃນການປະສານງານກັບຂະແໜງການຕ່າງໆ ສົ່ງເສີມ ແລະ ພັດທະນາວຽກງານ ອະນຸລັກ, ຮັກສາ, ສືບທອດ, ເສີມຂະຫຍາຍມູນເຊື້ອ ແລະ ຄຸນຄ່າມໍລະດົກວັດທະນະທຳອັນລ້ຳຄ່າຂອງຊາດ, ຂອງເຜົ່າ ໃຫ້ໄປຄຽງຄູ່ກັບການປະດິດສ້າງໃໝ່. ພ້ອມທັງເອົາໃຈໃສ່ປ້ອງກັນ, ສະກັດກັ້ນ ກະແສວັດທະນະທຳ ແລະ ຄ່ານິຍົມທີ່ບໍ່ສອດຄ່ອງ ດ້ວຍການສຶກສາອົບຮົມ, ໂຄສະນາເຜີຍແຜ່ໃຫ້ສັງຄົມຢ່າງກວ້າງຂວາງທັງຢູ່ພາຍໃນ ແລະ ຕ່າງປະເທດ ເພື່ອສາມາດຕອບສະໜອງໄດ້ຄວາມຕ້ອງການຂອງໜ້າທີ່ການເມືອງ, ຮັກສາໄດ້ຄວາສາມັກຄີປອງດອງຂອງປະຊາຊົນ ແລະ ປະກອບສ່ວນເຂົ້າໃນການສ້າງເສດຖະກິດຂອງຊາດ ໂດຍໄດ້ສຸມໃສ່ການອະນຸລັກ, ປົກປັກຮັກສາ ແລະ ເສີມຂະຫຍາຍຄຸນຄ່າມໍຣະດົກທາງດ້ານວັດທະນະທຳ ປະຫວັດສາດ ແລະ ທຳມະຊາດ ໃນລະດັບຕ່າງໆໃຫ້ມີຄຸນຄ່າສູງ ແລະຍືນຍົງ.

**ພຣະເຖຣານຸເຖຣະ, ບັນດາທ່ານເຄົາລົບ ແລະ ນັບຖື!**

ນັບຕັ້ງແຕ່ອະດີດຈົນເຖິງປະຈຸບັນ, ພຣະສົງນອກຈາກມີບົດບາດສຳຄັນໃນການໃຫ້ການສຶກສາແກ່ປະຊາຊົນ ແລະ ສັງຄົມຕໍ່ກັບແບບແຜນວິຖີການດຳລົງຊີວິດ, ຄວາມເຊື່ອຖືທາງດ້ານ ຮີດຄອງປະເພນີແລ້ວ ພຣະສົງຍັງມີບົດບາດເປັນກຳລັງແຮງອັນສຳຄັນຕົ້ນຕໍ ປະກອບສ່ວນເຂົ້າໃນການອະນຸລັກ

ປົກປັກຮັກສາມໍລະດົກອັນລ້ຳຄ່າຂອງຊາດ ບໍ່ວ່າ ຈະເປັນມໍລະດົກທາງດ້ານວັດຖຸ ແລະ ມໍລະດົກທາງດ້ານຈິດໃຈ.

ພາຍຫຼັງທີ່ປະເທດຊາດໄດ້ຮັບການປົດປ່ອຍ ແລະ ສະຖາປະນາເປັນ ສປປ ລາວ ເປັນຕົ້ນມາ, ພຣະສົງ ໄດ້ກາຍເປັນກຳລັງແຮງອັນສຳຄັນຂອງສັງຄົມ ໃນການນຳພາປະຊາຊົນ ແລະ ຊົ້ນຄົນຕ່າງໆ ປະກອບສ່ວນຢ່າງໃຫ່ຍຫຼວງເຂົ້າໃນວຽກງານກໍ່ສ້າງ, ປັວແປງ ແລະ ປົກປັກຮັກສາ ບັນດາວັດຖຸສະຖານ ແລະ ປູຊະນິຍະສະຖານທາງພຣະພຸດທະສາສະໜາ ທີ່ຖືກສ້າງຂຶ້ນຕາມຄວາມເຊື່ອທາງດ້ານພຣະພຸດທະສາສະໜາຢ່າງເປັນຂະບວນການ, ເຮັດໃຫ້ບັນດາສິ່ງກໍ່ສ້າງດັ່ງກ່າວ ສາມາດຮັກສາໄດ້ເອກະລັກສະເພາະ, ມີຄວາມໝັ້ນຄົງ ແລະ ຍືນຍົງຕະຫຼອດມາ ອັນໄດ້ເປັນການສ້າງຄຸນຄ່າຂອງວັດຖຸສະຖານ ແລະ ປູຊະນິຍະສະຖານທາງພຸດທະສາສະໜາເຫຼົ່ານັ້ນ ໃຫ້ກາຍເປັນມໍລະດົກທາງດ້ານວັດທະນະທຳທີ່ສຳຄັນ ແລະ ມີຄຸນຄ່າຂອງຊາດ ເພື່ອຮຽນຮູ້ ແລະ ເຂົ້າໃຈເຖິງຂະນົບທຳນຽມ, ຮີດຄອງປະເພນີ, ວັດທະນະທຳ ແລະ ປະຫວັດສາດຄວາມເປັນມາຂອງຊາດ, ເປັນແຫຼ່ງຮຽນຮູ້ທາງດ້ານເຕັກນິກ, ກຳມະວິທີໃນການ ກໍ່ສ້າງສະຖາປັດຕະຍະກຳ ແລະ ດ້ານບູຮານຄະດີຂອງເຍົາວະຊົນຄົນລຸ້ນໃໝ່ພ້ອມນັ້ນ; ການຮັກສາໄດ້ຄຸນຄ່າຂອງວັດຖຸສະຖານ ແລະປູຊະນິຍະສະຖານທາງພຸດທະສາສະໜາເຫຼົ່ານັ້ນ ຍັງເປັນການສ້າງລາຍຮັບທາງດ້ານເສດຖະກິດໃຫ້ແກ່ສັງຄົມ ແລະ ຊຸມຊົນທ້ອງຖິ່ນ ຈາກການທ່ອງທ່ຽວ ແລະ ກິດຈະກຳຕ່າງໆ ຂອງການນຳໃຊ້ມໍລະດົກທາງດ້ານວັດຖຸສະຖານ ແລະ ປູຊະນິຍະສະຖານທາງພຸດທະສາສະໜາດັ່ງກ່າວ, ໂດຍສະເພາະແມ່ນຢູ່ເມືອງມໍລະດົກໂລກຫຼວງພຣະບາງ ພາຍຫຼັງທີ່ຖືກປະກາດຮັບຮອງຈາກອົງການອຸຍແນສໂກໃຫ້ເປັນເມືອງມໍລະດົກໂລກ ໃນປີ 1995 ເປັນຕົ້ນມາ, ພຣະສົງໄດ້ກາຍເປັນກຳລັງແຮງສຳຄັນໃນການເຂົ້າໄປມີສ່ວນຮ່ວມນຳພາສັງຄົມ ແລະ ປະຊາຊົນປະກອບສ່ວນເຂົ້າໃນການບູລະນະສ້ອມແປງ, ອະນຸລັກປົກ ປັກຮັກສາບັນດາສິ່ງກໍ່ສ້າງ ແລະ ອາຄານທາງພຸດທະສາສະໜາຢ່າງເປັນຂະບວນການ ແລະ ຕໍ່

ເນື່ອງ ຈຶ່ງກາຍເປັນຜູ້ທີ່ມີຄວາມຊໍານິຊໍານານງານໃນດ້ານ ສິລະປະກໍ່ສ້າງເຄຫະສະຖານ ສິນລະປະຕົກແຕ່ງດອກດວງ, ລວດລາຍ, ປັ້ນຫຼໍ່, ຄວັດແກະສະຫຼັກ ແລະ ອື່ນໆອັນໄດ້ເປັນການປະກອບ ສ່ວນຢ່າງໃຫຍ່ຫຼວງເຂົ້າໃນວຽກງານປົກປັກຮັກສາເມືອງມໍລະດົກໂລກຫຼວງພຣະບາງ ໃຫ້ມີ ຄວາມສວຍສົດງົດງາມທາງດ້ານພຸດທະສາສະໜາສະຖາປັດຕະຍະກໍາ ແລະ ຮັກສາໄດ້ຄຸນຄ່າອັນໂດດເດັ່ນທາງດ້ານຮີດຄອງປະເພນີອັນດີງາມ ທີ່ເປັນເອກະລັກສະເພາະ ໂດດເດັ່ນໜຶ່ງດຽວໃນໂລກ.

**ພຣະເຖຣານຸເຖຣະ, ບັນດາທ່ານເຄົາລົບ ແລະ ນັບຖື!**

ໃນໄລຍະຜ່ານມາເຖິງວ່າການມີສ່ວນຮ່ວມຂອງພຣະສົງໄດ້ປະກອບສ່ວນຢ່າງໃຫ່ຍຫຼວງ ເຂົ້າໃນວຽກງານກໍ່ສ້າງ, ປົວແປງ ແລະ ປົກປັກຮັກສາ ບັນດາວັດຖຸສະຖານ ແລະ ປູຊະນີຍະສະຖານທາງພຣະພຸດທະສາສະໜາ ທີ່ຖືກສ້າງຂຶ້ນຕາມຄວາມເຊື່ອທາງດ້ານພຣະພຸດທະສາສະໜາຢ່າງເປັນຂະບວນການ ແລະ ນັບມື້ນັບຫຼາຍຂຶ້ນກໍ່ຕາມ ແຕ່ການປະກອບສວ່ນ ເຂົ້າໃນວຽກງານການບູລະນະສ້ອມແປງ, ອະນຸລັກປົກປັກຮັກສາບັນດາສິ່ງກໍ່ສ້າງ ແລະ ອາຄານທາງພຸດທະສາສະໜາເຫຼົ່ານັ້ນ ຍັງຂາດຄວາມຮັບຮູ້ ວິຊາສະເພາະທາງດ້ານເຕັກນິກ ແລະ ຄວາມເຂົ້າໃຈອັນເລິກເຊິ່ງຕໍ່ກັບວັດຖຸສະຖານ ແລະ ປູຊະນີຍະສະຖານ ຫຼື ສິ່ງຕ່າງໆ ທີ່ກ່ຽວພັນກັບມໍລະດົກວັດທະນະທໍາ, ຂາດຄວາມເຂົ້າໃຈໃນການມີສ່ວນຮ່ວມເປັນຜູ້ດູແລຮັກສາຈາກສັງຄົມ ແລະ ຊຸມຊົນ ແລະ ຂັ້ນຕອນລະອຽດຂອງການບູລະນະສ້ອມແປງ ອັນເປັນສາເຫດເຮັດໃຫ້ການບູລະນະສ້ອມແປງ ວັດຖຸສະຖານ ແລະ ປູຊະນີຍະສະຖານທາງພຸດທະສາສະໜາຈໍານວນຫນຶ່ງ ຍັງຂັດກັບລະບຽບຫຼັກການຂອງການປົກປັກຮັກສາ ແລະ ບູລະນະສ້ອມແປງມໍລະດົກວັດທະນະທໍາ ຈຶ່ງບາງຄັ້ງ ກາຍເປັນການທໍາລາຍມໍລະດົກອັນລໍ້າຄ່າຂອງຊາດໄປແບບບໍ່ໄດ້ເຈດຕະນາ. ນອກນັ້ນ, ບັນຫາທີ່ກໍາລັງເປັນສິ່ງທ້າທາຍຕໍ່ກັບວຽກງານການຄຸ້ມຄອງ ແລະ ປົກປັກຮັກສາມໍລະດົກວັດຖຸສະຖານ ແລະ ປູຊະນີຍະສະຖານທາງພຸດທະສາສະໜາ ຍັງເກີດມາຈາກສະພາບຂອງການຂະຫຍາຍຕົວໃນການພັດທະນາໂຄງລ່າງພື້ນຖານທາງດ້ານເສດຖະກິດ-ສັງຄົມ ທີ່ມີຜົນກະທົບຕໍ່ການຄຸ້ມຄອງ ແລະ ບູລະນະ

ຮັກສາ. ແຕ່ຢ່າງໃດກໍຕາມ ໄລຍະຜ່ານມາກະຊວງວັດທະນະທຳ ແລະ ການທ່ອງທ່ຽວ, ໄດ້ຮັບການຊ່ວຍເຫຼືອຈາກອົງການຈັດຕັ້ງສາກົນຕ່າງໆ ເພື່ອບູລະນະ ວັດວາອາຮາມທັງຢູ່ນະຄອນຫຼວງ ແລະ ບັນດາແຂວງຈຳນວນໜຶ່ງ ພ້ອມທັງຈັດຝຶກອົບຮົມການສ້າງຄວາມເຂັ້ມແຂງທາງດ້ານເຕັກນິກ ວິຊາສະເພາະ ໃຫ້ແກ່ພະນັກງານວິຊາການທັງສູນກາງ ແລະ ທ້ອງຖິ່ນໄດ້ ເພື່ອຊ່ວຍເຂົ້າໃນວຽກງານບູລະນະດັ່ງກ່າວ ແຕ່ກໍຍັງບໍ່ທັນພຽງພໍເປັນຈຳນວນຫຼາຍ.

**ພຣະເຖຣານຸເຖຣະ , ບັນດາທ່ານເຄົາລົບ ແລະ ນັບຖື!**

ເນື່ອງຈາກມໍລະດົກວັດທະນະທຳວັດຖຸສະຖານ ແລະ ປູຊະນີຍະສະຖານທາງພຣະພຸດທະສາສະໜາ ເປັນສິ່ງສະແດງໃຫ້ເຫັນເຖິງເອກະລັກ ທີ່ເຮັດໃຫ້ເຂົ້າໃຈເຖິງປະຫວັດສາດ ຄວາມເປັນມາຂອງຊາດ, ຂະນົບທຳນຽມ, ຮີດຄອງປະເພນີ ແລະ ວັດທະນະທຳ, ເປັນແຫຼ່ງຮຽນຮູ້ ແລະ ການສຶກສາຂໍ້ມູນທາງດ້ານວິຊາການທີ່ສຳຄັນ, ທັງສາມາດຜັນຂະຫຍາຍ ແລະ ພັດທະນາໃຫ້ເກີດເປັນແຫຼ່ງລາຍຮັບທາງດ້ານເສດຖະກິດໃຫ້ແກ່ສັງຄົມ ແລະ ຊຸມຊົນ. ດັ່ງນັ້ນ ການປົກປັກຮັກສາມໍລະດົກວັດທະນະທຳວັດຖຸສະຖານ ແລະປູຊະນີຍະສະຖານ ທາງພຣະພຸດທະສາສະໜາ ໃຫ້ສາມາດຮັກສາໄດ້ຄຸນຄ່າຄວາມສຳຄັນອັນໂດດເດັ່ນທີ່ມີເອກະລັກສະເພາະ ໃຫ້ມີຄວາມໝັ້ນຄົງ ແລະ ຍືນຍົງຕະຫຼອດໄປນັ້ນ ການມີສ່ວນຮ່ວມຂອງສັງຄົມຈຶ່ງມີ ຄວາມສຳຄັນ ແລະ ຈຳເປັນທີ່ສຸດ, ໂດຍທົ່ວໄປແລ້ວທຸກໆການປະກອບສ່ວນເຂົ້າໃນການປະຕິສັງຂອນ ແລະ ບູລະນະສ້ອມແປງວັດຖຸສະຖານ ແລະ ປູຊະນີຍະສະຖານ ຕ້ອງໄດ້ຄຳນຶງ ແລະ ພິຈາລະນາເຖິງຫຼັກການພື້ນຖານຄື:

1. ພະຍາຍາມຮັກສາໄວ້ຄຸນລັກສະນະ ແລະ ຮູບຊົງດັ້ງເດີມຂອງບັນດາວັດຖຸສະຖານ ແລະ ປູຊະນີຍະສະຖານ ລວມເຖິງຂັ້ນຕອນ, ເຕັກນິກ ແລະ ກຳມະວິທີແບບດັ້ງເດີມທີ່ໃຊ້ເຂົ້າໃນການກໍ່ສ້າງ;
2. ພະຍາຍາມຊອກຫາທຸກວິທີທາງ ເພື່ອຮັກສາໄວ້ບັນດາອົງປະກອບ ແລະສິ່ງແວດລ້ອມຂອງວັດຖຸສະຖານ ແລະ ປູຊະນີຍະສະຖານ ໃຫ້ໄດ້ຫຼາຍທີ່ສຸດ;

3. ການບູລະນະສ້ອມແປງ ແລະ ການກໍ່ສ້າງໃຫມ່ຕ້ອງມີຜົນກະທົບຫນ້ອຍທີ່ສຸດຕໍ່ກັບມໍລະດົກວັດຖຸສະຖານ ແລະ ປູຊະນີຍະສະຖານ ທີ່ເປັນຂອງແທ້ດັ້ງເດີມ;

4. ໃນກໍລະນີໂຄງສ້າງທາງສະຖາປັດຕະຍະກໍາຂອງວັດຖຸສະຖານ ແລະ ປູຊະນີຍະສະຖານ ຫາກມີການເຊື່ອມສະພາບຢ່າງຮ້າຍແຮງ ແລະ ບໍ່ສາມາດສ້ອມແປງໃຫ້ກັບຄືນສູ່ສະພາບເດີມໄດ້ນັ້ນ, ການກໍ່ສ້າງໃຫມ່ເພື່ອທົດແທນສິ່ງເກົ່ານັ້ນຕ້ອງສາມາດຮັກສາໄດ້ຂະໜາດ, ສີສັນ, ຮູບຊົງ ແລະ ຈຸດປະສົງຂອງການນໍາໃຊ້ ດັ້ງເດີມ. ແຕ່ວິທີການແກ້ໄຂນີ້, ກໍບໍ່ແມ່ນທາງເລືອກທີ່ເໝາະສົມ.

ນອກຈາກນີ້, ວຽກງານວັດທະນະທໍາ ເປັນບັນຫາທີ່ທ້າທາຍຫຼາຍໃນປະຈຸບັນ ໂດຍສະເພາະໃນກຸ່ມຄົນໄວໜຸ່ມຮຸ່ນໃໝ່ ບວກກັບການກະຈາຍຂໍ້ມູນຂ່າວສານທາງອອນລາຍ ໃນຫຼາຍຮູບແບບທີ່ທັນສະໄໝ ໄດ້ສົ່ງຜົນກະທົບຕໍ່ແນວຄິດ ຈິນຕະນາການ, ພຶດຕິກໍາ ການປະຕິບັດຕ່າງໆ ບໍ່ຖືກຕ້ອງສອດຄ່ອງກັບວັດທະນະທໍາລາວເຮົາເທົ່າທີ່ຄວນ, ຂາດຄວາມເປັນເຄົ້າຄືງເດີມອັນດີງາມຂອງຊາດລາວ. ບັນຫາເລົ່ານີ້, ເກີດຈາກການເຜີຍແຜ່ວັດທະນະທໍາລາວເຮົາຍັງບໍ່ທັນກວ້າງຂວາງ ບໍ່ທັນສາມາດເຂົ້າເຖິງຈິດໃຈຂອງຄົນຮຸ່ນໃໝ່ ຍ້ອນການແຊກແຊງວັດທະນະທໍາຈາກພາຍນອກ ທີ່ມີທ່າແຮງຫຼາຍດ້ານ ທີ່ຄ່ອຍໆເຊື່ອມຊຶມເຂົ້າວັດທະນະທໍາ-ສັງຄົມລາວ ໃນປະຈຸບັນ. ຕໍ່ກັບບັນຫາດັ່ງກ່າວ, ຂ້າພະເຈົ້າ ກໍໄດ້ເອົາໃຈໃສ່ຊີ້ນໍາ ບັນດາກົມ-ກອງຂອງກະຊວງ ໃຫ້ເອົາໃຈໃສ່ໃນການຮ່ວມມື ແລະ ການຮັບການຊ່ວຍເຫຼືອຈາກຕ່າງປະເທດ ໂດຍສະເພາະບັນດາປະເທດໃກ້ຄຽງຢ່າງມີການຄົ້ນຄວ້າທີ່ເລິກເຊິ່ງ ເພື່ອເລືອກເຟັ້ນການຮ່ວມມືຕ່າງໆ. ເພາະວ່າ ໃນປະຈຸບັນ ວັດທະນະທໍາ ໄດ້ກາຍເປັນເຄື່ອງມືໜຶ່ງໃນການແຊກແຊງເຂົ້າລະບອບການເມືອງ ການປົກຄອງຂອງປະເທດໜຶ່ງ, ສະນັ້ນ, ຫາກຂາດການພິຈາລະນາ ແລະ ຄົ້ນຄວ້າຢ່າງເລິກເຊິ່ງ ກໍຈະຕົກເປັນເຄື່ອງມືໃຫ້ແກ່ພາກສ່ວນປໍລະປັກດັ່ງກ່າວ.

ເພື່ອເຮັດໃຫ້ການ ຄຸ້ມຄອງວຽກງານດັ່ງກ່າວ ໃຫ້ມີຄວາມເຂັ້ມແຂງ, ຈຶ່ງຂໍຮຽນສະເໜີມາຍັງທີ່ກອງປະຊຸມ ໃຫ້ບັນດາຂະແໜງການທີ່ກ່ຽວຂ້ອງ ປະສານສົມທົບກັນຢ່າງໃກ້ສິດ ເພື່ອປຶກສາຫາລື ແລະ ເປັນເຈົ້າການແກ້ໄຂ ບັນຫາ ປະກົດການຫຍໍ້ທໍ້ໃນສັງຄົມຕ່າງໆຮ່ວມກັນ ທັງນີ້ ກໍເພື່ອປົກປັກຮັກສາ ວັດທະນະທໍາ ຮີດຄອງປະເພນີອັນດີງາມຂອງຊາດລາວເຮົາໃຫ້ມີຄວາມຍືນຍົງ ເຜີຍແຜ່ໄດ້ຢ່າງກວ້າງຂວາງທັງພາຍໃນ ແລະ ສາກົນຢ່າງບໍ່ຢຸດຢັ້ງ.

ທ້າຍສຸດນີ້, ຂໍສະແດງຄວາມຂອບໃຈ ແລະ ຂໍອວຍພອນໄຊອັນ ປະເສີດມາຍັງ ຄະນະປະທານ, ຜູ້ແທນພຣະສົງ, ບັນດາທ່ານທຸກໆທ່ານ ຈົ່ງມີ ຄວາມສຸກກາຍສະບາຍໃຈ, ມີສຸຂະພາບ ພະລານາໄມເຂັ້ມແຂງ, ອາຍຸໝັ້ນ ຂວັນຍືນ, ມີຄວາມສຸກສົມຫວັງທຸກປະການ.

ຂໍອວຍພອນໄຊ ແດ່ກອງປະຊຸມໃຫຍ່ຜູ້ແທນພຣະສົງທົ່ວປະເທດ ຄັ້ງ ທີ 9 ຂອງອົງການພຸດທະສາສະໜາສັມພັນ ແຫ່ງ ສປປ ລາວ ຈົ່ງປະສົບຜົນສໍາ ເລັດຢ່າງຈົບງາມ.

**(ນ້ອມນະມັດສະການ, ຂໍຂອບໃຈ)**

## ຄະນະກັມມະການ
## ສູນກາງອົງການພຸດທະສາສະໜາສັມພັນ ແຫ່ງ ສປປ ລາວ
## ສະໄໝ IX



# ພຣະອາຈານໃຫຍ່ ມະເຫວດ ມະເສໄນ

ປະທານ

ສູນກາງອົງການພຸດທະສາສະໜາສັມພັນແຫ່ງ ສປປ ລາວ



**ພຣະອາຈານ ມະຫາຄຳມາ ປັນຍາວິຈິດ**
ຮອງປະທານ
ສູນກາງອົງການພຸດທະສາສະໜາສັມພັນແຫ່ງ ສປປ ລາວ



**ພຣະອາຈານ ບຸນສ່ວນ ພັນທະວົງ**
ຮອງປະທານ
ສູນກາງອົງການພຸດທະສາສະໜາສັມພັນແຫ່ງ ສປປ ລາວ
ຜູ້ປະຈຳການ



**ພຣະອາຈານ ບຸນທະວີ ປະສິດທິສັກ**
ຮອງປະທານ
ຫົວໜ້າກົມມາທິການສາທາຣະນູປະການ ສູນກາງ ອພສ



**ພຣະອາຈານ ສີທົນ ໄຊຍະວົງສອນ**
ຮອງປະທານ ຫົວໜ້າກົມມາທິການເຜີຍແຜ່ສິລະທັມ
ແລະ ປະຕິບັດກັມມະຖານ ສູນກາງ ອພສ



**ພຣະອາຈານ ອະທິປະໄຕ ໄມຕີຈິດ**
ຮອງປະທານ
ຫົວໜ້າຫ້ອງການບໍລິຫານງານ ສູນກາງ ອພສ



**ພຣະອາຈານ ປອ. ພວງປະເສີດ ພູມາວົງ**
ຮອງປະທານ
ຫົວໜ້າກົມມາທິການສຶກສາສົງ ສູນກາງ ອພສ



**ພຣະອາຈານ ປອ. ດຳຣົງ ພິມມະຈັກ**
ຮອງປະທານ
ຫົວໜ້າກົມມາທິການ ການຕ່າງປະເທດ
ສູນກາງ ອພສ



**ພຣະອາຈານ ວັນຄຳ ວົງສາສຸລິນ**
ຮອງປະທານ
ຫົວໜ້າກົມມາທິການປົກຄອງສົງ
ສູນກາງ ອພສ



**ພຣະອາຈານ ປອ. ຖາວອນ ຕາພອນປະເສີດ**
ຄະນະບໍລິຫານງານປະຈຳການ ສູນກາງ ອພສ



**ພຣະອາຈານ ດາວເຮືອງ ຄຳປະເສີດ**
ຮອງຫົວໜ້າ
ຫ້ອງການບໍລິຫານງານ ສູນກາງ ອພສ



**ພຣະອາຈານ ຄຳວັນ ວໍລະເດດ**
ຮອງຫົວໜ້າ ກົມມາທິການ
ສາທາຣະນູປະການ ສູນກາງ ອພສ



**ພຣະອາຈານ ສຸວັນ ຈັນທະລາດ**
ຄະນະບໍລິຫານງານປະຈຳການ ສູນກາງ ອພສ



**ພຣະອາຈານ ອ່ອນແກ້ວ ສິດທິວົງ**
ຄະນະບໍລິຫານງານປະຈຳການ ສູນກາງ ອພສ



**ພຣະອາຈານ ປອ. ດາວສະເດັດ ເລີດມະນີ**
ຮອງຫົວໜ້າ ກົມມາທິການ
ການຕາງປະເທດ ສູນກາງ ອພສ



**ພຣະອາຈານ ບຸນປອນ ສອນສັກສິດ**
ຮອງຫົວໜ້າ
ກົມມາທິການປົກຄອງສົງ ສູນກາງ ອພສ



**ພຣະອາຈານ ບຸນເສີຍ ເພົາພາສິດ**
ຮອງຫົວໜ້າ ກົມມາທິການ
ສາທາຣະນູປະການ ສູນກາງ ອພສ



**ພຣະອາຈານ ພົງສະຫວັນ ອານຸສິນ**
ຮອງຫົວໜ້າ ກົມມາທິການ
ສາທາຣະນູປະການ ສູນກາງ ອພສ



**ພຣະອາຈານ ປອ. ອຳມະຣິນ ບຸນວິເສດ**
ຮອງຫົວໜ້າ
ຫ້ອງການບໍລິຫານງານ ສູນກາງ ອພສ



**ພຣະອາຈານ ບຸນທະວີ ສີບຸນເຮືອງ**
ຮອງຫົວໜ້າ ກົມມາທິການເຜີຍແຜ່ສິລະທັມ
ແລະ ປະຕິບັດກັມມະຖານ ສູນກາງ ອພສ



**ພຣະອາຈານ ກິແກ້ວ ຈັນທະນົງສີ**
ຮອງຫົວໜ້າ
ກົມມາທິການສຶກສາສົງ ສູນກາງ ອພສ



**ພຣະອາຈານ ລຳເງິນ ສຸວັນນະສານ**
ຮອງຫົວໜ້າ ກົມມາທິການ
ການຕ່າງປະເທດ ສູນກາງ ອພສ



**ພຣະອາຈານ ປອ ສີສຸກ ລະເຫຼີມຄຸນ**
ຮອງຫົວໜ້າ ກົມມາທິການເຜີຍແຜ່ສິລະທັມ
ແລະ ປະຕິບັດກັມມະຖານ ສູນກາງ ອພສ



**ພຣະອາຈານ ທອງເລີ່ມ ສີບຸນເຮືອງ**
ຮອງຫົວໜ້າ
ກົມມາທິການປົກຄອງສົງ ສູນກາງ ອພສ



**ພຣະອາຈານ ພັນທອງ ໂພມີໄຊ**
ຮອງຫົວໜ້າ
ກົມມາທິການສຶກສາສົງ ສູນກາງ ອພສ



**ພຣະອາຈານ ພູຄຳ ແກ້ວປະທຸມ**
ຮອງຫົວໜ້າ ກົມມາທິການ
ການຕ່າງປະເທດ ສູນກາງ ອພສ



**ພຣະອາຈານ ຄຳພັ້ນ ສີລະທວັດ**

ຮອງຫົວໜ້າກັມມາທິການປົກຄອງສົງ
ສູນກາງ ອພສ



**ພຣະອາຈານ ອຸດົມ ແທວນຄຳ**

ຄະນະກັມມາທິການສຶກສາສົງ ສູນກາງ ອພສ



**ພຣະອາຈານ ມະຫາອຸດອນ ອະນຸຕຕະໂຣ**

ຄະນະກັມມາທິການເຜີຍແຜ່ສີລະທັມ
ແລະ ປະຕິບັດກັມມະຖານ ສູນກາງ ອພສ



**ພຣະອາຈານ ສອນ ນິນແກ້ວນາມ**

ຄະນະກັມມາທິການປົກຄອງສົງ ສູນກາງ ອພສ



**ພຣະອາຈານ ອິນປັນ ພິລາວັນ**

ຄະນະກັມມາທິການປົກຄອງສົງ ສູນກາງ ອພສ



**ພຣະອາຈານ ບຸນອ້ວນ ວົງມະລີ**

ຄະນະກັມມາທິການສຶກສາສົງ ສູນກາງ ອພສ



**ພຣະອາຈານ ຄຳສຸກ ທອງຈຳປາ**

ຄະນະກັມມາທິການປົກຄອງສົງ ສູນກາງ ອພສ



**ພຣະອາຈານ ທະວີໄຊ ພູມປະເສີດ**

ຮອງຫົວໜ້າກັມມາທິການເຜີຍແຜ່ສີລະທັມ
ແລະ ປະຕິບັດກັມມະຖານ ສູນກາງ ອພສ



**ພຣະອາຈານ ທຸມເພັງ ພັນທະສາໂຣ**

ຮອງຫົວໜ້າກັມມາທິການເຜີຍແຜ່ສີລະທັມ
ແລະ ປະຕິບັດກັມມະຖານ ສູນກາງ ອພສ



**ພຣະອາຈານ ພອນສະຫວັນ ພູນປະເສີດ**

ຄະນະກັມມາທິການສາທາຣະນູປະການ ສູນກາງ ອພສ



**ພຣະອາຈານ ປອ. ຂັນໄຊ ສີສຸດາ**

ຄະນະກັມມາທິການການຕ່າງປະເທດ ສູນກາງ ອພສ



**ພຣະອາຈານ ໄຊຍະເດດ ວົງໂສພາ**

ຄະນະຫ້ອງການບໍລິຫານງານ ສູນກາງ ອພສ



**ພຣະອາຈານ ຂວັນໃຈ ວິໄຊຍະເສີດ**

ຄະນະກັມມາທິການສາທາຣະນູປະການ ສູນກາງ ອພສ



**ພຣະອາຈານ ບຸນທັນ ແກ້ວອຸ່ນກອງ**

ຄະນະກັມມາທິການສຶກສາສົງ ສູນກາງ ອພສ



**ພຣະອາຈານ ແກ້ວພະຈັນ ຍິດປັນຍາ**

ຄະນະກັມມາທິການເຜີຍແຜ່ສີລະທັມ
ແລະ ປະຕິບັດກັມມະຖານ ສູນກາງ ອພສ



**ພຣະອາຈານ ມະຫາວຽງສັກ ເດດສີສະຫວັດ**

ຮອງຫົວໜ້າກັມມາທິການປົກຄອງສົງ
ສູນກາງ ອພສ



**ພຣະອາຈານ ຄຳປານ ແສນບຸດຕາລາດ**

ຄະນະກັມມາທິການສຶກສາສົງ ສູນກາງ ອພສ



ພຣະອາຈານ ຄຳມົນ ສຸທັມມະໂກສານ

ຄະນະຫ້ອງການບໍລິຫານງານ ສູນກາງ ອພສ



ພຣະອາຈານ ປອ. ບຸນຈັນ ຈັນທະສິດ

ຄະນະກັມມາທິການສຶກສາສົງ ສູນກາງ ອພສ



ພຣະອາຈານ ບຸນລ່ວມ ອິນສີຊຽງໃໝ່

ຄະນະກັມມາທິການປົກຄອງສົງ ສູນກາງ ອພສ



ພຣະອາຈານ ພິມມະລິນ ສີສຸລິນທອນ

ຮອງຫົວໜ້າຫ້ອງການບໍລິຫານງານ ສູນກາງ ອພສ



ພຣະອາຈານ ປອ. ມະຫາໂສພາ ສີບຸນເຮືອງ

ຄະນະກັມມາທິການເຜີຍແຜ່ສີລະທັມ

ແລະ ປະຕິບັດກັມມະຖານ ສູນກາງ ອພສ



ພຣະອາຈານ ຖະໜອມສັກ ທອງຄຳມີ

ຄະນະຫ້ອງການບໍລິຫານງານ ສູນກາງ ອພສ



ພຣະອາຈານ ປອ. ໄຊຊະນະ ບຸນທະວົງ

ຄະນະກັມມາທິການການຕ່າງປະເທດ ສູນກາງ ອພສ



ພຣະອາຈານ ລິນກຽດ ຄຳເພັດມີໄຊ

ຄະນະຫ້ອງການບໍລິຫານງານ ສູນກາງ ອພສ



ພຣະອາຈານ ປອ ອະນັນທະສັກ ພັດທະສິລາ

ຄະນະກັມມາທິການສຶກສາສົງ ສູນກາງ ອພສ



ພຣະອາຈານ ສຳນຽງ ບຸບຜາວົງ

ຄະນະຫ້ອງການບໍລິຫານງານ ສູນກາງ ອພສ



ພຣະອາຈານ ປອ. ໄພວັນ ມາລາວົງ

ຄະນະຫ້ອງການບໍລິຫານງານ ສູນກາງ ອພສ



ພຣະອາຈານ ອຸໄທ ສົວຽງໄຊ

ຄະນະກັມມາທິການປົກຄອງສົງ ສູນກາງ ອພສ



ພຣະອາຈານ ສອນເພັດ ວົງມະນີ

ຄະນະກັມມາທິການປົກຄອງສົງ ສູນກາງ ອພສ



ພຣະອາຈານ ບຸນທະວີ ມ່ວງຄຳສີ

ຄະນະກັມມາທິການສຶກສາສົງ ສູນກາງ ອພສ



ພຣະອາຈານ ສີສະຫວາດ ເພັດສະຫວັນ

ຄະນະກັມມາທິການສຶກສາສົງ ສູນກາງ ອພສ



ພຣະອາຈານ ບຸນມາ ທອມສິມບັດ

ຄະນະກັມມາທິການເຜີຍແຜ່ສິລະທັມ

ແລະ ປະຕິບັດກັມມະຖານ ສູນກາງ ອພສ



**พระອາຈານ ດາດສະດາ ຊາຕິກະເມທີ**

ຄະນະກັມມາທິການການຕ່າງປະເທດ ສູນກາງ ອພສ



**พระອາຈານ ອາໂນຊາ ໄມຕີຈິດ**

ຮອງຫົວໜ້າຫ້ອງການບໍລິຫານງານ ສູນກາງ ອພສ



**พระອາຈານ ມະຫາສິງຫາ ໄຊອຳພອນ**

ຄະນະກັມມາທິການການຕ່າງປະເທດ ສູນກາງ ອພສ



**พระອາຈານ ອາລຸນ ວົງພັກດີ**

ຄະນະກັມມາທິການສາທາຣະນູປະການ ສູນກາງ ອພສ



**พระອາຈານ ທອງລອນ ມະຫາວົງ**

ຄະນະກັມມາທິການປົກຄອງສົງ ສູນກາງ ອພສ



**พระອາຈານ ສິງໄຊ ທຳມະວົງ**

ຄະນະກັມມາທິການການຕ່າງປະເທດ ສູນກາງ ອພສ



**พระອາຈານ ສົມບູນ ວິລະວົງ**

ຄະນະກັມມາທິການສາທາຣະນູປະການ ສູນກາງ ອພສ



**พระອາຈານ ພີນ້ອຍ ຊາມິນຕີ**

ຄະນະກັມມາທິການປົກຄອງສົງ ສູນກາງ ອພສ



**ພຣະອາຈານ ລິນຈັນ ຂັນຕິສັກ**

ຄະນະກັມມາທິການສາທາຣະນູປະການ ສູນກາງ ອພສ



**ພຣະອາຈານ ລິນພອນ ແສງພະຈັນ**

ຄະນະກັມມາທິການສາທາຣະນູປະການ ສູນກາງ ອພສ



**ພຣະອາຈານ ດວງຈັນ ວົງພາສີ**

ປະທານ ອພສ ແຂວງຜົ້ງສາລີ



**ພຣະອາຈານ ບຸນທໍາ ບຸນວົງ**

ປະທານ ອພສ ແຂວງຫຼວງນໍ້າທາ



**ພຣະອາຈານ ຄໍາແພງເພັດ ຄູນປະເສີດ**

ທີ່ປຶກສາ ອພສ ແຂວງອຸດົມໄຊ



**ພຣະອາຈານ ຄໍາຜຸຍ ບຸບຜາພອນ**

ປະທານ ອພສ ແຂວງອຸດົມໄຊ



**ພຣະອາຈານ ວັດຊະຣະ ຂັດຕິຍະ**

ປະທານ ອພສ ແຂວງບໍ່ແກ້ວ



**ພຣະອາຈານ ປອ.ໄຊຍະພອນ ສີປັນຍາ**

ຮອງປະທານ ອພສ ແຂວງບໍ່ແກ້ວ



ພຣະອາຈານ ຈັນທະຣິນ ອຸດົມສຸກ

ຮອງປະທານ ອພສ ແຂວງຫຼວງພະບາງ



ພຣະອາຈານ ບົວວັນ ປຸນຍະສາໂຣ

ຮອງປະທານ ອພສ ແຂວງຫຼວງພະບາງ



ພຣະອາຈານ ບຸນທຽນ ປັນຍາແກ້ວ

ປະທານ ອພສ ແຂວງໄຊຍະບູລີ



ພຣະອາຈານ ສິມພອນ ຄໍາຈະເລີນ

ຮອງປະທານ ອພສ ແຂວງໄຊຍະບູລີ



ພຣະອາຈານ ລໍາພັນ ບຸນມີໄຊ

ປະທານ ອພສ ແຂວງຫົວພັນ



ພຣະອາຈານ ວັນສິມ ບຸດດາວົງ

ປະທານ ອພສ ແຂວງຊຽງຂວາງ



ພຣະອາຈານ ພິມມາ ເຮືອງສະໝອນ

ຮອງປະທານ ອພສ ແຂວງຊຽງຂວາງ



ພຣະອາຈານ ຕຸງ ຈັນທະວົງ

ປະທານ ອພສ ແຂວງວຽງຈັນ



**ພຣະອາຈານ ແຫຼ້ ລັດສະພີ**

ຮອງປະທານ ອພສ ແຂວງວຽງຈັນ



**ພຣະອາຈານ ຄຳປັນ ອິນທະວົງ**

ປະທານ ອພສ ແຂວງບໍລິຄຳໄຊ



**ພຣະອາຈານ ທວາງ ພິມມະວົງ**

ຮອງປະທານ ອພສ ແຂວງບໍລິຄຳໄຊ



**ພຣະອາຈານ ວັນເພັນ ໄຊຍະສອນ**

ປະທານ ອພສ ແຂວງຄຳມ່ວນ



**ພຣະອາຈານ ພອນທິບ ເພັງພິມມະຈັນ**

ຮອງປະທານ ອພສ ແຂວງຄຳມ່ວນ



**ພຣະອາຈານ ປານ ສຸພັນໂທ**

ປະທານ ອພສ ແຂວງສະຫວັນນະເຂດ



**ພຣະອາຈານ ແກ້ວອຸດອນ ໂຊຕິທຳໂມ**

ຮອງປະທານ ອພສ ແຂວງສະຫວັນນະເຂດ



**ພຣະອາຈານ ປອ. ຈັນດາ ເຄນສັກດາ**

ຮອງປະທານ ອພສ ແຂວງສະຫວັນນະເຂດ



**ພຣະອາຈານ ປອ. ສີປະເສີດ ໄຊຍະປັນຍາ**

ປະທານ ອພສ ແຂວງສາລະວັນ



**ພຣະອາຈານ ສູນທອນ ຈັນທະວົງໂສ**

ຮອງປະທານ ອພສ ແຂວງສາລະວັນ



**ພຣະອາຈານ ຮສ. ປອ. ຄຳຕູ້ ອິນທະວົງ**

ຮອງປະທານ ອພສ ແຂວງຈຳປາສັກ



**ພຣະອາຈານ ໂສພາ ປັດໂຊໂຕ**

ຮອງປະທານ ອພສ ແຂວງຈຳປາສັກ



**ພຣະອາຈານ ບຸນໂຖ້ຍ ໄຊຍະບຸດ**

ປະທານ ອພສ ແຂວງເຊກອງ



**ພຣະອາຈານ ສີສະຫວາດ ເທບວົງສາ**

ປະທານ ອພສ ແຂວງອັດຕະປື



**ພຣະອາຈານ ວຽງສັນ ມະນີຣັດ**

ຮອງປະທານ ອພສ ແຂວງອັດຕະປື



**ພຣະອາຈານ ສຸບິນ ແກ້ວປະເສີດ**

ປະທານ ອພສ ແຂວງໄຊສົມບູນ

# ຄະນະທີ່ປຶກສາ
# ສູນກາງອົງການພຸດທະສາສະໜາສັມພັນ ແຫ່ງ ສປປ ລາວ



ພຣະອາຈານໃຫຍ່ ມະຫານ້ອຍ ຊູເສນ



ພຣະອາຈານໃຫຍ່ ບຸນຍົດ ນິນທະໂຄດ



ພຣະອາຈານໃຫຍ່ ມະຫາບຸນມີ ພູມິນ



ພຣະອາຈານໃຫຍ່ ມະຫາວັນນາ ສຸຣິຍະວົງ



ພຣະອາຈານໃຫຍ່ ທອງໃສ ພັນທະວົງ



ພຣະອາຈານໃຫຍ່ ບຸນມີ ຍານະວິໂຣ



ພຣະອາຈານໃຫຍ່ ລິນພົງ ເມດຕາຈິດໂຕ



ພຣະອາຈານໃຫຍ່ ຄຳຄູນ ດວງອາໄພວົງ



ພຣະອາຈານໃຫຍ່ ບຸນທັນ ປຸນຍະກາໂມ



ພຣະອາຈານໃຫຍ່ ລິມບູນ ສິຣິປັນໂຍ



ພຣະອາຈານໃຫຍ່ ລິມສະໝຸກ ບຸດຕະລາດ



ພຣະອາຈານໃຫຍ່ ຄຳພັນ ຍານະວະໂຣ



ພຣະອາຈານໃຫຍ່ ບຸນທາຍ ຈັນທະໄພຈິດ



ພຣະອາຈານໃຫຍ່ ຊ້ອຍ ຈັນທະສຸກ



ພຣະອາຈານໃຫຍ່ ຄຳເງິນ ຄຳວົງ